ຊຸດນໍລະດົກວຽງຈັນ

## ຊີວະປະຫວັດ

# ພະເຈົ້າອະນຸວົງ



ໂດຍ ມະຫາ ສີລາ ວີຣະວົງສ໌

ຈັດພິມໂດຍ ສຳນັກພິມ ດອກເກດ
ເພື່ອປະກອບສ່ວນເຂົ້າໃນໂອກາດສະຫຼອງ
ວຽງຈັນ ເປັນນະຄອນຫຼວງ 450 ປີ
ຄ.ສ. 2010

ຊຸດນໍລະດົກວຽງຈັນ

# ຊີວະປະຫວັດ

# ພະເຈົ້າອະນຸວົງ

ໂດຍ ມະຫາ ສີລາ ວີຣະວົງສ໌

ສໍານັກພິມ ດອກເກດ
ເພື່ອປະກອບສ່ວນເຂົ້າໃນໂອກາດສະຫຼອງ
ວຽງຈັນ ເປັນນະຄອນຫຼວງ 450 ປີ
ຄ.ສ. 2010





*ຊຸດບໍລະດົກແຫ່ງວຽງຈັນ*

# ຊີວະປະຫວັດ ພະເຈົ້າອະນຸວົງ

**ໂດຍ ມະຫາ ສີລາ ວີຣະວົງສ໌**


ຮູບໜ້າປົກ: ຈິດຕະກຳຝາສິມ ວັດສີສະເກດ

ພາບຖ່າຍ ໂດຍ: ຈະເລີນໄຊ ພົມມະວົງສາ (ປີ 2004)

ຈັດພິມ ອອກແບບປົກ, ຈັດໜ້າ ໂດຍ ສຳນັກພິມ ດອກເກດ
ພິມຄັ້ງທີ 1, ຕຸລາ 2010 ນະຄອນຫຼວງວຽງຈັນ

ພິມທີ່: ພະໄຊ ກຣາບຟິກ, ນະຄອນຫຼວງວຽງຈັນ

ຕາມທະບຽນ:264 ພຈ 29092010

ຈຳນວນພິມ: 3,000 ຫົວ

ຈັດຈຳໜ່າຍໂດຍ ບໍລິສັດ ດອກເກດ ຈັດພິມຈຳກັດ

ໂທ: (+856-21) 263748, 020 2204895

website: www.dokked.com,

e-mail:dokked@veetoo.net

ຂໍ້ມູນທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດ

ສີລາ ວີຣະວົງສ໌, ມະຫາ

ຊີວະປະຫວັດ ພະເຈົ້າອະນຸວົງ / ສີລາ ວີຣະວົງສ໌, ມະຫາ. --ວຽງຈັນ: ດອກເກດ 2010

64 ໜ້າ: ພາບປະກອບ: 21 ຊມ

1. ລາວ --ປະຫວັດສາດ. 2. ພະເຈົ້າອະນຸວົງ. I. ຊື່ເລື່ອງ.

959.4 - dc21

ISBN 978-9932-07-012-1

สາລະບານ


I ຄຳນຳ ຂອງ ຜູ້ຈັດພິມ

VII ຄຳນິຍົມ ຂອງທ່ານ ບົວເງິນ ຊາພູວົງ

1 ຄຳອະທິບາຍຂອງຜູ້ຂຽນ

ພາກທີ I ຊີວະປະຫວັດຂອງ ພະເຈົ້າອະນຸວົງ

5 ຕອນທີ 1

- ເມື່ອຍັງຊົງເຍົາໄວ
- ໄດ້ຮັບສະຖາປະນາເປັນເຈົ້າມະຫາອຸປະຣາດ
- ເປັນແມ່ທັບໄປຮົບພະມ້າທາງເມືອງລະແທງ
- ເປັນແມ່ທັບໄປຮົບພະມ້າທີ່ເມືອງຊຽງແສນ

13 ຕອນທີ 2

- ຂຶ້ນສະເຫວີຍລາດ ແລະທຳການຟື້ນຟູປະເທດ
- ສຳເນົາຈົດໝາຍເຈົ້າພະຍາຈັກກຣີ ມາເຖິງພະເຈົ້າອະນຸ
- ການສ້າງສາຕ່າງໆ
- ຜາບກະບົດອ້າຍສາເກັດໂງ້ງ

22 ຕອນທີ 3

- ທຳການກູ້ອິດສະລະພາບ (ປົກສາການເສິກ)
- ໃຫ້ເຈົ້າອຸປະຣາດຕິດສະໄປກ້ຽວກ່ອມປະຊາຊົນພາກອີສານ
- ຍົກທັບອອກຈາກວຽງຈັນ
- ກວາດຄົວເມືອງນະຄອນລາຊະສີມາ
- ເຈົ້າອຸປະຣາດຕິດສະ ຄິດກະບົດຕໍ່ ເຈົ້າອະນຸ
- ພະຍາປະຫຼັດເມືອງໂຄລາດ ເຂົ້າອ່ອນຍອມ
- ນາງໂມເມຍພະຍາປະຫຼັດຕໍ່ສູ້
- ສົມເດັດພະເຈົ້າອະນຸ ໃຫ້ຖອຍທັບ
- ຕັ້ງຄ້າຍເທິງພູເຂົ້າສານ

31 ຕອນທີ 4

- ສະຫຍາມຈັດທັບອອກຕໍ່ສູ້
- ກອງທັບພະຍາຣາຊະສຸພາວະດີ ພົບກັບກອງທັບເຈົ້າໂຖງ ທີ່ເມືອງພິມາຍ
- ພະຍາຣາຊະສຸພາວະດີ ຕີຄ້າຍເມືອງຍະໂສທອນ
- ທັບສະຫຍາມ ຕີຄ້າຍເມືອງໜອງບົວລຳພູ
- ທັບເຈົ້າລາຊະວົງຖອຍ
- ກອງທັບສະຫຍາມຖືກປິດລ້ອມ
- ພະເຈົ້າອະນຸ ສະເດັດໜີຈາກວຽງຈັນຄັ້ງທີ 1
- ເຈົ້າອຸປະຣາດຕິດສະ ເຂົ້າຫາແມ່ທັບສະຫຍາມ

39 ຕອນທີ 5

- ລາຍງານແມ່ທັບໃຫຍ່ຂອງສະຫຍາມ ກ່ຽວກັບເລື່ອງຕີວຽງຈັນ

45 ຕອນທີ 6

- ທັບສະຫຍາມຕີນະຄອນຈຳປາສັກ
- ແມ່ທັບອານາມມີໜັງສືມາເຖິງ ພະຍາຣາຊະສຸພາວະດີ (ແມ່ທັບສະຫຍາມ)
- ພະຍາຊຽງສາຕີກອງທັບສະຫຍາມແຕກ
- ພະຍາຊຽງສາ ເຂົ້າຫາ ພະຍາຣາຊະສຸພາວະດີ

49 ຕອນທີ 7

- ພະເຈົ້າອະນຸກັບຄືນມາວຽງຈັນ
- ເຈົ້າລາຊະວົງ ນຳຕີທັບພະຍາຣາຊະສຸພາວະດີ
- ພະເຈົ້າອະນຸໜີຈາກວຽງຈັນຄັ້ງທີ 2

55 ຕອນທີ 8

ອະວະສານຂອງພະເຈົ້າອະນຸ

# ຄຳນຳ

ໃນອີກບໍ່ດົນ ຈະມີການສະຫຼອງ ນະຄອນຫຼວງວຽງຈັນ 450 ປີ ວຽງຈັນ ເຄີຍເປັນມາຢ່າງໃດ? ກ່ອນຈະມາເຖິງມື້ນີ້ ຊາວວຽງຈັນຜ່ານຜ່າຫຍັງມາແດ່? ເຖິງວ່າຍັງມີບູຮານສະຖານ ວັດວາອາຮາມ ເຫຼືອລອດຈາກສົງຄາມທຳລາຍ ເມື່ອຕົ້ນ ຄ.ສ. 1800 ຢູ່ແຕ່ພຽງເລັກນ້ອຍແຕ່ກໍມີວັນນະຄະດີ ກ່ຽວກັບວຽງຈັນໃນຍຸກນັ້ນ ພໍໃຫ້ໄດ້ອ່ານຢູ່ ພຽງແຕ່ວ່າຜົນງານເຫຼົ່ານີ້ ບໍ່ໄດ້ແຜ່ກະຈາຍກວ້າງຂວາງ. ຄວາມຢາກຮູ້ຢາກເຂົ້າໃຈ ຢາກໄດ້ຍິນເລື່ອງກ່ຽວກັບປະຫວັດສາດຂອງຊາດ ໂດຍສະເພາະວິລະກຳຂອງບັນພະບຸລຸດ ເປັນສິ່ງນຶ່ງທີ່ໄວໜຸ່ມ ທຸກຮຸ່ນຮ່ຳໄຮຮຽກຫາ. ນີ້ເປັນເຫດຜົນນຶ່ງ ທີ່ພາໃຫ້ມີການຈັດພິມເອກະສານຊຸດນີ້ ອອກມາຢ່າງໜ້ອຍພວກເຮົາກໍຈະໄດ້ຮຽນຮູ້ວ່າ ມໍລະດົກຕ່ອນນີ້ ກໍ່ຮ່າງສ້າງຕົວຂຶ້ນມາ ຢ່າງໃດແລະມີວິທີການໃດແດ່ ເພື່ອສືບທອດເສີມຄ່າໃຫ້ເປັນມູນມັງລ້ຳຄ່າ ສືບຕໍ່ໄປ.

ໃນຕົ້ນຊຸມປີ 2000 ຜູ້ອຳນວຍການ ຫໍສະໝຸດແຫ່ງຊາດໄດ້ຂໍຢືມປຶ້ມນ້ອຍຊື່ "ພຣະຣາຊປວັດ ຂອງສົມເດັດພຣະເຈົ້າອະນຸວົງສ໌" ທີ່ ຍາພໍ່ມະຫາສິລາວີຣະວົງສ໌ ຊຽນໄວ້ແຕ່ປີ 1969 ໄປຄົ້ນຄວ້າເມື່ອຄັ້ງເລີ່ມຕົ້ນ ໂຄງການສ້າງອະນຸສາວະລີໃຫ້ມະຫາກະສັດລາວ. ນັບແຕ່ນັ້ນມາກໍມີຄົນມາ ຂໍອັດສຳເນົາໄປອ່ານສຶກສາບໍ່ໄດ້ຂາດ ຈົນໃນທີ່ສຸດ ປຶ້ມນ້ອຍຫົວດັ່ງກ່າວກໍເສຍໄປ(ຍັງແຕ່ສຳເນົາ) ເນື່ອງຈາກໃນຕົ້ນສະບັບເດີມ ມີການໃຊ້ລາຊາສັບແລະສະກົດພິເສດເຊິ່ງຄົນຮຸ່ນໃໝ່ບໍ່ສາມາດອ່ານໄດ້ ໃນການຈັດພິມຄັ້ງນີ້ ພວກເຮົາຕັດຄຳລາຊາສັບອອກ ແລະສະກົດຄຳຕາມຫຼັກໄວຍາກອນປັດຈຸບັນ. ສ່ວນເນື້ອໃນ ແລະສຳນວນນັ້ນ ຍັງຄົງຮັກສາໄວ້ຕາມເດີມ ດ້ວຍບໍ່ສາມາຕື່ມເຕີມຂໍ້ມູນ ຫຼືດັດແປງ

ຢ່າງອື່ນ ແມ່ນແຕ່ໃນກໍລະນີມີຄວາມສົງໄສທີ່ພົບວ່າ ຂໍ້ຄວາມໃນສິລາເລກ ວັດສີສະເກດ ທີ່ກ່າວເຖິງການຫຼໍ່ພະພຸດທະຮູບທອງໃຫຍ່ 2 ອົງ (ແຖວທີ 9 ) ວ່າ ທໍ່ພະອົງແລະໜັກສີ່ແສນເກົ້າໝື່ນແປດພັນນັ້ນ ບໍ່ແຈ້ງຫົວໜ່ວຍນ້ຳໜັກໄວ້ຄື ກັບບ່ອນອື່ນໆ. ຕໍ່ບັນຫານີ້ ຂ້າພະເຈົ້າມີຄວາມເຫັນວ່າ ຫົວໜ່ວຍນ້ຳໜັກ ໜ້າຈະເປັນ "ບາດ" ເຊິ່ງມີມວນສານເທົ່າກັບ 15 ກຣາມ. ດັ່ງນີ້ ພຣະພຸດທະ ຮູບທອງອົງດັ່ງກ່າວ ກໍຈະມີນ້ຳໜັກ 498,000 X 15 ກຣາມ ທໍ່ກັບ 7,470,000 ກຣາມ ຫຼື 7,47 ໂຕນ. ສົມທຽບໃສ່ກັບພະເຈົ້າອົງຕື້ຍຸກລ້ານຊ້າງທົ່ວໆໄປ ເຊິ່ງ ມີນ້ຳໜັກ 10 ໂຕນ ຂຶ້ນເມືອ ກໍເຫັນວ່າພໍເປັນໄປໄດ້.

"ຊີວະປະຫວັດຂອງພະເຈົ້າອະນຸ" ເຫຼັ້ມນີ້ ເຖິງວ່າມີຂໍ້ມູນຈຳກັດ ທັງລາງອັນ ກໍອາດຈະເກົ່າແກ່ຫຼ້າຫຼັງໄປແດ່ ບໍ່ສອດຄ່ອງກັບຍຸກສະໄໝ ຫຼືຂໍ້ ມູນໃໝ່ທີ່ນັກຄົ້ນຄວ້າຮຸ່ນຕໍ່ມາສືບຫາມາໄດ້ ແຕ່ສິ່ງພື້ນຖານສ່ວນໃຫຍ່ ກໍຍັງ ຄົງຄ່າຢູ່ ໂດຍສະເພາະການຮູ້ເຫັນເປັນພິຍານໂດຍຜູ້ຮັບໂຮມ ຄືຍາພໍ່ ມະຫາ ສີລາ ທີ່ບອກວ່າໄດ້ເຫັນເສົາຂົວໄມ້ແກ່ນຫຼ້ອນຢູ່ທີ່ທ່າວັດອູບມຸງໃນປີ ຄ.ສ. 1932. ຄຳບອກເລົ່ານີ້ ກົງກັບຄຳສິລາຈາລຶກວັດສີສະເກດ ທີ່ຂຽນວ່າ "ພະເຈົ້າ ອະນຸ ສ້າງຂົວຂ້າມນ້ຳຂອງ ເມື່ອ ຄ.ສ.1810 ເພື່ອໃຫ້ປະຊາຊົນໄປມາສະດວກ ໃນເວລາທຳບຸນສະຫຼອງທໍ່ພະແກ້ວທີ່ບ້ານສີຊຽງໃໝ່...". ການໄດ້ເຫັນເສົາ ຂົວຢັ້ງຢືນວ່າຂົວນັ້ນເປັນຂົວໄມ້ແຕ່ຈະເປັນຮູບຊົງໃດກວ້າງໃຫຍ່ຂະໜາດໃດ ກໍບໍ່ສາມາດເດົາໄດ້. ການສ້າງຂົວໄມ້ຂ້າມແມ່ນ້ຳໃຫຍ່ໆ ຄົງເປັນສິ່ງນຶ່ງທີ່ກະ ສັດບູຮານ ໃນພາກພື້ນນິຍົມສ້າງກັນດັ່ງຈະເຫັນວ່າ ກະສັດພະມ້າ ຍຸກອັງວະ ເມື່ອສອງຮ້ອຍປີກ່ອນ ກໍໄດ້ສ້າງຂົວໄມ້ສັກຊື່ ອູເບັງ ຍາວກິໂລແມັດປາຍ ຢູ່ ເມືອງອະມອນປູລະ ໃນລັດມັນທະເລຍສະຫະພາບມຽນມ້າ ແລະຍັງນຳໃຊ້ ມາຮອດປັດຈຸບັນ. ສະນັ້ນ ເລື່ອງການສ້າງຂົວຂ້າມນ້ຳຂອງຂອງພະເຈົ້າ ອະນຸ

ສິລາເລກ ທີ່ວັດສີສະເກດ



...ພະອົງ ໑ ອົງໜັກ ໔ ແສນ ໙ ໝື່ນ ໘ ພັນ ສ້າງພະ...



ເຊິ່ງຄົນຮຸ່ນໃໝ່ຫຼາຍໆຄົນອາດຈະບໍ່ທັນ ເຄີຍໄດ້ຍິນມາກ່ອນນີ້ ຈຶ່ງຈະບໍ່ເປັນນິທານເລົ່າຂານກັນອີກຕໍ່ໄປ. ຂະນະທີ່ຂໍ້ມູນກ່ຽວກັບສະພາບການທາງການເມືອງໃນສະຫຍາມ ການເຂົ້າມາຂອງອັງກິດ ແລະຄວາມຂັດແຍ່ງ ພາຍໃນລາຊະສຳນັກສະຫຍາມເອງນັ້ນ ບໍ່ໄດ້ເວົ້າເຖິງຫຼາຍ ທັງໆທີ່ວ່າມັນ ອາດຈະອັນເປັນສາເຫດນຶ່ງທີ່ເຮັດໃຫ້ ພະເຈົ້າອະນຸຕົກເຂົ້າໃນ(ຫຼຸ້ງກົນ) ເລ່ກົນຂອງຝ່າຍສະຫຍາມໂດຍງ່າຍ ບໍ່ສົມກັບທີ່ພະອົງຄິດການວາງແຜນໄວ້ດົນ. ແຕ່ເລື່ອງນີ້ ພໍອະທິບາຍໄດ້ວ່າ ໃນຍຸກທີ່ຍາພໍ່ມະຫາສິລາ ຮິບໂຮມເອກະສານເພື່ອຂຽນຊີວະປະຫວັດພະເຈົ້າອະນຸນັ້ນ ເພິ່ນບໍ່ມີທາງເຂົ້າເຖິງແຫຼ່ງຂໍ້ມູນອື່ນໃດຂອງຕ່າງປະເທດ ເຊັ່ນຂອງຝຣັ່ງ ອັງກິດ ຫວຽດນາມ ຫຼື ແມ່ນແຕ່ລາງເອກະສານຂອງສະຫຍາມເອງ ກໍຫາບໍ່ໄດ້ງ່າຍໆ ດັ່ງນັ້ນ ທ່ານຜູ້ອ່ານທີ່ສົນໃຈຢາກເຂົ້າໃຈເລິກເຊິ່ງ ແລະກວ້າງຂວາງກວ່າກໍຫາອ່ານປຶ້ມທີ່ເປັນຜົນງານໃໝ່ໆທັງທີ່ເປັນຂອງນັກຄົ້ນຄວ້າລາວ ເຊັ່ນ ທ່ານ ເຜີຍພັນ ເຫຼົ່າສີວັດ, ທ່ານ ຫຸມພັນ ລັດຕະນະວົງ ແລະປະຫວັດສາດຊາດໄທ ສະໄໝລັດຕະນະໂກສິນ ກໍຈະຊ່ອຍໃຫ້ເຫັນສະພາບ ແລະເຂົ້າໃຈເລື່ອງທັງຫຼາຍດີຂຶ້ນ.

ປຶ້ມຫົວນີ້ຖືວ່າເປັນນຶ່ງໃນຊຸດ "ມໍລະດົກວຽງຈັນ" ຖັດຈາກ ສັງສິນໄຊ ຄຳກອນຄູ່ຮ້ອຍແກ້ວ ທີ່ຈັດພິມໄປແລ້ວ. ໃນໂອກາດຕໍ່ໄປ ບໍລິສັດດອກເກດ ຍັງຈະທະຍອຍຈັດພິມ "ມໍລະດົກ ປະເພດວັນນະຄະດີ" ຫາຍາກແນວນີ້ອອກມາອີກ ເພື່ອຢັ້ງຢືນເຖິງຄວາມຈະເລີນຮຸ່ງເຮືອງຂອງວຽງຈັນ ໃນເລື່ອງພາສາອັກສອນສາດ ເມື່ອຄັ້ງອະດີດຕະການ.

ຂໍຂອບໃຈ ທຸກໆທ່ານທີ່ໃຫ້ກຳລັງໃຈ ແລະ ສະໜັບສະໜູນການຈັດພິມປຶ້ມຫົວນີ້ອອກມາ, ອັນເປັນການຕື່ມເຕີມສີສັນແລະກິ່ນຫອມຮ່ວມ ໃຫ້ອຸທະ

ຍານອັກສອນແຫ່ງວຽງຈັນ ເປັນທີ່ສະໜິດສະເໜຫາ ແລະເປັນຂອງຂວັນລ້ຳຄ່າຂອງຄົນລາວທັງຊາດ.

ພິເສດຂໍຮູ້ບຸນຄຸນ ພະນະທ່ານ ບົວເງິນ ຊາພູວົງ ທີ່ໃຫ້ກຳລັງໃຈ ແລະສະໜັບສະໜຸນການຈັດພິມຄັ້ງນີ້.

ສຸດທ້າຍ ຂໍອຸທິດບຸນກຸສົນທັງໝົດທີ່ຈະອຸບັດຂຶ້ນທັງໃນປັດຈຸບັນນະການ ແລະໃນອະນາຄົດຕະການ ໃກ້ແກ່ດວງວິນຍານອັນປະເສີດຂອງວິລະຊົນບັນພະບຸລຸດລາວທັງຫຼາຍ ຜູ້ໄດ້ສ້າງຜົນງານເຫຼົ່ານີ້ດ້ວຍເຖີ້ນ.

ທີ່ວຽງຈັນ ສິງຫາ 2010

ນາງ ດວງເດືອນ ບຸນຍາວົງ

ຜູ້ອຳນວຍການ

ສຳນັກພິມດອກເກດ



ກົມມະລຽນ, ວັດສີສະເກດ

## ຄຳນິຍົມ

ການຂຸດຄົ້ນທາງບູຮານະຄະດີ ຢູ່ໃນເຂດເມືອງວຽງຈັນ(ເກົ່າ)ຂອງນັກວິຊາການກະຊວງ ຖະແຫຼງຂ່າວແລະວັດທະນະທຳແຫ່ງ ສ.ປ.ປ.ລາວ ກັບຊ່ຽວຊານສາກົນໃນຊຸມປີຫຼັງໆມານີ້ ນອກຈາກໄດ້ຢັ້ງຢືນເຖິງຄວາມມັ່ງມີຮຸ່ງເຮືອງຂອງນະຄອນຫຼວງແຫ່ງນີ້ແລ້ວ ຍັງໄດ້ນຳເອົາຄວາມປິ້ມປີຕິມາ ໃຫ້ແກ່ພວກເຮົາຢ່າງລົ້ນເຫຼືອນຳອີກ. ມາບັດນີ້ ຂ້າພະເຈົ້າກໍຍິ່ງຮູ້ສຶກພາກພູມໃຈຍິ່ງຂຶ້ນ ເມື່ອໄດ້ຮູ້ວ່າມີຜູ້ຮັກສາແລະສືບທອດມໍລະດົກອີກຮູບແບບນຶ່ງຂອງອະດີດເມືອງສີສະຕະນາຄະນະຫຸດ ລ້ານຊ້າງວຽງຈັນໄວ້ ພ້ອມທີ່ຈະນຳອອກມາເຜີຍແຜ່ແບ່ງປັນກັບຜູ້ອື່ນໆນັ້ນກໍຄື "ຊີວະປະຫວັດ ພະເຈົ້າອະນຸວົງ" ວິລະກະສັດອົງສຸດທ້າຍແຫ່ງວຽງຈັນ ຊຽນໂດຍນັກລາງ ອາຈານມະຫາສິລາ ວີຣະວົງສ໌ ນັກປາດລາວຜູ້ໄດ້ຝາກມໍລະດົກຫຼວງຫຼາຍແກ່ພວກເຮົາ.

ເຖິງວ່າ ຜົນງານເຫຼັ້ມນີ້ຈະມີອາຍຸລ່ວງເຂົ້າເກືອບເຄິ່ງສະຕະວັດແລ້ວ ແລະທ່ານຜູ້ຊຽນກໍ ໄດ້ລາໂລກນີ້ໄປເຖິງຊາວກວ່າປີແລ້ວ ແຕ່ເນື້ອໃນໃຈຄວາມສຳຄັນທີ່ທ່ານໄດ້ຫຍິບຍົກອອກມາຈາກສິລາເລກ ໜັງສືໃບລານ ແລະເອກະສານອື່ນໆ ບວກໃສ່ການໄດ້ປະສົບພົບເຫັນຊາກລະຫຼັກຫັກພັງ ຂອງວັດວາອາຮາມໃນວຽງຈັນເມື່ອຕົ້ນຊຸມປີ 1930 ດ້ວຍຕາຕົນເອງ ກະທັ້ງເສົາໄມ້ແກ່ນຂົວຂ້າມນ້ຳຂອງ ທີ່ພະເຈົ້າອະນຸວົງ ສ້າງຂຶ້ນໃນສະໄໝຂອງພະອົງນັ້ນກໍຫາກແມ່ນແກ່ນນຶ່ງ ໃນມວນອະນູອົງປະກອບແຫ່ງປະຫວັດສາດລາວ.

ການທີ່ບໍລິສັດດອກເກດການພິມຈຳກັດ ໄດ້ນຳເອົາເລື່ອງນີ້ ອອກມາສ້ອມແຊມປັບແຕ່ງ ໃຫ້ອ່ານສະດວກຂຶ້ນໂດຍຕັດທອນຄຳລາຊາສັບອອກ ທັງປະກອບຮູບພາບເກົ່າໃສ່ຕື່ມນັ້ນຈະຊ່ວຍ ຜູ້ອ່ານທີ່ເກີດໃໝ່ໃຫຍ່ລຸນໃຫ້ສາ

ມາດຄືດວາດພາບວຽງຈັນເມືອງຮ້າງໃນອະດີດໄດ້. ກວ່າຈະເປັນຄືໃນທຸກວັນນີ້ ວຽງຈັນໄດ້ເດີນຜ່ານເສັ້ນທາງອັນລຳບາກມາຢ່າງໃດ ຊາວເມືອງໄດ້ປະສົບພົບພໍ້ກັບຄວາມມ່ວນຊື່ນທຸກທົນທໍລະມານເທົ່າໃດ. ສະພາບບ້ານແຕກເມືອງເພສິງຄາມຣຸກຮານຄວາມຂັດແຍ່ງ ລະຫວ່າງເຈົ້າປົກຄອງເຂດແຄວັນ... ທັງໝົດເຫຼົ່ານີ້ ຖືກຕ່ຳສານເປັນແຜ່ນແພສົມທົບເຂົ້າກັບມໍລະດົກທາງວັດຖຸອື່ນໆເຊັ່ນ ຫໍພະແກ້ວ ພະທາດຫຼວງ ວັດສີສະເກດ ພະອົງຕື້...ໂຮມເຂົ້າກັນ ແລ້ວກໍເປັນມໍລະດົກຕ່ອນນຶ່ງຂອງວຽງຈັນ.

ຜ່ານມາຮອດປັດຈຸບັນ ນັກຄົ້ນຄວ້າຕ່າງປະເທດລາງຄົນມີຄວາມເຫັນວ່າ ຕຳນານຂຸນບູລົມ(ຂອງລ້ານຊ້າງ)ບໍ່ໜ້າເຊື່ອຖື ເພາະຂຽນແຕ່ງຂຶ້ນຫຼັງເຫດການ ມີລັກສະນະເປັນນິທານຫຼາຍ ກວ່າເປັນບັນທຶກປະຫວັດສາດ ຯລຯ. ເຊັ່ນດຽວກັນ ບົດບັນທຶກຂອງທ່ານມະຫາສີລາ ກ່ຽວກັບເສົາ ໄມ້ຂົວທີ່ທ່າວັດອູບມຸງເມືອງສີໂຄດຕະບອງ ທີ່ໄດ້ເຫັນໃນຕົ້ນປີ 1930 ນັ້ນກໍອາດຈະກາຍເປັນຕຳນານກ່າວຂານຜ່ານຫູໄປລ້າໆໃນມື້ໃດມື້ນຶ່ງ ເພາະຂຽນຂຶ້ນລຸນຫຼັງເຫດການຕັ້ງ 100 ກວ່າປີເຊັ່ນກັນ. ຖ້າພວກເຮົາບໍ່ຍົກຂຶ້ນມາ ບໍ່ຢັ້ງຢືນຄວາມເຊື່ອໝັ້ນໃນຄຳບອກເລົ່າຂອງທ່ານກໍເທົ່າກັບວ່າພວກເຮົາໄດ້ປະຖິ້ມຂໍ້ມູນປະຫວັດສາດຕອນນີ້ ໃຫ້ເວລາກືນກິນ ດັບສູນຄຸນຄ່າຂອງມັນ. ຕໍ່ໄປພາຍໜ້າອີກຫຼາຍຮ້ອຍປີ ເລື່ອງການສ້າງຂົວຂອງເຈົ້າອະນຸວົງ ກໍອາດກາຍເປັນຕຳນານເລື່ອງນຶ່ງໄປ.

ໃນຂະນະທີ່ທົ່ວພັກທົ່ວປວງຊົນພວມຟົດຟື້ນກຽມສະເຫຼີມສະຫຼອງນະຄອນຫຼວງວຽງຈັນຄົບຮອບ 450 ປີ ໃນປີ 2010 ທີ່ຈະມາເຖິງນີ້ ການຈັດພິມຊີວະປະຫວັດພະເຈົ້າອະນຸວົງ ຈຶ່ງສອດຄ່ອງກັບຄວາມຕ້ອງການຂອງພວກເຮົາ. ວິລະກຳອັນກ້າຫານຂອງພະອົງ ບໍ່ພຽງແຕ່ເປັນແວ່ນແຍງ ໃຫ້ອະນຸ

ຊົນຮຸ່ນຫຼັງເທົ່ານັ້ນ ແຕ່ຍັງເປັນຍອດຕົວຢ່າງໃນເລື່ອງແນວຄິດຮັກຊາດແພງເຊື້ອແລະການສ້າງຄວາມສາມັກຄີພາຍໃນຊາດນຳອີກ. ການຈັດພິມປື້ມຫົວນີ້ສະແດງເຖິງຄວາມພ້ອມໃຈ ຂອງພາກເອກະຊົນ ຕໍ່ແນວທາງນະໂຍບາຍຂອງພັກແລະລັດ ຈຶ່ງນັບເປັນແບບເປັນຢ່າງອັນດີ ທີ່ຄວນສົ່ງເສີມສືບຕໍ່ໄປ.

ຂ້າພະເຈົ້າ ໃນຖານະນັກອ່ານຄົນນຶ່ງ ທັງເປັນຜູ່ຮັບຜິດຊອບວຽກງານວັດທະນະທຳດ້ານຈິດໃຈ ກໍຄືດ້ານສະຕິປັນຍາ ຂໍສະແດງຄວາມຊົມເຊີຍບໍລິສັດດອກເກດ ທີ່ນຳເອົາເອກະສານເລື່ອງ ນີ້ມາພິມຈຳໜ່າຍອີກ. ການຮູ້ຈັກອະດີດ ອາດຈະແມ່ນການຮູ້ຈັກເສັ້ນທາງເວັ້ນຈາກການທຳຜິດພາດຊ້ຳເກົ່າ. ຂ້າພະເຈົ້າເຊື່ອວ່ານີ້ແມ່ນເນື້ອໃນໃຈຄວາມອັນແທ້ຈິງ ທີ່ທ່ານມະຫາສິລາ ວີຣະວົງສ໌ ຢາກສື່ອອກມາໃຫ້ລູກຫຼານລາວທຸກຄົນຮັບຮູ້ແລະຈົດຈຳໄວ້ນັ້ນເອງ.

*ນະຄອນຫຼວງວຽງຈັນ 10 ຕຸລາ 2010*

***ລັດຖະມົນຊ່ອຍກະຊວງຖະແຫຼງຂ່າວ ແລະວັດທະນະທຳ***
***ປະທານອະນຸກຳມະການ ວັດທະນະທຳ ແລະໂຄສະນາປະຊາສຳພັນ***
***ການສະຫຼອງວຽງຈັນ 450 ປີ***

ບົວເງິນ ຊາພູວົງ



*ຈິດຕະກຳພາຍໃນຝາສິມ ວັດສີສະເກດ*
*ພາບຖ່າຍ ໂດຍ ຈະເລີນໄຊ ພົມມະວົງສາ ປີ 2004*

# ຄຳອະທິບາຍຂອງຜູ້ຂຽນ

ຊີວະປະຫວັດຂອງພະເຈົ້າອະນຸວົງນີ້ ຂ້າພະເຈົ້າໄດ້ເກັບທ້ອນໂຮມຂໍ້ຄວາມ ອັນມີຢູ່ໃນໜັງສືເອກະສານ ແລະຫຼັກຖານຕ່າງໆຫຼາຍສະບັບ ມາຮຽບຮຽງໃຫ້ຕິດຕໍ່ກັນ. ບັນດາເອກະສານຕ່າງໆທີ່ມີເລື່ອງກ່ຽວຂ້ອງ ຫຼືກ່າວເຖິງພະເຈົ້າອະນຸວົງ ເຊິ່ງຂ້າພະເຈົ້າຊອກຄົ້ນໄດ້ນັ້ນມີ:

1. ສິລາເລກຢູ່ຝາຜະໜັງຜັກຕູກົມມະລຽນສິມ ວັດສີສະເກດ ເຊິ່ງພະເຈົ້າອະນຸໄດ້ທົງໃຫ້ຈາລຶກໄວ້ໃນຄາວສ້າງວັດນີ້ເມື່ອປີຈຸລະສັກກະລາດ 1180 (ຄ.ສ.1818) ວ່າດ້ວຍການສ້າງວັດ ສະຕະສະຫັດສາລາມ (ວັດແສນ ຄື ວັດສີສະເກດ ນັ້ນເອງ).

2. ສິລາເລກຢູ່ວັດຊ້າງເຜືອກ ບ້ານສີຊຽງໃໝ່ ທີ່ຈາລຶກໄວ້ແຕ່ປີຈຸລະສັກກະລາດ 1172 (ຄ.ສ.1810) ກ່ຽວເລື່ອງສ້າງຫໍພະແກ້ວແລະສ້າງຂົວຂ້າມນ້ຳຂອງ ບ່ອນຊື່ວັດຊ້າງເຜືອກກັບທ່າ ວັດອູບມຸງ.

3. ພົງສາວະດານຫຍໍ້ ຫຼື ຈົດໝາຍເຫດຫຍໍ້ວຽງຈັນ ເຊິ່ງຜູ້ຂຽນມີນາມວ່າ ອົງເປັນເຈົ້າຂັດຕິຍະ ຢູ່ເມືອງໜອງຄາຍ ຂຽນໄວ້ແຕ່ປີຈຸລະສັກກະລາດ 1255 (ຄ.ສ.1893).

4. ພົງສາວະດານ ເມືອງລ້ານຊ້າງ ຫຼວງພະບາງ

5. ພະລາຊະພົງສາວະດານ ກຸງລັດຕະນະໂກສິນ ລັດຊະການທີ 1

6. ພະລາຊະພົງສາວະດານ ກຸງລັດຕະນະໂກສິນ ລັດຊະການທີ 3 (ພະນັ່ງເກົ້າ)

ເອກະສານສະບັບທີ 6 ຄື ພະລາຊະພົງສາວະດານ ລັດຊະການທີ 3 ນີ້ເປັນເອກະສານທີ່ສຳຄັນຍິ່ງ ເພາະມີເລື່ອງທີ່ກ່ຽວກັບພະເຈົ້າອະນຸຕອນທຳ

ສົງຄາມກັບສະຫຍາມທັງໝົດ. ໜັງສືສະບັບນີ້ແມ່ນ ເຈົ້າພະຍາທິພາກອນວົງ ເປັນຜູ້ບັນທຶກໄວ້ ເຈົ້າພະຍາທິພາກອນວົງ ນີ້ເປັນຂ້າລາຊະການຊັ້ນຜູ້ໃຫຍ່ ໃນພະລາຊະສຳນັກກະສັດສະຫຍາມ ລັດຊະການທີ 3 ແລະເປັນຄົນມີອາຍຸຮຸ່ນ ຣາວຄາວດຽວກັນກັບສົມເດັດພະເຈົ້າອະນຸ ຫຼືຈະອ່ອນກວ່າສົມເດັດພະເຈົ້າ ອະນຸແດ່ຈັກໜ່ອຍ ແຕ່ຫາກໄດ້ທຳລາຊະການຢູ່ໃນສະໄໝດຽວກັນແລະຮ່ວມ ກັນດ້ວຍ ດັ່ງນັ້ນ ເຈົ້າພະຍາທິພາກອນວົງ ຈຶ່ງໄດ້ຮູ້ເຫັນເຫດການຕອນພະເຈົ້າ ອະນຸທຳສົງຄາມກັບສະຫຍາມໂດຍຕະຫຼອດ ແລະໄດ້ບັນທຶກເຫດການນັ້ນໄວ້ ຈຶ່ງເຊື່ອແນ່ວ່າ ຂໍ້ຄວາມທີ່ເຈົ້າພະຍາທິພາກອນວົງກ່າວໄວ້ນັ້ນ ຄົງຈະເປັນ ຄວາມຈິງ ແລະໜັງສືບັນທຶກເຫດການທີ່ ເຈົ້າພະຍາທິພາກອນວົງ ຊຽນໄວ້ນີ້ ຫໍສະໝຸດແຫ່ງຊາດສະຫຍາມ ໄດ້ຈັດພິມຂຶ້ນເມື່ອປີ ພ.ສ.2477 (ຄ.ສ.1934) ຮຽກຊື່ວ່າ "ພະລາຊະພົງສາວະດານກຸງລັດຕະນະໂກສິນ ລັດຊະການທີ 3."

ສະນັ້ນ ຫາກຈະມີການກະທົບກະເທືອນ ຫຼື ຜິດພາດປະການໃດ ຂ້າພະເຈົ້າຂໍອະໄພ ແລະຂໍຍົກໃຫ້ເປັນພາລະຂອງຫໍສະໝຸດແຫ່ງຊາດສະຫຍາມ ເຊິ່ງໄດ້ພິມໜັງສືເລື່ອງນີ້ອອກແຜ່ຜາຍແລ້ວ.

24/VII
ຫ້າມຈຳໜ່າຍ

ວຽງຈັນ ວັນທີ 18 ກັນຍາ 1969

ສິລາ ວີຣະວົງສ໌

# ຊີວະປະຫວັດ

# ສົມເດັດພະເຈົ້າອະນຸວົງ



ຕອນ 1

# ເມື່ອຍັງທັງເຍົາໄວ

ສົມເດັດພະເຈົ້າອະນຸວົງ ກະສັດນະຄອນວຽງຈັນອົງສຸດທ້າຍແຫ່ງລາຊະວົງລ້ານຊ້າງວຽງຈັນ ເປັນກະສັດທີ່ມີພະນາມລືຊາຜາກົດ ມີຄົນຮູ້ຈັກພະນາມຂອງພະອົງ ຫຼາຍທີ່ສຸດພະອົງນຶ່ງ ເນື່ອງຈາກການທີ່ພະອົງໄດ້ຄິດທຳການກູ້ອິດສະລະພາບຂອງລາວ ໃນສະໄໝຂອງພະອົງ ແຕ່ການທຳການກູ້ອິດສະລະພາບໃນຄາວນັ້ນ ບໍ່ເປັນຜົນສຳເລັດຕາມພະປະສົງ ພະອົງຈຶ່ງຖືກປະນາມຈາກຝ່າຍກົງກັນຂ້າມວ່າ "ເປັນກະບົດ" ແລະຍ້ອນເຫດນີ້ອີກວົງກະສັດລ້ານຊ້າງວຽງຈັນ ຈຶ່ງຖືກທຳລາຍແລະສູນສຽງມາຈົນເຖິງທຸກວັນນີ້. ເຖິງດັ່ງນັ້ນກໍດີ ພະນາມຂອງພະອົງ ກໍຍັງມີຄົນສ່ວນຫຼາຍກ່າວເຖິງຢູ່ຕະຫຼອດມາ ແຕ່ວ່າເຫດການທີ່ພະອົງໄດ້ເຮັດໃນຄາວນັ້ນ ແລະເຜົ່າພົງວົງສາຂອງພະອົງ ຍັງບໍ່ຄ່ອຍມີຄົນຮູ້ຈັກກວ້າງຂວາງພໍທີ່ໃດ ຂ້າພະເຈົ້າຈຶ່ງໄດ້ຊອກຄົ້ນຫາປະຫວັດຂອງພະອົງມາຂຽນໄວ້ ຕາມຫຼັກຖານເອກະສານຕ່າງໆ ດັ່ງກ່າວມາແລ້ວນັ້ນ ເພື່ອເປັນແນວທາງຄົ້ນຄວ້າຂອງນັກສຶກສາປະຫວັດສາດລາວຕໍ່ໄປ.

ສົມເດັດພະເຈົ້າອະນຸວົງ ເຊິ່ງຄົນທັງຫຼາຍຮຽກພະອົງວ່າພະເຈົ້າອະນຸຫຼືເຈົ້າອະນຸນັ້ນ ມີພະນາມຜາກົດຢູ່ໃນສິລາເລກວັດຊ້າງເຜືອກເມືອງສີຊຽງໃໝ່ຢູ່ໃນລາຊະອານາຈັກໄທປັດຈຸບັນ ແລະຢູ່ໃນສິລາເລກວັດສີສະເກດ ນະຄອນຫຼວງວຽງຈັນວ່າດັ່ງນີ້: (ເບິ່ງຮູບ ສິລາເລກ)

"ສົມເດັຈບໍຣົມບໍພິຕຣ ພຣະມະຫາທັມມິກະສິທະພາບຸຕຣະຣາຊະທິຣາຊ

ມະຫາຈັກກະພັດຕິພູມິນທຣະປະຕົລສະກົລໄຕຍພູວະນາຖຊາຕຍູພະໂຕ ວິສຸທທະມະກຸຕສັມພາລາພິບູລອຕຸລຍະໂພທິສັຕຣຂັຕຕິຍະພຸທທັງກູຣ ໂສຕຣນັຄຣາມຫາໂສພັສສັນໂຕຄັຊ ລັກຂະຣັຕຖາຣາຊາບຸຣິສຣິທັມມາທິຣາຊບໍຣົມບາຖບໍຣົມບໍພິຕຣ" ດັ່ງນີ້.

ພະເຈົ້າອະນຸວົງ ເປັນພະໂອລົດອົງຫຼ້າຂອງສົມເດັດພະເຈົ້າສິຣິບຸນຍະສານ ພະເຈົ້າແຜ່ນດິນເອກະລາດລ້ານຊ້າງວຽງຈັນອົງສຸດທ້າຍ ຄືລຸນຫຼັງຈາກພະເຈົ້າສິຣິບຸນຍະສານມາແລ້ວ ກະສັດວຽງຈັນຕະຫຼອດຫຼວງພະບາງແລະຈຳປາສັກ ເປັນກະສັດຢູ່ພາຍໃຕ້ການປົກຄອງ ຂອງລາຊະອານາຈັກສະຫຍາມ ຈຶ່ງນັບວ່າເປັນກະສັດປະເທດສະລາດ ບໍ່ແມ່ນກະສັດເອກະລາດຄືແຕ່ກ່ອນ.

ພະເຈົ້າອະນຸທົງສົມພົບເມື່ອປີກຸນ ຈຸລະສັກກະລາດ 1129 (ກົງກັບ ຄ.ສ.1767) ທີ່ມະຫາລາຊະວັງນະຄອນຫຼວງວຽງຈັນ ຕາມພະລາຊະພົງສາວະດານລ້ານຊ້າງວຽງຈັນມີກ່າວໄດ້ດັ່ງນີ້:

ພະເຈົ້າສິຣິບຸນຍະສານ ໂອລົດຂອງພະເຈົ້າໄຊຍະເຊດຖາທິລາດ ທີສອງ (ຄື ພະໄຊອົງເວ້) ໄດ້ຂຶ້ນສະເຫວີຍລາດໃນນະຄອນວຽງຈັນ ເມື່ອປີ ຄ.ສ. 1730ຈົນມາເຖິງປີຄ.ສ.1778ວຽງຈັນຈຶ່ງໄດ້ເສຍເອກະລາດໃຫ້ແກ່ສະຫຍາມ. ໃນປີທີ່ເກີດຮົບກັບສະຫຍາມນັ້ນ ພະເຈົ້າສິຣິບຸນຍະສານມີໂອລົດ ແລະທິດາ ທີ່ມີພະນາມຜາກົດຕາມພົງສາວະດານ ຄື: 1.ເຈົ້ານັນທະເສນ, 2.ເຈົ້າອິນທະວົງ 3.ເຈົ້ານາງແກ້ວຍອດຟ້າກັນລະຍານີສີກະສັດ, 4.ເຈົ້າພົມມະວົງ ແລະ 5.ເຈົ້າອະນຸວົງ. ໃນຂະນະທີ່ເກີດຮົບກັບສະຫຍາມ ໃນປີ ຄ.ສ 1779 ນັ້ນ ສົມເດັດພະເຈົ້າສິຣິບຸນຍະສານ ໄດ້ທົງມອບພາລະການສົງຄາມໃຫ້ເຈົ້ານັນທະເສນໂອລົດອົງໃຫຍ່ເປັນຜູ້ປ້ອງກັນນະຄອນ. ເມື່ອຮົບກັນມາໄດ້ 4 ເດືອນປາຍ ສົມເດັດພະເຈົ້າສິຣິບຸນຍະສານ ເຫັນວ່າຈະຕ້ານທານໄວ້ບໍ່ໄດ້ ຈຶ່ງລົງເຮືອໜີໄປເມືອງຄຳເກີດໃນເວລາກາງຄືນ ພ້ອມດ້ວຍໂອລົດອົງນ້ອຍ ຄື

ເຈົ້າອິນທະວົງເຈົ້າພົມມະວົງ ແລະຄົນສະໜິດຫຼາຍຄົນ. ເຈົ້ານັນທະເສນ ຮູ້ວ່າພະລາຊະບິດາໜີໄປແລ້ວກໍເສຍພະໄທຈຶ່ງຍອມໄຂຜັກຕູເມືອງ ອ່ອນນ້ອມຕໍ່ກອງທັບສະຫຍາມ ສະຫຍາມຈຶ່ງເຂົ້າວຽງຈັນໄດ້ ໃນເດືອນ 10 ແຮມ 3 ຄ່ຳ ປີກຸນ ຄ.ສ. 1778 ແລ້ວກອງທັບສະຫຍາມໄດ້ຈັບເອົາ ເຈົ້ານັນທະເສນ, ເຈົ້າອຸປະຮາດກອງໜ້າແລະພະນາງແກ້ວຍອດຟ້າກັນລະຍານີສີກະສັດພະລາຊະທິດາຂອງພະເຈົ້າສິຣິບຸນຍະສານກັບເຈົ້າອະນຸວົງຜູ້ນ້ອງຫຼ້າ ເຊິ່ງມີພະຊົນໄດ້ພຽງ 11 ປີພ້ອມດ້ວຍພະຍາຕິວົງອື່ນໆລົງໄປກຸງເທບ ແລະຕັ້ງໃຫ້ ພະຍາສຸໂພເປັນຜູ້ຮັກສາພະນະຄອນວຽງຈັນ ແລ້ວກອງທັບສະຫຍາມກໍເລີກກັບຄືນໄປ. ເມື່ອກອງທັບສະຫຍາມເລີກກັບຄືນໄປແລ້ວພະເຈົ້າສິຣິບຸນຍະສານ ຈຶ່ງໄດ້ກັບຄືນມາວຽງຈັນ ແລະຈັບພະຍາສຸໂພຜູ້ຮັກສາພະນະຄອນ ຂ້າເສຍແລ້ວກໍຂຶ້ນສະເຫວີຍເມືອງ ຕໍ່ມາໄດ້ 2 ປີ ກໍສະຫວັນນະຄົດ.

ຝ່າຍພະເຈົ້າແຜ່ນດິນສະຫຍາມ ເມື່ອໄດ້ຊາບຂ່າວວ່າພະເຈົ້າສິຣິບຸນຍະສານສະຫວັນນະຄົດແລ້ວ ຈຶ່ງສົ່ງເຈົ້ານັນທະເສນຄືນມາເປັນພະເຈົ້າແຜ່ນດິນວຽງຈັນ ໃນນາມເປັນປະເທດສະລາດຂອງສະຫຍາມໃນປີ ຄ.ສ. 1781 ແລະພະເຈົ້ານັນທະເສນ ຈຶ່ງໄດ້ທັງສະຖາປະນາ ເຈົ້າອິນທະວົງຂຶ້ນເປັນເຈົ້າອຸປະຮາດ ສ່ວນເຈົ້າພົມມະວົງແລະເຈົ້າອະນຸວົງນັ້ນ ຍັງຄົງຢູ່ໃນກຸງເທບ ດ້ວຍຄວາມອຸປະກາລະຂອງພະເຈົ້າແຜ່ນດິນສະຫຍາມ. ຕໍ່ມາເຖິງປີ ຄ.ສ.1794 ພະເຈົ້ານັນທະເສນ ຖືກພະເຈົ້າອະນຸລຸດທະແຫ່ງນະຄອນຫຼວງພະບາງ ຟ້ອງຕໍ່ພະເຈົ້າແຜ່ນດິນສະຫຍາມວ່າສົມຄົບກັບພະບໍຣົມຣາຊາ ເຈົ້າເມືອງນະຄອນພະນົມ ເປັນກະບົດຕໍ່ສະຫຍາມ, ພະເຈົ້ານັນທະເສນຈຶ່ງໄດ້ລົງໄປແກ້ຄະດີຢູ່ກຸງເທບແລ້ວເລີຍສະເດັດສຸລະຄົດ(ຕາຍ) ຢູ່ໃນກຸງເທບ ເມື່ອປີ ຄ.ສ. 1794 ແລ້ວຝ່າຍສະຫຍາມຈຶ່ງໄດ້ສົ່ງເຈົ້າອິນທະວົງ ຂຶ້ນມາເປັນເຈົ້າແຜ່ນດິນນະຄອນວຽງຈັນໃນປີນັ້ນເອງ.

## ເຈົ້າອະນຸໄດ້ຮັບສະຖາປະນາເປັນອຸປະຮາດ

ສົມເດັດພະເຈົ້າອະນຸວົງໄດ້ລົງໄປຢູ່ກຸງເທບ ແຕ່ພະຊົນໄດ້ 11 ປີ ແລະ ໄດ້ທົງສຶກສາວິຊາການຕ່າງໆຮ່ວມກັບບັນດາພະລາຊະໂອລົດ ພະລາຊະນັດດາ ຂອງພະເຈົ້າແຜ່ນດິນສະຫຍາມໃນພະບໍລົມມະຫາລາຊະວັງ ຕະຫຼອດມາຈົນພະຊົນມາຍຸໄດ້ 27 ປີ.

ເນື່ອງຈາກພະອົງໄດ້ປະທັບຢູ່ໃນກຸງເທບເປັນເວລາເຫິງນານເຖິງ 16 ປີ ພະອົງຈຶ່ງໄດ້ຮູ້ເຫັນແບບຢ່າງຂະນົບທຳນຽມແລະຄຸ້ນເຄີຍຮັກແພງກັບບັນດາເຈົ້ານາຍເຊື້ອວົງກະສັດສະຫຍາມເປັນອັນມາກ ໂດຍສະເພາະຢ່າງຍິ່ງພະເຈົ້າແຜ່ນດິນສະຫຍາມລັດຊະການທີ 2 ເຊິ່ງທົງພະນາມວ່າພະພຸດທະເລີດຫຼ້ານະພາໄລ ຕັ້ງແຕ່ຍັງທົງພະເຍົາໄວມານຳກັນ ໃນເລື່ອງນີ້ທ່ານຜູ້ອ່ານຈະໄດ້ເຫັນສຳເນົາຈົດໝາຍທີ່ພະເຈົ້າແຜ່ນດິນສະຫຍາມລັດຊະການທີ 2 ໃຫ້ເຈົ້າພະຍາຈັກກຣີຂຽນມາເຖິງພະເຈົ້າອະນຸ ທີ່ຈະກ່າວຂ້າງໜ້າ. ເມື່ອເຈົ້າອິນທະວົງໄດ້ມາເປັນເຈົ້າແຜ່ນດິນວຽງຈັນແລ້ວ ພະອົງຈຶ່ງທົງສະຖາປະນາເຈົ້າອະນຸວົງຜູ້ນ້ອງຂຶ້ນເປັນເຈົ້າມະຫາອຸປະຮາດ ຕາມພະລາຊະປະເພນີສືບຕໍ່ມາ.

## ເປັນແມ່ທັບ ໄປຮົບພະມ້າທາງເມືອງລະແຫງ

ໃນປີ ຄ.ສ 1798 ທາງປະເທດສະຫຍາມໄດ້ຊາບວ່າ ພວກພະມ້າຈະຍົກທັບລົງມາຕີເອົາເມືອງຊຽງໃໝ່ ແລະຫົວເມືອງລາວທັງຫຼາຍ ທາງຕາເວັນອອກແມ່ນ້ຳຂອງ ພະເຈົ້າແຜ່ນດິນສະຫຍາມຈຶ່ງສັ່ງໃຫ້ຫົວເມືອງຝ່າຍເໜືອ

ຍົກທັບໄປປ້ອງກັນເມືອງຊຽງໃໝ່ ແລະໄປລັດດ່ານທາງພະມ້າ ຈະຍົກເຂົ້າມາ. ດັ່ງນັ້ນ ສົມເດັດພະເຈົ້າອິນທະວົງຈຶ່ງທົງແຕ່ງຕັ້ງໃຫ້ເຈົ້າມະຫາອຸປະຮາດອະນຸ ເປັນແມ່ທັບລາວ ຄຸມທະຫານລາວໄປຕັ້ງຄ້າຍຮັບພະມ້າ ຢູ່ເມືອງລະແຫງ. ຝ່າຍພວກພະມ້າ ຍົກພົນລົງມາຕັ້ງຢູ່ເມືອງຕອງອູ ຕະຫຼອດລະດູຝົນກໍບໍ່ຍົກລົງມາ ແຕ່ພໍໝົດລະດູຝົນແລ້ວກໍຍົກຖອຍຄືນໄປ ຈຶ່ງບໍ່ໄດ້ມີການສູ້ຮົບກັນ ໃນຄາວນັ້ນ ຝ່າຍພະເຈົ້າອະນຸຄັນໄດ້ຊາບວ່າພະມ້າຖອຍຄືນໄປແລ້ວກໍເລີກທັບກັບມານະຄອນວຽງຈັນ.

## ເປັນແມ່ທັບໄປຮົບພະມ້າທີ່ເມືອງຊຽງແສນ

ເຖິງປີ ຄ.ສ. 1802 ພວກພະມ້າຍົກທັບລົງມາຕີເອົາເມືອງຊຽງແສນໄດ້ແລ້ວເລີຍຍົກລົງມາຕັ້ງຄ້າຍລ້ອມເມືອງຊຽງໃໝ່ໄວ້ເຖິງ 7 ກອງ ແຕ່ຈະເຂົ້າຫັກເອົາເມືອງຍັງບໍ່ໄດ້ດ້ວຍວ່າເຈົ້າກາວິລະເຈົ້ານະຄອນຊຽງໃໝ່ໄດ້ທຳ ການຮັກສາເມືອງໄວ້ຢ່າງແຂງແຮງ ແລ້ວມີໜັງສືບອກລົງໄປບາງກອກ. ສົມເດັດພະເຈົ້າແຜ່ນດິນບາງກອກໄດ້ຊາບໜັງສືນັ້ນ ແລ້ວຈຶ່ງແຕ່ງໃຫ້ເຈົ້າຟ້າກົມມະຫຼວງເທບທະຣິຣັກ ກັບ ພະຍາຍົມມະຣາດ ເກນຄົນສະຫຍາມເມືອງເໜືອ 8 ຫົວເມືອງເປັນທັບນຶ່ງ ແລະໃຫ້ເຈົ້າອະນຸຄຸມທະຫານລາວວຽງຈັນເປັນທັບນຶ່ງ ຍົກຂຶ້ນໄປຕີພະມ້າທີ່ເມືອງຊຽງໃໝ່ ແຕ່ກອງທັບຂອງພະເຈົ້າອະນຸໄປບໍ່ທັນ ກອງທັບສະຫຍາມໄດ້ເຂົ້າຕີພະມ້າແຕກໄປກ່ອນແລ້ວເຖິງ 7 ວັນກອງທັບເຈົ້າອະນຸຈຶ່ງໄປເຖິງ. ດັ່ງນັ້ນ ພະເຈົ້າອະນຸຈຶ່ງຂໍອາສາໄປຕີພະມ້າທີ່ເມືອງຊຽງແສນ. ກົມພະຣາຊະວັງບໍວອນສະຖານມົງຄົນແມ່ທັບໃຫຍ່ຂອງສະຫຍາມຈຶ່ງ

ສັ່ງໃຫ້ກອງທັບຂອງເຈົ້າຟ້າກົມຫຼວງເທບຫະຣິຣັກ, ທັບເມືອງນະຄອນລໍາປາງ ແລະ ທັບເມືອງຊຽງໃໝ່ ຍົກຂຶ້ນໄປຕີຊຽງແສນຊ່ອຍພະເຈົ້າອະນຸ.

ແມ່ທັບທັງ 5 ນະຄອນ ພັກເຊົາລ້ຽງໄພ່ພົນຢູ່ປີນຶ່ງ ເຖິງປີ ຄ.ສ.1804 ຈຶ່ງພ້ອມກັນຍົກຂຶ້ນໄປຕັ້ງຄ້າຍອ້ອມເມືອງຊຽງແສນໄວ້ ຝ່າຍພວກພະມ້າທີ່ຢູ່ໃນເມືອງຊຽງແສນ ບໍ່ໄດ້ຍົກອອກມາຣົບເປັນແຕ່ຮັກສາເມືອງໄວ້ຢ່າງແຂງແຮງກອງທັບທັງຫ້າຫົວເມືອງບໍ່ສາມາດເຂົ້າຕີເອົາເມືອງໄດ້ ພໍເຖິງລະດູເດືອນ 6 ຝົນຕົກລົງມາຫຼາຍໄພ່ພົນ ໃນກອງທັບເກີດໄຂ້ເຈັບລົ້ມຕາຍລົງເປັນອັນມາກທັງສະບຽງອາຫານກໍໜ້ອຍລົງ ອີກປະການນຶ່ງໄດ້ຊາບຂ່າວວ່າກອງທັບພະມ້າເມືອງອັງວະຈະຍົກລົງມາຕີເປັນເສິກຂະໜາບ ດັ່ງນັ້ນແມ່ທັບເມືອງອື່ນໆ ຈຶ່ງພາກັນເລີກຄືນໝົດ ສ່ວນພະເຈົ້າອະນຸບໍ່ຍອມຖອຍຄືນທັງມາດໝາຍພະໄທຈະຕີເອົາເມືອງຊຽງແສນໃຫ້ໄດ້ ຈຶ່ງຕັ້ງຄ້າຍອ້ອມເມືອງໄວ້ຢ່າງແໜ້ນໜາ. ຝ່າຍພວກຊາວເມືອງຊຽງແສນໄດ້ຮັບຄວາມອຶດຢາກຫຼາຍ ກໍພາກັນລັກອອກມາອ່ອນນ້ອມຕໍ່ກອງທັບພະເຈົ້າອະນຸຢ່າງຫຼວງຫຼາຍ. ໂປ່ມະຍຸງ້ວນແມ່ທັບພະມ້າຈະບັງຄັບປ້ອງກັນໄວ້ກໍບໍ່ໄຫວ ດັ່ງນັ້ນ ໂປ່ມະຍຸງ້ວນຈຶ່ງພາທະຫານແຫກໜີ ພະເຈົ້າອະນຸເຫັນເປັນໂອກາດດີກໍຍົກກອງທະຫານເຂົ້າຕີກອງທັບພະມ້າແຕກ. ໂປ່ມະຍຸງ້ວນແມ່ທັບຖືກປືນຕາຍຄາສະໜາມ. ພະຍານາຂວາທີ່ແມ່ທັບພະມ້າຕັ້ງໃຫ້ເປັນເຈົ້າເມືອງຊຽງແສນນັ້ນ ພາຄອບຄົວລັກໜີໄດ້ ພະເຈົ້າອະນຸຈຶ່ງໃຫ້ກວາດເອົາຄອບຄົວຊາວເມືອງໄດ້ 23.000 ຄົນປາຍ ແລ້ວທັງສັ່ງໃຫ້ທໍາລາຍກໍາແພງເມືອງ ແລະເອົາໄຟເຜົາເມືອງເສຍ, ສໍາເລັດບໍລະບວນແລ້ວ ກໍເລີກທັບກັບຄືນມາແລະຄອບຄົວຊາວເມືອງຊຽງແສນນັ້ນ ໄດ້ແບ່ງເປັນຫ້າສ່ວນ, ສ່ວນນຶ່ງໃຫ້ພະເຈົ້າຊຽງໃໝ່ ສ່ວນນຶ່ງໃຫ້ເມືອງນະຄອນລໍາປາງ ສ່ວນນຶ່ງໃຫ້ເມືອງນ່ານ ສ່ວນນຶ່ງເອົາຖວາຍພະເຈົ້າແຜ່ນດິນບາງກອກ ອີກສ່ວນນຶ່ງເອົາມາໄວ້ວຽງຈັນ.

ຝ່າຍພະເຈົ້າແຜ່ນດິນບາງກອກ ໄດ້ຫົງຊາບດັ່ງນັ້ນກໍຫົງພິໂລດໃຫ້ເຈົ້າຟ້າກົມຫຼວງເທບຫະຣິຣັກ ແລະພະຍາຍົມມະຣາດຜູ້ເປັນແມ່ທັບສະຫຍາມວ່າ ບໍ່ຫຼັກທໍ່ລາວແລະເປັນຄົນຂີ້ຢ້ານຕາຂາວ ຈຶ່ງໃຫ້ລົງພະລາຊະອາຍາແມ່ທັບທັງສອງເອົາໃສ່ຄຸກໄວ້ ແຕ່ນັ້ນມາພະກຽດຕິຍົດ ຂອງພະເຈົ້າອະນຸ ກໍລືຊາປາກົດເປັນອັນມາກວ່າ ເປັນນັກຣົບຜູ້ມີສີມືຍອດຍິ່ງໃນບັນດາແມ່ທັບຫົວເມືອງປະເທດສະລາດທັງຫຼາຍ ຈົນແມ່ທັບຝ່າຍສະຫຍາມເອງກໍໄດ້ຍອມຮັບສີມືຂອງພະອົງ.



## ຕອນທີ 2
# ຂຶ້ນສະເຫວີຍລາດ ແລະທຳການຟື້ນຟູປະເທດ

ຢູ່ມາເຖິງປີ ພ.ສ 2347 (ຄ.ສ 1803) ສົມເດັດພະເຈົ້າອິນທະວົງ ຜູ່ເປັນພະເຊດຖາຄອງລາຊະສົມບັດມາໄດ້ສິບປີກໍສະຫວັນນະຄົດ ເມື່ອເດືອນ 3 ອອກໃໝ່ 8 ຄ່ຳ, ພະເຈົ້າແຜ່ນດິນ ສະຫຍາມຈຶ່ງຫົງອະພິເສກເຈົ້າມະຫາອຸປະຮາດອະນຸວົງ ຂຶ້ນເປັນເຈົ້າແຜ່ນດິນນະຄອນວຽງຈັນ ໃນປີດຽວກັນນັ້ນເອງ. ເວລາຂຶ້ນສະເຫວີຍລາດນັ້ນ ພະອົງມີພະຊົນໄດ້ 37 ປີ. ເມື່ອໄດ້ສະເຫວີຍລາດແລ້ວ ພະອົງກໍໄດ້ຟ້າວຈັດການຟື້ນຟູແລະບູລະນະປະເທດຊາດຂຶ້ນຢ່າງແຂງແຮງ ໃນທາງພະພຸດທະສາສະໜາ ພະອົງກໍໄດ້ຫົງຈັດການປະຕິສັງຂອນປົວແປງວັດວາອາຮາມຂຶ້ນຫຼາຍວັດ ຕະຫຼອດຈົນທໍໂຮງພະລາຊະວັງຖະໜົນຫົນທາງ ກໍໄດ້ຫົງປະຕິສັງຂອນສ້າງແປງຂຶ້ນເປັນອັນມາກ. ໃນດ້ານການທະຫານ ພະອົງກໍບໍ່ໄດ້ຢຸດຢ່ອນທໍ້ຖອຍໄດ້ທຳການບຳລຸງສົ່ງເສີມໃຫ້ເຂັ້ມແຂງຢູ່ສະເໝີ. ໃນດ້ານການເມືອງພະອົງກໍໄດ້ພະຍາຍາມທຳການຕິດຕໍ່ສະໝານໄມຕີກັບ ພະເຈົ້າມັນທາຕຸລາດແຫ່ງນະຄອນຫຼວງພະບາງໄວ້ເປັນຢ່າງດີ ເພື່ອໃຫ້ລືມເຫດການອັນເຄີຍຜິດຂ້ອງຕ້ອງຖຽງບາດໝາງກັນມາແຕ່ກ່ອນໆນັ້ນເສຽຈົນຕະຫຼອດທາງປະເທດອານາມ ພະອົງກໍໄດ້ທຳການຕິດຕໍ່ເປັນໄມຕີໄວ້ເປັນອັນດີຕາມລາຊະປະເພນີແຕ່ກ່ອນໆມາ. ໃນປະເທດສະຫຍາມເອງພະອົງກໍເປັນທີ່ໄວ້ວາງ ພະໄທຂອງພະເຈົ້າແຜ່ນດິນສະຫຍາມລັດສະການທີ 2. ພະເຈົ້າແຜ່ນດິນສະຫຍາມພະອົງນີ້ ກໍຫົງຮັກແພງສະໜິດສະໜົມກັບພະອົງເປັນອັນມາກ ດັ່ງຈະເຫັນໄດ້ໃນເຫດການ ແລະພະລາຊະພາລະກິດ ທີ່ພະອົງໄດ້ຫົງປະຕິບັດດັ່ງຕໍ່ໄປນີ້:

- ປີ ຄ.ສ 1805 ພະອົງໄດ້ຍົກທັບໄປຕີເມືອງຊຽງຕຸງ ເມືອງຊຽງຮຸ່ງ ຕະຫຼອດເມືອງລື້ ທັງຫຼາຍຊ່ອຍກອງທັບສະຫຍາມ ພ້ອມດ້ວຍກອງທັບຫົວເມືອງປະເທດສະລາດທັງຫຼາຍທີ່ຂຶ້ນກັບສະຫຍາມ ໄດ້ຊ້າງມ້າສາດຕາອາວຸດເປັນອັນມາກ.

- ປີ ຄ.ສ 1806 ພະອົງໄດ້ສ້າງພະລາຊະວັງ ແລະຫໍໂຮງຂຶ້ນ ໃນນະຄອນວຽງຈັນ ເປັນອັນມາກ.

- ປີ ຄ.ສ 1807 ໄດ້ສະເດັດໄປທຳບຸນສະຫຼອງຂົວວັດທາດພະນົມ ໃນເມືອງນະຄອນພະນົມ.

- ປີ ຄ.ສ 1808 ໄດ້ສະເດັດໄປສ້າງວັດສີບຸນເຮືອງ ແລະວັດອື່ນໆ ໃນເມືອງໜອງຄາຍ.

- ປີ ຄ.ສ 1809 ສົມເດັດພະເລີດຫຼ້ານະພາໄລ ພະເຈົ້າແຜ່ນດິນສະຫຍາມ ໄດ້ໃຫ້ເຈົ້າພະຍາຈັກກຣີ ຂຽນຈົດໝາຍມາຫາພະເຈົ້າອະນຸວົງ ຝາກຄວາມຮັກແລະຄຶດເຖິງມາ ດັ່ງມີສຳເນົາຈົດໝາຍດັ່ງຕໍ່ໄປນີ້:

## ສຳເນົາຈົດໝາຍເຈົ້າພະຍາຈັກກຣີ ມາເຖິງ ພະເຈົ້າອະນຸ

ໜັງສືເຈົ້າພະຍາຈັກກຣີມາເຖິງເຈົ້າອະນຸວຽງຈັນ ດ້ວຍທົງພະກະລຸນາຕັດເໜືອເກົ້າສັ່ງວ່າ ໃຫ້ຂຸດສະແລະປຸກພະທີ່ນັ່ງ ທຳເກ່ງໃນພະລາຊະວັງເປັນທີ່ທົງປະພາດສະບາຍພະໄທ ແລະ ເຊິ່ງເຈົ້າວຽງຈັນໄດ້ລົງໄປຊ່ວຍທຳການຂຸດສະຄັ້ງກ່ອນເຫັນຍັງຄັບແຄບຢູ່ ບັດນີ້ໄດ້ຂະຫຍາຍກຳແພງພະລາຊະວັງດ້ານໃຕ້ອອກໄປອີກ ຈຶ່ງໄດ້ຂຸດສະປະຈົບສະເກົ່າຕໍ່ລົງໄປໃຫ້ຍາວ ແລະກວ້າງວັດແທກໄດ້ 3 ເສັ້ນ 4 ວາ ທົງພະດຳລິຫຽບທີ່ເປັນເກາະໃຫຍ່ເກາະເລັກລົງ

ເຂື່ອນປູອິດທຳພະທີ່ນັ່ງເກົ່າຈີນ ແລະຕຶກຢ່າງຝຣັ່ງຂຶ້ນອີກເປັນອັນມາກ ຫວ່າງເກົ່າຫວ່າງຕຶກນັ້ນໄດ້ປູກຕົ້ນໄມ້ມີດອກມີຜົນເອນຊາຍອອກໄປ. ດ້ານຂອບສະຣົ່ມແສງແດດໃຫ້ເອົາສີລາແທ່ງໃຫຍ່ເລັກ ມາທຳເປັນນໍເປັນແຫຼມ ແລະຫາດປິດບັງຣີ້ເຂື່ອນເສຽສິ້ນ. ໃນຫ້ອງສະນັ້ນ ປູດ້ວຍອິດໃຫຍ່ໃຫ້ນ້ຳໄຫຼສະອາດ ປູກບົວຫຼວງບົວເຜື່ອນທີ່ຊາຍແຫຼມຊາຍຫາດທຸກແຫ່ງແລ້ວລ້ຽງປາສາລະພັນ. ເວລາເຊົ້າເວລາເຢັນ ສະເດັດອອກພະທີ່ນັ່ງເກົ່າງ ໂປຍເຂົ້າຕອກບ້າງສະເດັດພະແທ່ນສີລາ ໃຕ້ຣົ່ມໄມ້ບ້າງທິ້ງໂປຍເຂົ້າຕອກພະລາຊະທານປາທັງປວງ ທອດພະເນດມັກໃນຣີ້ສັດແຂກເຕົ້າກະຕົ໋ວຊຶ່ງແຂວນໄວ້ທີ່ກິ່ງໄມ້ນົກເປັດນ້ຳ ນົກແຄບແຄລອຍຫຼິ້ນນ້ຳຢູ່ ອັນນົກນອກກວ່ານີ້ກໍລ້ຽງປ່ອຍລ້ຽງແຂວນ ລ້ຽງໃນສວນເປັນຫຼາຍຊາດແລະເຊິ່ງພະລາຊະດຳລິສ້າງພະທີ່ນັ່ງເກົ່າງຊຸດສະໄວ້ໃນພະລາຊະວັງ ທັງນີ້ເພື່ອຈະໄດ້ໃຫ້ພະວົງສານຸວົງຝ່າຍໃນປະພາດຫຼິ້ນ ດ້ວຍບໍ່ໄດ້ໄປເຫັນພູເຂົາ ແລະ ທ່ານ້ຳແຫຼ່ງໃດ ແລະຈະເບິ່ງສະຕິປັນຍາຂ້າລາຊະການ ເຊິ່ງເປັນຊ່າງຂ້າງຈະໄວ້ຝີມືຊ່າງຈຳຫຼັກ ຊ່າງຊຽນຊ່າງປັ້ນ ຊ່າງປູນ ຊ່າງປາດໄມ້ ຊ່າງຕົ້ນໄມ້ ໄທ ຈີນ ໃຫ້ເປັນກຽດຕິຍົດປາກົດໃນແຜ່ນດິນແລ້ວ ກໍເປັນລາຊະກຸສົນຢ່າງນຶ່ງ ຄັນເຖິງເທດສະການຜົນລະໄມ້ຊຸກຊຸມກໍທິ້ງພະລາຊະສັດທາ ໃຫ້ອາລາດທະນາພະລາຊາຄະນະເຂົ້າໄປຮັບພະລາຊະທານສັນ ໃນພະທີ່ນັ່ງເກົ່າງຕາມຂອບສະພະລາຊາຄະນະຮັບປະທານສັນປີຍະຈັງທັນຫຼາຍກວ່າສັນທີ່ອື່ນ ເພາະໄດ້ເບິ່ງສີມືຊ່າງທີ່ເຮັດໄວ້ນັ້ນແລະໂຜດໃຫ້ພະເຈົ້າລູກເທີຫຼານເທີ ແລະ ຂ້າລາຊະການລ້ຽງດູດັ່ງນີ້ເນືອງໆ ຖ້າເທດສະການຕຸດສົງການເຂົ້າວັດສາສາດທະອອກວັດສາວັນວິສາຂະບູຊາເພັງ ເດືອນ 11 ເດືອນ 12 ກໍຊົງພະລາຊະສັດທາໃຫ້ເຊີນພະພຸດທະຣູບແກ້ວຜະລຶກ ແລະພະບໍຣົມມະສາລີລິກະທາດໄປສະຖິດໄວ້ພະທີ່ນັ່ງເກົ່າງຄົງຄາສະຫວັນກະທຳສົມໂພດ ພ້ອມດ້ວຍພະບໍລົມວົງສານຸວົງຝ່າຍ

ໃນ ພັນລະຍາຂ້າທູນລະອອງຜູ້ໃຫຍ່ຜູ້ນ້ອຍເຂົ້າໄປຮ້ອງສັກກະວາດອກສ້ອຍ ມະໂຫລີເພງເຄິ່ງທ່ອນມອນທະແຍສັບພະການມະຫໍລະສົບຕ່າງໆ ໃຫ້ແຕ່ງເກ່ງຕັ້ງເຄື່ອງແກ້ວແຂວນໂຄມແກ້ວໂຄມແພຫຼາຍຢ່າງ ຕາມບູຊາພະບໍລົມທາດຄັ້ງລະສາມຄືນບ້າງ ສີ່ຄືນບ້າງແລະເມື່ອເພັງເດືອນ 12 ປີເຖາະ ເອກສົກນີ້ ພະຍານະຄອນລຳປາງ ພະຍານ່ານລົງໄປເຝົ້າລະອອງນະກຸງເທບ ກໍໂປດໃຫ້ພາບຸດພະລິຍາເຂົ້າໄປຊົມພະທີ່ນັ່ງເກ່ງເຊິ່ງຕົກແຕ່ງ ແລະ ການມະຫໍລະສົບສົມໂພດສິ້ນທຸກຄືນ ຖ້າເຫດສະການແຕ່ງເກ່ງ ແລະ ລ້ຽງດູຂ້າທູນລະອອງຄັ້ງໃດກໍມີພະລາຊະຫະລືໄທຄິດເຖິງເຈົ້າວຽງຈັນ ທຸກຄັ້ງດ້ວຍມິໄດ້ລົງໄປເຫັນຈຶ່ງໂປດໃຫ້ຖ່າຍຢ່າງແຜນທີ່ສະແດງເກ່ງເກົ່າໃໝ່ພະລາຊະທານຂຶ້ນມາໃຫ້ເຈົ້າວຽງຈັນ ດູພໍເປັນສຳເນົາພາງ ຖ້າເຈົ້າວຽງຈັນຫວ່າງລາຊະການເມືອງເມື່ອໃດຈະລົງໄປເຝົ້າທູນລະອອງທີ່ກຸງເທບ ກໍໃຫ້ພາບຸດພະລິຍາມະໂຫລີລະຄອນກັບໃຫ້ທາພາຍແລະນົກເຂົາຄາລົມລົງໄປດ້ວຍ ຈະໄດ້ຫຼິ້ນຕາມສະບາຍໃຈ ອັນເຮືອສຳລັບພາຍຫຼິ້ນແລະກິ່ງໄມ້ທີ່ໜ້າແຂວນນົກນັ້ນມີຢູ່ເປັນອັນມາກ.

ໜັງສືມານະ ວັນ 6 ເດືອນ 2 ຄ່ຳ1 ຈຸລະສັກກະລາດ 1171 ປີເຖາະເອກສົກ ວັນສຸກ ເດືອນ ຍີ ຂຶ້ນຄ່ຳ 1 ໄດ້ສົ່ງການີ້ໃຫ້ເຈົ້າລາຊະບຸດແຕ່ງໃຫ້ທ້າວເພງຖືຂຶ້ນໄປສົ່ງໃຫ້ເພງເມືອງກາງແລ້ວ.

ປີ ຄ.ສ 1810 ພະອົງໄດ້ທົງສ້າງຫໍພະແກ້ວຂຶ້ນທີ່ວັດຊ້າງເຜືອກບ້ານສີຊຽງໃໝ່ແລະໄດ້ປະຕິສັງຂອນພະພຸດທະຮູບ ທີ່ເປັນພະປະທານໃນໂບດໃໝ່ພ້ອມກັບສິ່ງຕ່າງໆຫຼາຍປະການຄື:

ໃຫ້ຊຽນ(ແຕ້ມ)ຮູບພະພຸດທະຮູບຕາມຝາຜະໜັງ 1000 ອົງ

ສ້າງພະພຸດທະຮູບໃສ່ຈົມກົນ 4 ດ້ານ 113 ອົງ.

ສ້າງພະພິມໃສ່ຊ່ອງຝາຜະໜັງ 2602 ອົງ.

ໄກ່ຄົນໄວ້ອຸປະຖາກຫໍພະແກ້ວ ຊາຍ 5 ຍິງ 3 ຄົນ.

ທັງສ້າງຂົວຂ້າມນ້ຳຂອງ ບ່ອນຊີວັດອູບມຸງໃສ່ບ່ອນໃຕ້ວັດຊ້າງເຜືອກ.

ໃນການສ້າງຂົວນີ້ ພະອົງຈະເຮັດຂົວແບບໃດບໍ່ມີທາງຈະຮູ້ໄດ້ ເຫັນແຕ່ສິລາຈາລຶກບອກໄວ້ວ່າພະອົງໄດ້ສ້າງຂົວຂ້າມນ້ຳຂອງ ເພື່ອໃຫ້ຄົນທັງຫຼາຍທຽວໄປມາສະດວກໃນເວລາທຳບຸນສະຫຼອງຫໍພະແກ້ວທີ່ບ້ານສີຊຽງໃໝ່ ແຕ່ຂ້າພະເຈົ້າຜູ້ຂຽນໄດ້ເຄີຍເຫັນເສົາຂົວທີ່ວ່ານີ້ ຢູ່ຊື່ທ່າວັດອູບມຸງ ໃນເວລາຝັ່ງຂອງພັງເມື່ອປີ ຄ.ສ 1932 ມີຢູ່ຫຼາຍເສົາຊຶ່ງຊາວບ້ານໜອງປາໄນໄດ້ຂຸດເອົາມາເຮັດສາກນອງ ແລະ ແມ່ນອງເປັນອັນມາກ ເສົານັ້ນເປັນໄມ້ແກ່ນຢ່າງດີຝັງຢູ່ເລິກ ເມື່ອເວລານ້ຳລົງເດືອນສີ່ເດືອນຫ້າຈຶ່ງເຫັນ ແຕ່ດຽວນີ້ບໍ່ເຫັນມີແລ້ວ. ເມື່ອທົງສ້າງຫໍພະແກ້ວແລະຂົວສຳເລັດແລ້ວຄັນເຖິງປີ ຄ.ສ 1812 ຈຶ່ງທຳໄດ້ການສະຫຼອງຕະຫຼອດ ເຈັດວັນເຈັດຄືນ ໂຮມພາລາຊະສົມບັດສ້າງຫໍພະແກ້ວໝົດ 140 ຊັ່ງ 5 ຕຳລຶງ 3 ບາດ 2 ສະຫຼຶງ. ເວລາທຳບຸນສະຫຼອງໝົດ 125 ຊັ່ງ 14 ຕຳລຶງ 2 ບາດ 2 ສະຫຼຶງ ໂຮມທັງມວນເປັນເງິນ 266 ຊັ່ງ ກັບ 2 ບາດ ຄິດເປັນບາດໄດ້ 2.1282 ບາດ.

ເຖິງປີ ຄ.ສ 1813 ໄດ້ສະເດັດໄປນະມັດສະການພະທາດພະນົມ ແລະ ທຳບຸນສະຫຼອງ ຫໍພະໃນເຂດທາດພະນົມ ແລະຕໍ່ມາໃນປີ ຄ.ສ 1816 ໄດ້ທົງທຳບຸນສະຫຼອງຫໍພະແກ້ວ ໃນນະຄອນວຽງຈັນອີກ ໃນຄາວນີ້ພະອົງໄດ້ທານຜ້າຈີວອນເຖິງ 7.000 ຜືນ.

ເຖິງປີ ຄ.ສ 1818 ພະອົງໄດ້ສ້າງວັດສະຕະສະຫັດສາຣາມ ຄືວັດສີສະເກດທຸກວັນນີ້ຂຶ້ນ. ໃນການສ້າງວັດສະຕະສະຫັດສາຣາມນີ້ ພະອົງສ້າງພະປະທານໃຫຍ່ໃນໂບດນຶ່ງອົງ ພະພຸດທະຮູບທອງໃຫຍ່ຫໍພະອົງໜັກ 4 ແສນ 9 ໝື່ນ 8 ພັນ 1 ອົງ (ບາທ)*, ພະເງິນບຸ 276 ອົງ ພະພິມ ໃສ່ຕາມຊ່ອງຝາສິມ 2.052, ອົງພະພຸດທະຮູບໃຫຍ່ລຽບອ້ອມຈົມກົມທັງ 4 ດ້ານ 120 ອົງ, ພະພິມໃສ່ໃນຊ່ອງຝາຈົມກົມ 4 ດ້ານ 6.840 ອົງ, ວິຫານ 1 ຫຼັງ, ພະເຈດີ 2

ອົງ, ຫໍໄຕ 1 ຫໍ, ສາລາໂຮງທຳ 1 ຫຼັງ, ກຸຕິໝູ່ 2 ໝູ່, ກຸຕິລຽບເປັນຫຼັງ 8 ຫຼັງ, ຫໍກອງ 1 ຫໍ, ກຳແພງອ້ອມວັດ 4 ດ້ານ ແລະ ໄຖ່ຄົນໄວ້ອຸປະຖາກວັດ 18 ຄົນ. ຕໍ່ຈາກນັ້ນມາອີກ 6 ປີຄືເຖິງ ຄ.ສ 1824 ຈຶ່ງໄດ້ທຳບຸນສະຫຼອງວັດສີສະເກດ. ເວລາສ້າງນັ້ນໝົດພະລາຊະຊັບໄປ 512 ຊັ່ງ 17 ຕຳລຶງ 3 ບາດ 1 ສະຫຼຶງ ຮວມທັງເວລາສະຫຼອງໝົດເງິນ 849 ຊັ່ງ 7 ຕຳລຶງ 3 ບາດ 2 ສະຫຼຶງເຟື້ອງ ຄິດເປັນເງິນບາດໄດ້ 6.7951 ບາດ ກັບ 2 ສະຫຼຶງເຟື້ອງ.

ໃນປີ ຄ.ສ 1819 ພະອົງໄດ້ແຕ່ງໃຫ້ໝື່ນເຮືອຄຳ ເປັນທູດສົ່ງເຮືອຄຳ 2 ເຫຼັ້ມໄປຖວາຍ ພະເຈົ້າມັນທາຕຸລາດ ເຈົ້າແຜ່ນດິນນະຄອນຫຼວງພະບາງ ເພື່ອຜູກສຳພັນທະມິດໄວ້ ແລະປີລຸນມາ ກໍໄດ້ສົ່ງຊ້າງໂຕນຶ່ງສູງເຈັດສອກໄປຖວາຍອີກ.

ໃນປີ ຄ.ສ 1819 ນີ້ໄດ້ເກີດເຫດສຳຄັນຂຶ້ນທາງເມືອງ ຈຳປາສັກ ຄືມີພິກຂຸອະລັດຊີຕົນນຶ່ງຊື່ສາ ຢູ່ບ້ານຫຼຸບເລົາເຕົາປູນ ແຂວງເມືອງສະລະບຸລີ ໄດ້ເດີນກຳມະຖານມາເຊົາຢູ່ພູເຈັດໂງ້ງ ແຂວງເມືອງຈຳປາສັກ ພິກຂຸສາ ສະແດງອວດອ້າງຕົນວ່າ ເປັນຜູ້ທີ່ມີລິດທີເກັ່ງກ້າຈົນຄົນທັງຫຼາຍຫຼົງເຊື່ອ ແລະ ຍອມເຂົ້າເປັນລູກສິດເປັນອັນມາກ. ພິກຂຸສາເຫັນວ່າ ມີຄົນນັບຖືຕົນຫຼາຍແລ້ວ ກໍຕັ້ງເປັນກອງທັບທ່ຽວຕີເອົາບ້ານເລັກບ້ານນ້ອຍ ໄດ້ຫຼາຍບ້ານ ຈົນມາເຖິງ ເມືອງຈຳປາສັກ ເວລານັ້ນ ເຈົ້າໝານ້ອຍເປັນເຈົ້ານະຄອນຈຳປາສັກ ເຈົ້າໝານ້ອຍບໍ່ທັນຮູ້ເນື້ອແລະທ້າງທາບໍ່ທັນ ຈຶ່ງແຕກໜີເຂົ້າປ່າ ພິກຂຸສາກໍຍຶດໄດ້ເມືອງຈຳປາສັກ. ຝ່າຍພະຍານະຄອນລາຊະສີມາ (ທອງອິນ) ເຊິ່ງເວລານັ້ນ ຂຶ້ນມາກ້ຽວກ່ອມພວກຂ້າຢູ່ແຂວງເມືອງໂຂງ ໄດ້ຊາບວ່າ ພິກຂຸສາ ຕີໄດ້ເມືອງ

---

** ໃນສິລາເລກ ບໍ່ມີຫົວໜ່ວຍນ້ຳໜັກ, ຂ້າພະເຈົ້າ(ບ.ກ.) ເຫັນວ່າ ໜ້າຈະເປັນ ບາທ ຫຼື ກຣາມ.*

ຈຳປາສັກແລ້ວ ຈຶ່ງຊວນເອົາພະສຣີອັກຄະຣາດແລະພະໂພສາຣາດ ເຈົ້າເມືອງໂຂງຍົກທັບມາຕີອາຈານສາ ພ້ອມກັນນັ້ນກໍໄດ້ມີໜັງສືບອກລົງໄປບາງກອກ. ຝ່າຍອາຈານສາເກັບຮິບໂຮມເຂົ້າຂອງໄດ້ກໍແຕກໜີໄປຢູ່ພູເຂົາຍ່າປຸເມືອງອັດຕະປື. ພະເຈົ້າແຜ່ນດິນສະຫຍາມໄດ້ຊາບຈາກໜັງສືບອກຂອງພະຍານະຄອນລາຊະສີມາ ຈຶ່ງທົງແຕ່ງໃຫ້ພະຍາມະຫາອຳນາດເປັນແມ່ທັບຂຶ້ນມາຕີພະອາຈານສາ ແຕ່ຈັບຕົວພະອາຈານສາບໍ່ໄດ້ ພະຍາມະຫາອຳນາດຈຶ່ງຄຸມເອົາເຈົ້າໝານ້ອຍລົງໄປບາງກອກ ແລະເຈົ້າໝານ້ອຍກໍໄປເຖິງພິລາໄລຢູ່ໃນບາງກອກ. ຄາວນັ້ນ ສົມເດັດພະເຈົ້າແຜ່ນດິນບາງກອກ ຈຶ່ງທົງສັ່ງໃຫ້ພະເຈົ້າອະນຸໄປນຳຕີທັບພະອາຈານສາ. ສົມເດັດພະເຈົ້າອະນຸ ໄດ້ທົງແຕ່ງໃຫ້ລາຊະບຸດຂອງພະອົງ ພະນາມວ່າ ເຈົ້າລາຊະບຸດໂຍ້ ຍົກທັບລົງໄປຕີພະອາຈານສາ ແລະຈັບພະອາຈານສາໄດ້ສົ່ງລົງໄປບາງກອກ. ດ້ວຍຄວາມດີຄວາມຊອບອັນນີ້ສົມເດັດພະເຈົ້າອະນຸຈຶ່ງຂໍແຕ່ງຕັ້ງເຈົ້າລາຊະບຸດໂຍ້ໄປເປັນເຈົ້ານະຄອນຈຳປາສັກ ແລະໃຫ້ເຈົ້າຄຳປ້ອມໄປເປັນເຈົ້າອຸປະຣາດໃນປີ ຄ.ສ 1821.

ເຈົ້າລາຊະບຸດໂຍ້ ເມື່ອໄດ້ຂຶ້ນຄອງລາຊະສົມບັດເປັນເຈົ້ານະຄອນຈຳປາສັກແລ້ວກໍເກນໄພ່ພົນຂຸດດິນຄູນຂຶ້ນເປັນກຳແພງເມືອງ ແລະສ້າງກໍ່ກຳແພງວັງຂຶ້ນພ້ອມກັບສ້າງຫໍພະແກ້ວຂຶ້ນໄວ້ ເປັນບ່ອນຖືນ້ຳພະພິພັດສັດຈາແລ້ວໄດ້ປຸ່ນຄ່າທຳນຽມເສຽສ່ວຍແກ່ຊາຍສະກັນທີ່ມີເມຽແລ້ວຄື ໃຫ້ເກັບເປັນປ່ານ, ໄໝ ຫຼື ໝາກແໜ່ງ ຄົນລະ 1 ຊັ່ງ 5 ຕຳລຶງ.

ເຖິງປີ ຄ.ສ 1825 ເດືອນ 5 ອອກໃໝ່ 3 ຄ່ຳວັນອາທິດເກີດລົມພາຍຸຫຼວງພັດຫໍພະບາງເພ. ເຖິງເດືອນ 6 ຂຶ້ນ 1 ຄ່ຳ ຍາມກອງແລງ ເກີດລົມຫຼວງພັດ (ຄັ້ງ) ນຶ່ງຫໍໂຮງເພຫຼາຍຫຼັງແລະເຖິງເດືອນ 8 ອອກໃໝ່ 14 ຄ່ຳເກີດແຜ່ນດິນໄຫວ. ໃນປີນີ້ເອງສົມເດັດພະເຈົ້າອະນຸວົງໄດ້ສະເດັດລົງໄປບາງ

ກອກ ໃນງານຖວາຍເພີງສົບພະເຈົ້າແຜ່ນດິນສະຫຍາມອົງທີ 2 (ພະພຸດທະເລີດຫຼ້ານະພາໄລ). ໃນການລົງໄປຄາວນີ້ ໄດ້ພາໄພ່ພົນໂຍທາລົງໄປນຳເປັນອັນມາກ ພໍທຳການຖວາຍພະເພີງສົບສຳເລັດແລ້ວພະເຈົ້າແຜ່ນດິນສະຫຍາມອົງທີ 3 (ພະນັ່ງເກົ້າ) ຈຶ່ງຂໍແຮງ (ເກນ) ພວກຄົນລາວທີ່ລົງໄປນຳສົມເດັດພະເຈົ້າອະນຸ ໃຫ້ໄປຕັດຕົ້ນຕານແຂວງເມືອງສຸພັນບຸລີ ແກ່ລົງມາໄວ້ທາງທ່າຈະເອົາໄປໃຊ້ລາຊະການແຂວງເມືອງສະມຸດປາການ. ສົມເດັດພະເຈົ້າອະນຸໄດ້ແຕ່ງໃຫ້ ເຈົ້າລາຊະວົງ (ເຫງົ້າ) ຄຸມຄົນໄປຕັດຕາມສັ່ງ ແລະ ໃນການສັ່ງໄປຕັດຕົ້ນຕານຄາວນີ້ ສົມເດັດພະເຈົ້າອະນຸໄດ້ຮັບຄວາມບໍ່ພໍພະໄທເປັນອັນມາກ. ພໍເຖິງລະດູຝົນ ສົມເດັດພະເຈົ້າອະນຸໄດ້ກັບຂຶ້ນມານະຄອນວຽງຈັນ ແລະເມື່ອຈະມານັ້ນໄດ້ທູນຂໍເອົາພວກລະຄອນຜູ້ຍິງຊາວວັງ, ເຈົ້າຍິງດວງຄຳ[1] ແລະຄອບຄົວລາວຊາວເມືອງສະລະບຸລີ ທີ່ຖືກກວາດໄປແຕ່ຄັ້ງພະເຈົ້າຕາກສິນພຸ້ນຂຶ້ນມາວຽງຈັນນຳ ແຕ່ພະເຈົ້າແຜ່ນດິນສະຫຍາມບໍ່ຍອມໃຫ້ຈັກຢ່າງ ອັນນີ້ເປັນເຫດໃຫ້ພະອົງທົງຄຽດແຄ້ນຕື່ມຂຶ້ນອີກ. ດັ່ງນັ້ນ ພະອົງຈຶ່ງໄດ້ຄິດກູ້ອິດສະລະພາບຕັ້ງແຕ່ນັ້ນມາ.

ຄວາມຈິງ ສົມເດັດພະເຈົ້າອະນຸໄດ້ຄຶດກູ້ອິດສະລະພາບມາເຫິງແລ້ວຫາກແຕ່ວ່າພະເຈົ້າແຜ່ນດິນສະຫຍາມອົງທີ 2 ນັ້ນມີຄວາມຮັກແພງກັບພະເຈົ້າອະນຸຫຼາຍ ພະເຈົ້າອະນຸທົງຄຶດເຫັນບຸນຄຸນຢູ່ຈຶ່ງບໍ່ຫານທຳການກູ້ອິດສະລະພາບ ໂດຍການເປັນກະບົດຕໍ່ພະເຈົ້າແຜ່ນດິນອົງທີ 2 ນັ້ນໄດ້.

---

*ຫມາຍເຫດ: (1) ເຈົ້າຍິງດວງຄຳ ຄົນທີ່ພະເຈົ້າອະນຸອົງຊົງເປັນຫ່ວງນີ້ ຈະເປັນທິດາຂອງເຈົ້າອົງໃດບໍ່ຊາບ ຊາບພາຍລຸນຕໍ່ມາວ່າ ເຈົ້ານາງດວງຄຳນີ້ໄດ້ເປັນພະສະໜົມເອກຂອງ ພະຈອມເກົ້າລັດຊະການທີ 4 ແລະ ມີພະທິດາອົງນຶ່ງ ນາມວ່າ ພະອົງເຈົ້າປະດິດຖະສາລີ ທີ່ມີພະຊົນຍືນຍາວມາຈົນເຖິງສະໄໝລາວອິດສະລະແຕກລົງໄປຢູ່ກຸງເທບ. ອະດີດເຈົ້າມະຫາອຸປະຮາດເພັດຊະລາດ ກໍໄດ້ເຄີຍຕິດຕໍ່ຂໍຄວາມຊ່ວຍເຫຼືອໃນດ້ານທຶນຊັບຈາກພະອົງເຈົ້າປະດິດຖະສາລີ ນີ້ແດ່ຄືກັນ.*

ຕອນທີ 3

# ທຳການກູ້ອິດສະລະພາບ ປຶກສາການເສິກ

ຝ່າຍສົມເດັດພະເຈົ້າອະນຸວົງ ຕັ້ງແຕ່ກັບມາແຕ່ບາງກອກເມື່ອປີ ຄ.ສ 1827 ນັ້ນແລ້ວ ກໍທົງຮໍາເພິງຫາທາງທີ່ຈະທຳການກູ້ອິດສະລະພາບຢູ່ສະເໝີແລະເມື່ອທົງຮໍາເພິງເຖິງເຫດການທີ່ພະເຈົ້າແຜ່ນດິນສະຫຍາມ ໄດ້ໃຫ້ໄປຕັດຕົ້ນຕານກັບການທີ່ພະອົງຂໍເອົາເຈົ້າຍິງດວງຄໍາ, ພວກນາງລະຄອນ ແລະຄອບຄົວລາວຊາວເມືອງສະລະບຸລີຂຶ້ນມາວຽງຈັນບໍ່ໄດ້ນັ້ນ ກໍຍິ່ງໄທມະນັດຄັດແຄ້ນໃນພະໄທຫຼາຍ ດັ່ງນັ້ນພະອົງຈຶ່ງຕັດສິນພະໄທທຳການກູ້ອິດສະລະພາບ ປະກາດຕົວເປັນເອກະລາດຂາດຈາກຄວາມເປັນປະເທດສະລາດຂອງສະຫຍາມ ໃນປີ ຄ.ສ 1827. ເມື່ອປະກາດຕົວເປັນເອກະລາດແລ້ວພະອົງຈຶ່ງໄດ້ປະຊຸມເສນາມຸນຕີທັງຫຼາຍ. ບັນດາເຈົ້ານາຍເສນາອໍານາດທີ່ເຂົ້າໄດ້ປຶກສາຫາລືກັນຄາວນັ້ນ ມີເຈົ້າອຸປະຮາດຕິດສະ[1], ເຈົ້າສຸດທິສານ, ເຈົ້າລາຊະບຸດ (ໂຍ້ເຈົ້ານະຄອນຈຳປາສັກ), ເຈົ້າລາຊະວົງ (ເຫງົ້າ), ພະຍາເມືອງຈັນ, ພະຍາເມືອງແສນ, ພະຍາເມືອງກາງ, ພະຍາເມືອງຊ້າຍ, ພະປະຫຼັດເມືອງແສນ, ພະປະຫຼັດເມືອງຈັນ, ຊານົນເຈົ້າກົມສັດສະດີ.

ສົມເດັດພະເຈົ້າອະນຸ ມີພະລາຊະອາຍາວ່າ ເວລານີ້ໃນບາງກອກ ພວກເຈົ້ານາຍມີແຕ່ຄົນ ໜຸ່ມນ້ອຍ ຂຸນນາງເສນາຜູ້ໃຫຍ່ກໍບໍ່ມີຫຼາຍ ສີໄມ້ລາຍມືການເສິກກໍອ່ອນແອບໍ່ແຂງແຮງ ທັງເຈົ້າພະຍາເມືອງນະຄອນລາຊະສີມາກໍບໍ່ຢູ່ ຫົວເມືອງຕາມທາງກໍບໍ່ມີເມືອງໃດພໍຈະຂັດຂວາງເຮົາໄດ້ແລະອີກປະການນຶ່ງ ໄດ້ຊາບຂ່າວວ່າ ພວກອັງກິດກໍເຂົ້າມາກໍ່ກວນຢູ່ທາງພາກໃຕ້ຂອງປະເທດ

ສະຫຍາມເຮົາພະອົງເຫັນວ່າເປັນການສົມຄວນແລ້ວ ທີ່ຈະຕ້ອງລົງມືທຳການແກ້ແຄ້ນຕໍ່ເມືອງສະຫຍາມ.

ຝ່າຍອຸປະຮາດຕິດສະໄດ້ທູນຄັດຄ້ານວ່າ ເມືອງສະຫຍາມເປັນເມືອງໃຫຍ່ເຖິງແມ່ນວ່າເຮົາຕີໄດ້ແລ້ວ ກໍເຫັນຈະໄປຕັ້ງເປັນເຈົ້າຢູ່ທີ່ນັ້ນບໍ່ໄດ້ພວກໄພ່ພົນເມືອງຈະໂຮມກັນເຂົ້າເປັນກະບົດ ພວກເຮົາກໍເໝືອນນອນຢູ່ເທິງໜາມ.

ສົມເດັດພະເຈົ້າອະນຸມິພະລາຊະອາຍາຕອບວ່າ ຖ້າເຫັນວ່າຈະຕັ້ງຢູ່ບໍ່ໄດ້ເຮົາກໍຈະກວາດເອົາຄອບຄົວຜູ້ຄົນຂຶ້ນມາໄວ້ໃນເມືອງເຮົາ ແລ້ວເຮົາຈັດການປ້ອງກັນຮັກສາດ່ານຊ່ອງແຄບໄວ້ ກອງທັບສະຫຍາມຄົງຈະມາທຳອັນຕະລາຍເຮົາບໍ່ໄດ້ ປະການນຶ່ງທາງທີ່ຈະສົ່ງສະບຽງອາຫານກໍລຳບາກແລະໄກຍິ່ງແມ່ນຈະທຳເສິກຢູ່ເປັນປີເຮົາກໍບໍ່ຢ້ານ ລາສະດອນຫົວເມືອງໃຫຍ່ນ້ອຍທີ່ຂຶ້ນກັບເຮົາຢູ່ເວລານີ້ກໍມີເຖິງ 79 ຫົວເມືອງ.

24 / VII
ຫ້າມຈຳໜ່າຍ

# ໃຫ້ເຈົ້າອຸປະຣາດຕິດສະໄປກ້ຽວກ່ອມພົນລະເມືອງ

ເມື່ອປຶກສາຕົກລົງກັນແລ້ວ ສົມເດັດພະເຈົ້າອະນຸຈຶ່ງມີພະລາຊະອາຍາໃຫ້ເຈົ້າອຸປະຣາດລົງໄປກ້ຽວກ່ອມບ່າວໄພ່ພົນລະເມືອງ ໃນແຂວງເມືອງກາລະສິນ, ຮ້ອຍເອັດ, ສຸວັນນະພູມ, ຊົນນະບົດ, ຂອນແກ່ນ. ເຈົ້າອຸປະຣາດໄປເຖິງເມືອງກາລະສິນ ເຈົ້າເມືອງກາລະສິນບໍ່ເຫັນດີນຳ ເຈົ້າອຸປະຣາດກໍໃຫ້ປະຫານຊີວິດເສຍ. ແຕ່ນັ້ນຫົວເມືອງທັງຫຼາຍກໍເຂົ້າມາອ່ອນນ້ອມໂດຍດີ ເຈົ້າອຸປະຣາດຊັກຊວນຫົວເມືອງເຫຼົ່ານັ້ນໄດ້ໝົດແລ້ວ ກໍຍົກເລີຍລົງໄປເຖິງເມືອງສຸວັນນະພູມ (ແຂວງຮ້ອຍເອັດ)

ສົມເດັດພະເຈົ້າອະນຸ ໄດ້ມີພະລາຊະອາຍາສັ່ງໃຫ້ເຈົ້າລາຊະບຸດໂຍ້ນະຄອນຈຳປາສັກຍົກທັບລົງໄປກວາດເອົາຄົວເມືອງເຂມມະລາດ ເມືອງອຸບົນເມືອງສີສະເກດ ເມືອງເດດອຸດົມ ເມືອງຍະໂສທອນ ສົ່ງຂຶ້ນໄປໄວ້ວຽງຈັນໃຫ້ໝົດແລ້ວ ກຳນົດໃຫ້ຍົກທັບໄປພ້ອມກັນທີ່ເມືອງນະຄອນລາຊະສີມາໃນເດືອນ 3, ເຈົ້າລາຊະບຸດກໍຍົກທັບລົງໄປຕາມພະລາຊະອາຍາແລະໃນເວລາເຈົ້າອະນຸ ພວມເກນກອງທັບຢູ່ເມືອງວຽງຈັນຄັ້ງນັ້ນເກີດອາເພດ ແຜ່ນດິນໄຫວຮຸ່ງເຊົ້າກໍມາເຫັນແຜ່ນດິນໃນກຳແພງທາງທ້າຍເມືອງຍະອອກຈາກກັນຍາວປະມານສອງວາກວ້າງສອກປາຍ ແລະເລິກລົງປະມານຊາວວາ.

*(1) ເຈົ້າອຸປະຣາດຕິດສະ ເປັນນ້ອງຂອງພະເຈົ້າອະນຸ ແຕ່ຄົນລະແມ່ ສ່ວນເຈົ້າສຸດທີສານ ເຈົ້າລາຊະບຸດແລະເຈົ້າລາຊະວົງ ສາມອົງນີ້ເປັນໂອລົດ ຂອງພະເຈົ້າອະນຸ.*

# ສົມເດັດພະເຈົ້າອະນຸ ຍົກທັບມາຈາກວຽງຈັນ

ເມື່ອຈັດກອງທັບພ້ອມແລ້ວ ສົມເດັດພະເຈົ້າອະນຸກໍຍົກລີພົນໂຍທາຂ້າມນ້ຳຂອງໄປຕັ້ງຢູ່ ບ້ານພັນພ້າວ ໃຫ້ພັກເຊົາແອບເຝິກກອງທັບຢູ່ທີ່ນັ້ນ.

ຄັນເຖິງເດືອນຍີ່ແຮມ ປີຈໍ (ຄ.ສ 1827) ສົມເດັດພະເຈົ້າອະນຸໄດ້ມີພະລາຊະອາຍາໃຫ້ເຈົ້າລາຊະວົງ ລາຊະໂອລົດເປັນແມ່ທັບໜ້າຄຸມທະຫານ 3.000 ຄົນ ລົງໄປກ່ອນ. ເຈົ້າລາຊະວົງຍົກທັບລົງໄປເຖິງເມືອງນະຄອນລາຊະສີມາ ໃນມື້ເດືອນ 3 ແຮມ 3 ຄ່ຳ ແລ້ວເຂົ້າໄປບອກເລົ່າແກ່ພະຍາຍົກກະບັດກົມການເມືອງນະຄອນລາຊະສີມາວ່າ ເວລານີ້ພວກອັງກິດຈະຍົກກອງທັບເຂົ້າມາຕີບາງກອກ ຈຶ່ງໄດ້ເກນກອງທັບຈະລົງໄປຊ່ວຍປ້ອງກັນພະນະຄອນ ແລະ ເຈົ້າຢຳຂະໜ່ອມ (ໝາຍເຖິງພະເຈົ້າອະນຸ) ກໍລົງມານຳເວລານີ້ຕັ້ງຢູ່ນ້ຳເຊີນ ອີກສອງສາມວັນຈະມາເຖິງຂໍໃຫ້ພະຍາຍົກກະບັດຈັດການເບີກເຂົ້າໃຫ້ກອງທັບດ້ວຍ. ພະຍາຍົກກະບັດກໍຈັດການເບີກໃຫ້ຕາມປະສົງ. ເຈົ້າລາຊະວົງເບີກເຂົ້າໄດ້ແລ້ວ ກໍໃຫ້ພະຍາເມືອງຂວາ ກັບພະຍາຊຽງໃຕ້ເປັນກອງໜ້າລົງໄປເມືອງສະລະບຸລີກ່ອນ ເຈົ້າລາຊະວົງສະເດັດຕາມລົງໄປຕັ້ງຄ້າຍຢູ່ບ້ານຂອນຂວ້າງ.

ເຖິງວັນເດືອນສາມ ແຮມ 9 ຄ່ຳ ພະຍາເມືອງຂວາ ກັບພະຍາຊຽງໃຕ້ໄດ້ພາເອົາພະຍາສຸຣະຣາຊະວົງ ເຈົ້າເມືອງສະລະບຸລີ 1 ຫຼວງພົນ 1 ກອງຄຳ 1 ກອງຊຽງ 1 ກອງສົງ 1 ຊຶ່ງ ເປັນລາວວຽງຈັນ ຂຶ້ນມາເຝົ້າເຈົ້າລາຊະວົງ. ເຈົ້າລາຊະວົງກໍມີອາດຍາໃຫ້ພວກນາຍກອງເຫຼົ່ານັ້ນ ຈັດການອົບພະຍົບພົນລະເມືອງສະລະບຸລີ ຂຶ້ນມາວຽງຈັນ.

ຝ່າຍສົມເດັດເຈົ້າອະນຸວົງແລະເຈົ້າສຸດທິສານລາຊະໂອລົດຄັນເຖິງວັນມະຫາພິໄຊຍະລຶກຖືກຍາມດີແລ້ວກໍຍົກກອງທັບລົງໄປ. ເຖິງວັນເດືອນສາມແຮມ 6 ຄ່ຳ ກໍໄປເຖິງເມືອງນະຄອນລາຊະສີມາ ເຊົາຕັ້ງຄ້າຍຢູ່ທົ່ງທະເລຫຍ້ານອກເມືອງທາງຕາເວັນອອກເຖິງ 7 ຄ້າຍ ມີພົນທະຫານເຖິງ 80.000 (ແປດໝື່ນ) ຄົນ.

## ກວາດຄົວເມືອງນະຄອນລາຊະສີມາ

ເວລານັ້ນ ເຈົ້າພະຍານະຄອນລາຊະສີມາ ອອກໄປຈັດລາຊະການຢູ່ເມືອງຂຸຂັນ, ສົມເດັດພະເຈົ້າອະນຸຈຶ່ງມີອາດຍາສັ່ງໃຫ້ພະຍາພົມຍົກກະບັດເມືອງນະຄອນລາຊະສີມາອອກໄປເຝົ້າທີ່ຄ້າຍແລ້ວມີອາດຍາສັ່ງວ່າ ເຈົ້າພະຍານະຄອນລາຊະສີມາ ບຽດບຽນໄພ່ບ້ານພົນລະເມືອງໃຫ້ໄດ້ຮັບຄວາມທຸກຮ້ອນ ເຮົາພະອົງມາທາງນີ້ມີຄົນເຂົ້າມາຮ້ອງທຸກຢູ່ບໍ່ຂາດຈຶ່ງໃຫ້ເຈົ້າກວາດເອົາຄອບຄົວເມືອງນະຄອນລາຊະສີມາ ຂຶ້ນໄປວຽງຈັນໃຫ້ທັນພາຍໃນກຳນົດ 4 ວັນ. ພະຍາພົມຍົກກະບັດກໍຈັດແຈງຕາມພະລາຊະອາຍາ.

## ເຈົ້າອຸປະຣາດຕິດສະ ຄິດກະບົດຕໍ່ ພະເຈົ້າອະນຸ

ເວລານັ້ນພະສຸຣິຍະພັກດີຂ້າຫຼວງສະຫຍາມກັບບ່າວໄພ່ອອກໄປສັກເລກ ແລະສຳຫຼວດພົນລະເມືອງຫົວເມືອງລາວຢູ່ເມືອງຍະໂສທອນ ໄດ້ຊາບຂ່າວວ່າ ເຈົ້າມະຫາອຸປະຮາດຕິດສະຍົກທັບລົງມາຕັ້ງຢູ່ເມືອງສຸວັນນະພູມຈຶ່ງຟ້າວເຂົ້າໄປເຝົ້າເຈົ້າມະຫາອຸປະຮາດ ເວົ້າຈາກັນເປັນຄວາມລັບ, ເຈົ້າ

ອຸປະຮາດສັ່ງພະສຸຣິຍະພັກດີວ່າ ຂໍໃຫ້ລົງໄປກາບທູນພະເຈົ້າຢູ່ຫົວບາງກອກວ່າ ຕົວຂ້າພະເຈົ້ານີ້ບໍ່ໄດ້ຄິດກະບົດທໍລະຍົດຕໍ່ພະເຈົ້າຢູ່ຫົວ ແຕ່ຫາກຢ້ານກົວອຳນາດພະເຈົ້າອະນຸ ຈຶ່ງໄດ້ຍົກທັບລົງມາ ແລ້ວເຈົ້າມະຫາອຸປະຮາດກໍທຳໜັງສືໃຫ້ພະສຸຣິຍະພັກດີສະບັບນຶ່ງໃຈຄວາມວ່າ "ພະສຸຣິຍະພັກດີໄດ້ຖວາຍສັດສາບານຂໍອ່ອນນ້ອມແລ້ວບັດນີ້ຂໍໂອກາດລົງໄປຮັບເອົາຄອບຄົວຂຶ້ນມາ". ພະສຸຣິຍະພັກດີໄດ້ໜັງສືນັ້ນແລ້ວກໍມາເຝົ້າພະເຈົ້າອະນຸ ຢູ່ເມືອງນະຄອນລາຊະສີມາ ສົມເດັດພະເຈົ້າອະນຸໄດ້ເຫັນໜັງສືຂອງເຈົ້າອຸປະຮາດນັ້ນແລ້ວກໍທົງອະນຸຍາດປ່ອຍພະສຸຣິຍະພັກດີໄປ. ພະສຸຣິຍະພັກດີຂີ່ຊ້າງລົງໄປເຖິງດົງພະຍາໄຟກໍໄດ້ພົບກັບກອງທັບເຈົ້າລາຊະວົງ ຈັບພະສຸຣິຍະພັກດີໄດ້ຈະໃຫ້ປະຫານຊີວິດເສຽພະຍາຊຽງໃຕ້ກັບເພຽທັງຫຼາຍ ຈຶ່ງທູນຄັດຄ້ານວ່າ "ເຈົ້າຢາຂະໜ່ອມປ່ອຍໃຫ້ມາແລ້ວຈະມາຈັບກຸມຄຸມຂັງໄວ້ ເປັນການບໍ່ສົມຄວນ ພະລາຊະປະສົງຂອງພະອົງທ່ານ ຈະເປັນແນວໃດກໍບໍ່ຮູ້", ເຈົ້າລາຊະວົງຟັງດັ່ງນັ້ນກໍບໍ່ປາກ ພະສຸຣິຍະພັກດີກໍຟ້າວລົງໄປ.

ການທີ່ເຈົ້າອຸປະຮາດຕິດສະຄິດກະບົດຕໍ່ເຈົ້າອະນຸດັ່ງນັ້ນ ກໍດ້ວຍຫວັງວ່າເມື່ອສຳເລັດການເສິກແລ້ວ ຕົນຈະເປັນເຈົ້າແຜ່ນດິນວຽງຈັນ.

## ພະຍາປະຫຼັດເມືອງໂຄລາດ ເຂົ້າອ່ອນຍອມ

ຝ່າຍພະຍາປະຫຼັດເມືອງນະຄອນລາຊະສີມາ ທີ່ອອກໄປລາຊະການເມືອງຂຸຂັນນຳເຈົ້າພະຍານະຄອນລາຊະສີມານັ້ນ ຄັນໄດ້ຊາບຂ່າວວ່າສົມເດັດພະເຈົ້າອະນຸຍຶດເມືອງໂຄລາດໄດ້ແລ້ວ ກໍຟ້າວກັບມາອ່ອນນ້ອມ, ສ່ວນເຈົ້າພະຍານະຄອນລາຊະສີມານັ້ນ ເລີຍໜີໄປທາງເມືອງຂະເໝນ. ສົມເດັດ

ພະເຈົ້າອະນຸຈຶ່ງມີພະລາຊະອາຍາ ໃຫ້ພະຍາປະຫຼັດ ກັບພະຍາພິມຍົກກະບັດເມືອງໂຄລາດຄວບຄຸມຄອບຄົວຊາວເມືອງໂຄລາດຂຶ້ນມາເອງ ດ້ວຍຫຼົງພະໄທເຊື່ອ. ພວກຄົວເມືອງໂຄລາດເດີນທາງມາວັນລະເລັກລະໜ້ອຍ ພະຍາປະຫຼັດກັບພະຍາພິມຍົກກະບັດ ຈຶ່ງຄິດກົນອຸບາຍຈັດຜູ່ສາວງາມໆມາໃຫ້ພວກນາຍທັບນາຍກອງຜູ່ຄວບຄຸມຕະຫຼອດຈົນພົນຕຳຫຼວດ ແລະທະຫານຈົນພວກນາຍແລະຊາວເມືອງຄຸ້ນເຄີຍສະໜິດຮັກແພງກັນ ແລ້ວພະຍາປະຫຼັດກໍຂີ່ມ້າຄືນໄປເຝົ້າ ສົມເດັດພະເຈົ້າອະນຸທີ່ຄ້າຍໃຫຍ່ທູນວ່າ ການອົບພະຍົບຄອບຄົວເປັນໄປດ້ວຍຄວາມລຳບາກຫຼາຍ ຈຶ່ງຂໍມີດຂວານແລະປືນພໍຈະໄດ້ຍິງເນື້ອກິນໄປຕາມທາງ ສົມເດັດພະເຈົ້າອະນຸຫຼົງເຊື່ອກໍພະລາຊະທານໃຫ້.

## ນາງໂມ ເມຍພະຍາປະຫຼັດຕໍ່ສູ້ກອງທັບ

ພວກຄົວເມືອງໂຄລາດເດີນທາງມາເຖິງທົ່ງສຳລິດກໍຂໍພັກເຊົາຕັ້ງຢູ່ທັບຢູ່ທີ່ນັ້ນຊົ່ວຄາວ ໂດຍອ້າງວ່າມີຄວາມອິດຫິວເມື່ອຍລ້າຫຼາຍ ແລ້ວພວກຜູ່ສາວກໍເອົາເຫຼົ້າຢາແຈກຢາຍພວກນາຍຄຸມແລະທະຫານຍາມໃຫ້ມຶນເມົາຈົນຫຼົງໄຫຼແລະນອນຫຼັບໄປກໍມີ ພໍເຖິງເວລາເດິກສະຫງັດພວກຄົວກໍລັກຂ້າພວກນາຍຄຸມແລະພວກຍາມໝົດ. ຮຸ່ງເຊົ້າມາພວກຄົວກໍຕັດໄມ້ມາຕັ້ງເປັນຄ້າຍຂຶ້ນ ສ່ວນພວກນາຍຄຸມທີ່ໜີໄດ້ກໍພາກັນມາເຝົ້າພະເຈົ້າອະນຸ, ພະອົງຈຶ່ງໃຫ້ຕຳຫຼວດ 50 ຄົນຂຶ້ນມາສືບເບິ່ງເຫດການ ພວກຄົວເມືອງໂຄລາດເຫັນຕຳຫຼວດມາກໍເອົາປືນລັດຍິງ ຖືກຕຳຫຼວດຕາຍລົງຫຼາຍຄົນ ພວກຕຳຫຼວດຈຶ່ງກັບຄືນມາທູນພະເຈົ້າອະນຸອີກ. ພະເຈົ້າອະນຸຈຶ່ງແຕ່ງໃຫ້ເຈົ້າສຸດທິສານ ເຈົ້າກ່ຳພ້າ

ແລະເຈົ້າປານຄຸມທະຫານ 3.000 ຄົນ ມາຕີພວກຄົວເມືອງໂຄລາດ. ເວລາ ນັ້ນພວກຄົວຕັ້ງຄ້າຍໄດ້ແລ້ວ ກໍພ້ອມກັນຕໍ່ສູ້ຢ່າງແຂງແຮງ ເຈົ້າສຸດທິສານ ເຫັນພວກຄົວຕໍ່ສູ້ຢ່າງແຂງຂັນ ກໍເຂົ້າໃຈວ່າກອງທັບຂອງເຈົ້າພະຍານະຄອນ ລາຊະສີມາຍົກມາຊ່ອຍ ຈຶ່ງຖອຍທັບກັບໄປຫາພະບິດາ.

## ສົມເດັດພະເຈົ້າອະນຸ ໃຫ້ຖອຍທັບ

ຝ່າຍເຈົ້າລາຊະວົງ ທີ່ໄປກວາດເອົາຄອບຄົວ ເມືອງສະລະບຸລີ ກໍໄດ້ຄົວ ຄົນສະຫຍາມ 10 ຄົວ ຄົນຈີນ 20 ຄົວແລະຄົນລາວ 10.000 ຄົນແລ້ວອົບ ພະຍົບຈາກສະລະບຸລີ ໃນມື້ເດືອນສາມ ແຮມ 9 ຄ່ຳ(ຄ.ສ 1827). ມາເຖິງ ເມືອງໂຄລາດ ຈຶ່ງເຂົ້າໄປເຝົ້າພະລາຊະບິດາທີ່ຄ້າຍແລະທູນວ່າໄດ້ຊາບຂ່າວ ວ່າກອງທັບບາງກອກຈະຍົກຂຶ້ນມາຕໍ່ສູ້ເປັນຫຼາຍທາງ. ສົມເດັດພະເຈົ້າອະນຸ ກັບເຈົ້າລາຊະວົງຈຶ່ງປຶກສາກັນ ເຫັນວ່າຈະຕັ້ງຮັບກອງທັບສະຫຍາມຢູ່ເມືອງ ໂຄລາດນີ້ບໍ່ໄດ້ເພາະຈະເປັນເສິກຂະໜາບ ຈຳເປັນຕ້ອງແຍກຍ້າຍກັນໄປຮັບ ຫຼາຍທາງ ຖ້າຖອຍມາຕັ້ງຮັບຢູ່ເມືອງໜອງບົວລຳພູເຫັນຈະດີ. ປຶກສາເຫັນດີ ດັ່ງນີ້ແລ້ວຈຶ່ງມີພະລາຊະອາຍາໃຫ້ເຜົາເມືອງໂຄລາດ ແລະສາງເຂົ້າໝົດແລ້ວ ໃຫ້ເຈົ້າລາຊະວົງຍົກມາທາງເມືອງຫຼົ່ມ(ຫຼົ່ມສັກ) ສ່ວນພະອົງກໍເລີກຖອຍມາ ທາງພູເຂົ້າສານເມືອງໜອງບົວລຳພູໃນເດືອນສີ່ແຮມ 11 ຄ່ຳ. (ໃນຕອນນີ້ມີຄຳ ຖາມວ່າ ຖ້າສົມເດັດພະເຈົ້າອະນຸຈະລົງໄປຕີເອົາບາງກອກ ເຫດໃດຈຶ່ງບໍ່ຍົກ ເລີຍລົງໄປໂລດ ເພາະເວລານັ້ນທາງບາງກອກຍັງບໍ່ຮູ້ຕົວເລີຍ ຖ້າຍົກລົງໄປ ກໍເຫັນຈະຕີໄດ້ໂດຍງ່າຍ ເຫດໃດຈຶ່ງມາມົວສາລະວົນກວາດເອົາຄົວເມືອງ

ໂຄລາດຢູ່ ຈົນທາງບາງກອກຮູ້ຕົວ ແລະຈັດກອງທັບຂຶ້ນສູ້ຮົບທັນ. ມີຄຳຕອບວ່າ ເປັນດ້ວຍເຫດສາມປະການຄື: 1. ຊາຕາເມືອງບາງກອກຍັງດີຢູ່, 2. ຊາຕາເມືອງວຽງຈັນເຖິງອະວະສານແລ້ວ, 3. ສົມເດັດພະເຈົ້າອະນຸວົງ ຄິດການສົງຄາມຕາມທຳນອງເສິກ ເຫັນວ່າຖ້າຍົກເລີຍລົງໄປໂລດ ກໍຈະເປັນຫ່ວງທາງຫຼັງ ຢ້ານຈະມີການວຸ່ນວາຍຂຶ້ນ ຈຶ່ງຄິດຈະກວາດເອົາຄົວໜີໃຫ້ໝົດເສຽກ່ອນບໍ່ໃຫ້ມີຫ່ວງທາງຫຼັງ ແລ້ວຈຶ່ງຈະຍົກລົງໄປ) ນີ້ເປັນຄຳ ຖາມຄຳຕອບ ຂອງຝ່າຍສະຫຍາມເອງ.

## ສົມເດັດພະເຈົ້າອະນຸ ຕັ້ງຄ້າຍເທິງພູເຂົ້າສານ

ຝ່າຍເຈົ້າລາຊະວົງຂຶ້ນມາເຖິງເມືອງຫຼົ່ມ (ສັກ) ແລ້ວ ກໍພາທະຫານເຂົ້າພັກເຊົາຢູ່ໃນເມືອງຫຼົ່ມ(ສັກ) ສ່ວນສົມເດັດພະເຈົ້າອະນຸ ແລະເຈົ້າສຸດທິສານຍົກທັບຂຶ້ນມາເຖິງເມືອງພູຊຽວ, ເຈົ້າເມືອງພູຊຽວບໍ່ຍອມອ່ອນນ້ອມກໍມີອາດຍາສັ່ງໃຫ້ຈັບເອົາໄປປະຫານຊີວິດເສຽ ແລ້ວໃຫ້ກວາດເອົາຄົວເມືອງພູຊຽວຂຶ້ນມາ. ເຖິງເມືອງໜອງບົວລຳພູຈຶ່ງຢຸດປະທັບຕັ້ງຄ້າຍໃຫຍ່ຢູ່ທີ່ນັ້ນຄ້າຍນຶ່ງໃຫ້ພະຍານະລິນເປັນນາຍຄ້າຍ ມີທະຫານ 3.000 ຄົນ ແລ້ວຈຶ່ງຍົກມາຕັ້ງຄ້າຍຢູ່ພູເຂົ້າສານບ່ອນທາງສອງແຍກ ອີກຄ້າຍນຶ່ງໃຫ້ພະຍາສຸໂພກັບພະຊານົນເປັນນາຍຄ້າຍ ມີທະຫານ 20,000 ຄົນ ສ່ວນພະອົງຕັ້ງຄ້າຍຢູ່ພູເຂົ້າສານ, ພະຍາຊຽງສາ ຕັ້ງຄ້າຍຢູ່ສະໜົມ, ພະຍາກອງຄຳ ຕັ້ງຢູ່ຊ່ອງງົວແຕກ ສ່ວນເຈົ້າມະຫາອຸປະຮາດຕິດສະ ຍັງຕັ້ງຢູ່ເມືອງສຸວັນນະພູມ.

ຕອນທີ 4

## ສະຫຍາມຈັດທັບອອກສູ້

ຝ່າຍສົມເດັດພະເຈົ້າແຜ່ນດິນສະຫຍາມລັດຊະການທີ 3 ຄື ພະນັ່ງເກົ້າ ໄດ້ຊາບຈາກໜັງສືລາຍງານຂອງພະຍາໄຊວິຊິດ ຜູ່ຮັກສາເມືອງກຸງເກົ່າແລະ ຄຳບອກເລົ່າຂອງພະສຸຣິຍະພັກດີ ທີ່ພະເຈົ້າອະນຸປ່ອຍໃຫ້ລົງໄປນັ້ນ ກໍມີ ຄວາມຕົກພະໄທ ຈຶ່ງໃຫ້ຕົກແຕ່ງປ້ອງກັນພະນະຄອນຢ່າງແຂງຂັນ ຄືໃຫ້ຕັ້ງ ຄ້າຍອ້ອມພະນະຄອນໄວ້ ຕັ້ງແຕ່ທົ່ງງົວລຳພອງ (ຄືຫົວລຳໂພງສະຖານີລົດ ໄຟດຽວນີ້) ຍາຍໄປຈົນເຖິງທົ່ງບາງກະປິ ຕະຫຼອດເຖິງແມ່ນ້ຳທາງເໜືອເມືອງ ແລ້ວມີການເກນກອງທັບຫົວເມືອງຝ່າຍໃຕ້ຝ່າຍເໜືອ ເຂົ້າມາໂຮມແລະທົງ ແຕ່ງຕັ້ງໃຫ້ກົມພະຣາຊະວັງບໍວອນ ເປັນຈອມທັບຍົກຂຶ້ນມາເມືອງສະລະບຸລີ ກ່ອນ. ກອງທັບສະຍາມຍົກອອກຈາກບາງກອກ ມື້ວັນເສົາ ເດືອນ 4 ອອກ ໃໝ່ 3 ຄ່ຳ. ແມ່ທັບໃຫຍ່ຝ່າຍສະຫຍາມຍົກມາຕັ້ງຄ້າຍຢູ່ພູທ່າເຮືອແຂວງພະ ພຸດທະບາດ ເມືອງສະລະບຸລີ ຄອຍຖ້າທັບຫົວເມືອງແລະທັບບາງກອກທີ່ ເກນມາບໍ່ທັນພ້ອມນັ້ນຢູ່ ເມື່ອເກນຄົນໄດ້ພ້ອມແລ້ວ ຝ່າຍສະຫຍາມຈຶ່ງໄດ້ຈັດ ທັບເປັນກອງໆດັ່ງນີ້:

1. ພະຍາຈ່າແສນຍາກອນ, ພະຍາກະລາໂຫມຣາຊະເສນາ, ພະຍາ ພິໄຊຍະບຸຣິນທະຣາ, ພະຍານະຣົງວິໄຊ ເປັນທັບໜ້າທີ 1

2. ກົມໝື່ນນະເຣດໂຍທີ, ກົມໝື່ນເສນີບໍລິລັກ ເປັນທັບໜ້າທີ 2

3. ກົມໝື່ນເສນີເທບ, ເປັນກອງທັບສຳລັບທັບຫຼວງ

4. ກົມໝື່ນນະຣານຸຊິດ, ກົມໝື່ນສະວັດວິໄຊ ເປັນປີກຊ້າຍປີກຂວາ

5. ກົມໝື່ນຣາມອິດສະເລດ, ກົມໝື່ນທິເບດບໍວອນ ເປັນຈະເລທັບ

6. ກົມໝື່ນເທບພົນພັກ ເປັນກອງກຽກກາຍ

7. ພະນະເຣນທອນຣາຊະ ເປັນທັບຫຼັງ

ທັບທັງ 7 ນີ້ຍົກຂຶ້ນມາທາງດົງພະຍາໄຟ ນອກຈາກນີ້ຍັງມີທັບອື່ນໆອີກຄື:

1.ເຈົ້າພະຍາມະຫາໂຍທາ ຄຸມທັບພວກລາມັນ ຍົກຂຶ້ນມາທາງດົງພະຍາກາງ.

2. ເຈົ້າພະຍາອະໄພພູທອນ ຄຸມທັບບາງກອກແລະຫົວເມືອງຄົນກຳລັງ 5.000 ຍົກຂຶ້ນມາທາງ ເມືອງເພັດຊະບູນ ເລີຍໃສ່ເມືອງຫຼົ່ມ (ຫຼົ່ມສັກ).

3. ພະຍາເພັດພິໄຊກັບພະຍາໄກໂກສາ ຄຸມທັບຫົວເມືອງຝ່າຍເໜືອກຳລັງ 3.000 ຄົນ ຍົກຂຶ້ນທາງເມືອງພິສະນຸໂລກ ເມືອງນະຄອນໄທເລີຍເຂົ້າໃສ່ເມືອງຫຼົ່ມ (ສັກ) ຫາກອງທັບເຈົ້າລາຊະວົງ.

4. ພະຍາຣາຊະນິກູນ, ພະຍາຣາມກຳແຫງ, ພະຍາຣອງເມືອງ, ພະຍາຈັນທະບຸຣີ ຄຸມພົນຂຶ້ນມາທາງເມືອງພະຕະບອງ ເມືອງສັງຂະ ເມືອງສຸລິນ.

ນອກຈາກນີ້ ຍັງໄດ້ຈັດທັບອອກມາທາງ ເມືອງປາຈິນບຸຣີ ເດີນທາງຊ່ອງເຮືອແຕກອີກ 4 ທັບຄື

1. ພະຍາຣາຊະສຸພາວະດີ ເປັນທັບທີ 1

2. ເຈົ້າພະຍາພະຄັງ ເປັນທັບທີ 2

3. ກົມໝື່ນພິພິດພູເບນ, ກົມໝື່ນພິທັກເທເວດ ເປັນທັບທີ 3

4. ກົມໝື່ນສຸຣິນທອນຣັກ ເປັນທັບທີ 4 ແລະເປັນຜູ້ບັນຊາການທັບທັງ 3 ນັ້ນດ້ວຍ.

ເຖິງເດືອນ 5 ແຮມ ຄ.ສ 1827 (ຈຸລະສັກກະລາດ 1189) ກອງທັບ

ຫຼວງຂອງ ສະຫຍາມ ກໍຍົກມາເຖິງເມືອງນະຄອນລາຊະສີມາ ແລະເວລານັ້ນ ເກີດພະຍາດໄຂ້ປ່ວງຂຶ້ນໃນ ກອງທັບຫຼວງ ຝ່າຍສະຫຍາມຈຶ່ງເສຍໄພ່ພົນ ເປັນອັນມາກ.

## ກອງທັບພະຍາຣາຊະສຸພາວະດີ ພົບກັບກອງທັບເຈົ້າໂຖງ ທີ່ເມືອງພິມາຍ

ຝ່າຍພະຍາຣາຊະສຸພາວະດີແມ່ທັບໜ້າຂອງສະຫຍາມຄຸມທະຫານ 2.000 ຄົນຈະຍົກໄປທາງເມືອງຈຳປາສັກ. ພໍມາເຖິງເມືອງພິມາຍກໍໄດ້ພົບກັບກອງທັບຂອງເຈົ້າໂຖງຫຼານສົມເດັດພະເຈົ້າອະນຸ, ກອງທັບທັງສອງໄດ້ຕໍ່ສູ້ກັນຢູ່ຫຼາຍເວລາ ກອງທັບຂອງເຈົ້າໂຖງມີພົນໜ້ອຍກວ່າ ເຫັນຈະຕ້ານທານໄວ້ບໍ່ໄດ້ກໍປະຖ້າຍໜີໄປທາງເມືອງອຸບົນ.

ພະຍາຣາຊະສຸພາວະດີ ຈຶ່ງຍົກທັບຂຶ້ນມາເຖິງເມືອງຂອນແກ່ນແລ້ວ ມີໜັງສືໄປຫາເຈົ້າອຸປະຮາດຕິດສະທີ່ຕັ້ງຢູ່ ເມືອງສຸວັນນະພູມ ໃຈຄວາມໃນໜັງສືນັ້ນວ່າ "ເມື່ອເຈົ້າມະຫາອຸປະຮາດລົງໄປກຸງເທບໄດ້ເວົ້າໄວ້ແຕ່ກ່ອນວ່າ ພະເຈົ້າອະນຸຈະເປັນກະບົດ ການນັ້ນກໍສົມຈິງ. ບັດນີ້ເຮົາຍົກຂຶ້ນມາກໍສົມຄະເນແລ້ວໃຫ້ເຈົ້າມະຫາອຸປະຮາດໄປຕີວຽງຈັນໃຫ້ໄດ້ ທັບຫຼວງຈະໄດ້ຂຶ້ນໄປໂດຍສະດວກແລະເຮົາກໍຈະຍົກໜຸນຂຶ້ນໄປ"

ຝ່າຍເຈົ້າມະຫາອຸປະຮາດ ຄັນໄດ້ຮັບໜັງສືອ່ານເບິ່ງເນື້ອຄວາມແລ້ວ ກໍສົ່ງໜັງສືນັ້ນມາ ຖວາຍພະເຈົ້າອະນຸທີ່ຖ້າຍພູເຂົ້າສານ ສົມເດັດພະເຈົ້າອະນຸໄດ້ຊາບໜັງສືນັ້ນແລ້ວ ກໍມີຄວາມສົງໄສໃນພະໄທເປັນອັນມາກ.

ການທີ່ພະຍາຣາຊະສຸພາວະດີ ມີໜັງສືມາຫາເຈົ້າອຸປະຮາດນັ້ນ ຈະ

ເປັນກົນອຸບາຍໃຫ້ພະເຈົ້າອະນຸກັບເຈົ້າອຸປະຣາດແຕກກັນ ຫຼື ຈະໄດ້ເວົ້າກັນໄວ້ເປັນຄວາມລັບຈຶ່ງກໍບໍ່ຊາບ ແຕ່ສັນນິດຖານ ວ່າຄົງຈະເວົ້າກັນໄວ້ແທ້ ເພາະເວລາເລີກສົງຄາມແລ້ວເຈົ້າອຸປະຣາດກໍບໍ່ຖືກກັກຂັງ ແຕ່ການທີ່ເຈົ້າອຸປະຣາດເອົາໜັງສືນັ້ນສົ່ງໄປຖວາຍເຈົ້າພະເຈົ້າອະນຸ ກໍເພື່ອໃຫ້ເຈົ້າອະນຸຫາຍຄວາມສົງໄສໃນຕົນ ແລະເພື່ອໃຫ້ເຫັນວ່າເປັນອຸບາຍຂອງສະຫຍາມທີ່ຍົວະເຍົ້າໃຫ້ແຕກກັນ ດ້ວຍວ່າເຈົ້າອຸປະຣາດຈະປິດບັງຄວາມນີ້ໄວ້ກໍບໍ່ໄດ້ ເພາະບຸດເຂີຍຂອງຕົນເຊິ່ງຢູ່ໃນທີ່ນັ້ນເປັນພະໂອລົດຂອງພະເຈົ້າອະນຸດ້ວຍ.

ເຈົ້າມະຫາອຸປະຣາດຄັນສົ່ງໜັງສືມາຖວາຍ ພະເຈົ້າອະນຸແລ້ວກໍຖອຍທັບຂຶ້ນມາຕັ້ງຢູ່ເມືອງໜອງຫານ.

## ພະຍາຣາຊະສຸພາວະດີຕີຖ້າຍເມືອງຍະໂສທອນ

ຝ່າຍພະຍາຣາຊະສຸພາວະດີ ຄອຍຟັງຂ່າວເຈົ້າອຸປະຣາດຢູ່ທີ່ເມືອງຂອນແກ່ນ ເມື່ອບໍ່ເຫັນຕອບໜັງສືຈຶ່ງແຕ່ງຄົນໄປສືບເບິ່ງ ກໍໄດ້ຂ່າວວ່າເຈົ້າອຸປະຣາດຍົກມາທາງເມືອງໜອງຫານແລ້ວ ພະຍາຣາຊະສຸພາວະດີຈຶ່ງຍົກລົງໄປທາງເມືອງຍະໂສທອນ ໄດ້ປະທະກັບກອງທະຫານຂອງອຸປະຣາດເມືອງຍະໂສທອນ, ພວກກອງທະຫານເມືອງຍະໂສທອນໄດ້ຕໍ່ສູ້ຢ່າງແຂງແຮງ ແຕ່ສຸດທ້າຍເຫັນຈະຕ້ານທານບໍ່ໄຫວ ພວກແມ່ທັບນາຍກອງຈຶ່ງປະຖ້າຍໜີ. ພະຍາຣາຊະສຸພາວະດີເຂົ້າເມືອງຍະໂສທອນໄດ້ ກໍໃຫ້ຈັບເອົາລູກເມຍຍາດພີ່ນ້ອງຂອງອຸປະຣາດແລະລາຊະວົງເມືອງຍະໂສທອນ100 ຄົນປາຍ ມາເຜົາໄຟທັງເປັນ ຢູ່ແຄມຝັ່ງແມ່ນ້ຳຊີ.

## ສະຫຍາມຕີຄ້າຍເມືອງໜອງບົວລຳພູ

ຝ່າຍແມ່ທັບໃຫຍ່ຂອງສະຫຍາມ ຊຶ່ງຕັ້ງຢູ່ເມືອງນະຄອນລາຊະສີມາ ຈຶ່ງແຕ່ງໃຫ້ພະຍາຈ່າແສນຍາກອນ ພະຍາກະລາໂຫມຣາຊະເສນາ ພະຍາພິໄຊຍະບຸຣິນທະຣາ ພະຍານະຣົງຄະວິໄຊ ພະຍາມະຫາໂຍທາ, ທັງ 5 ທັບ ກັບກອງທັບໜ່ອມເຈົ້າຂຸນເນນ ຄຸມຄົນໄທດເປັນກອງໂຈນ ຣວມພົນໄດ້ 8.400 ຄົນ ຍົກລ່ວງໜ້າຂຶ້ນມາຕີຄ້າຍໜອງບົວລຳພູ. ກອງທັບສະຫຍາມທັງ 6 ກອງໄດ້ ຍົກເຂົ້າຕີຄ້າຍພະຍານະລິນແຕ່ເດືອນທີກຂຶ້ນ 6 ຄ່ຳ, ພະຍານະລິນໄດ້ຕໍ່ສູ້ຢ່າງແຂງແຮງບໍ່ຍອມປະຄ້າຍ ພວກທະຫານຝ່າຍສະຫຍາມຖືກອາວຸດລົ້ມຕາຍເປັນອັນມາກ ພະຍາກຽດແມ່ທັບຄົນນຶ່ງຂອງສະຫຍາມຖືກປືນຕາຍແຕ່ເນື່ອງຈາກຄ້າຍຂອງພະຍານະລິນມີພົນແຕ່ພຽງ 3.000 ຄົນ ຈຶ່ງເຫຼືອວິໄສທີ່ຈະປ້ອງກັນໄວ້ໄດ້ ດັ່ງນັ້ນເຖິງວັນແຮມ 9 ຄ່ຳ ກອງທັບສະຫຍາມກໍຕີຄ້າຍແຕກ ແລະຈັບພະຍານະລິນໄດ້ ແລ້ວນຳໄປສະເໜີຕໍ່ແມ່ທັບໃຫຍ່ຝ່າຍສະຫຍາມໆ ຖາມວ່າ "ຈະຍອມອ່ອນນ້ອມຫຼືບໍ່? ຖ້າຍອມກໍຈະລ້ຽງໄວ້" ພະຍານະລິນບໍ່ຍອມອ່ອນນ້ອມຂໍຕາຍເສຍດີກວ່າ ແມ່ທັບສະຫຍາມຈຶ່ງໃຫ້ເອົາຊ້າງແທງເສຍ. ເມື່ອກອງທັບສະຫຍາມຕີຄ້າຍໜອງບົວລຳພູໄດ້ແລ້ວ ກໍຍົກເລີຍມາຕັ້ງຢູ່ທົ່ງສົ້ມປ່ອຍຫ່າງຈາກຊ່ອງເຂົ້າສານປະມານ 10 ກິໂລແມັດ ທັບເຈົ້າລາຊະວົງຖອຍ ຝ່າຍສະຫຍາມທັງ 3 ທັບຍົກຂຶ້ນມາເຖິງເມືອງຫຼົ່ມສັກກໍໄດ້ເຂົ້າປະທະກັບກອງທັບຂອງເຈົ້າລາຊະວົງ. ເຈົ້າລາຊະວົງເຫັນວ່າຈະປ້ອງກັນໄວ້ບໍ່ໄດ້ຈຶ່ງປະເມືອງຫຼົ່ມສັກໜີລົງຊ່ອງພູເຂົ້າສານ ຫາພະບິດາ. ເມື່ອພະເຈົ້າອະນຸ ໄດ້ຊາບວ່າຄ້າຍໜອງບົວລຳພູແຕກແລ້ວ ກໍເສຍພະໄທຈຶ່ງມີອາດຍາໃຫ້ພະຍາສຸໂພກັບພະຊານິນເປັນນາຍທັບຢູ່ຮັກສາຄ້າຍພູເຂົ້າສານ ສ່ວນພະອົງກັບເຈົ້າລາຊະວົງກໍຟ້າວສະເດັດກັບມາວຽງຈັນ.

## ກອງທັບສະຫຍາມ 3 ກອງຖືກລ້ອມ

ຝ່າຍພະຍາສຸໂພ ຄັນໄດ້ຊາບວ່າກອງທັບສະຫຍາມຍົກມາຕັ້ງຢູ່ທົ່ງສົ້ມປ່ອຍ ຈຶ່ງມີໜັງສືໄປຫາພະຍາຊຽງສາທີ່ຕັ້ງຄ້າຍຢູ່ສະໜົມແລະພະຍາກອງຄໍາທີ່ຕັ້ງຄ້າຍຢູ່ຊ່ອງງົວແຕກໃຫ້ຍົກມາສົມທົບກັນທີ່ທົ່ງສົ້ມປ່ອຍ. ເມື່ອນັດກັນພ້ອມແລ້ວ ກອງທັບລາວທັງສາມກອງກໍຍົກມາຕັ້ງຄ້າຍລ້ອມກອງທັບສະຫຍາມໄວ້ ພວກທະຫານສະຫຍາມບໍ່ກ້າອອກຮົບກາງເດີນກໍພາກັນລີ້ຢູ່ໃນຄ້າຍເຖິງ 7 ວັນ ອຶດຢາກອາຫານເປັນອັນມາກເກືອບຈະແຕກຢູ່ແລ້ວ. ເຖິງວັນສຸກເດືອນ 6 ແຮມ 1 ຄໍ່າ ກອງທັບກົມໝື່ນນະເລດໂຍທີຍົກຂຶ້ນໄປທັນຫວັງຈະເຂົ້າຊ່ວຍພວກຂອງຕົນກໍຖືກກອງທັບລາວລ້ອມເຂົ້າໄວ້ອີກ ເວລານັ້ນກອງທັບຂອງກົມໝື່ນເສນີບໍຣິຮັກຂຶ້ນໄປເຖິງ ກໍຊ່ວຍກັນຕີແກ້ເອົາກົມໝື່ນນະເລດໂຍທີອອກຈາກທີ່ລ້ອມໄດ້. ຝ່າຍກອງທັບລາວຕ່າວໜ້າມາສູ້ກອງທັບສະຫຍາມທີ່ມາຊ່ອຍກັນທັງ 2 ກອງຢູ່, ຈໍານວນທະຫານທີ່ລ້ອມຄ້າຍສະຫຍາມໄວ້ເບົາບາງລົງ ພວກທັບສະຫຍາມທັງ 3 ທັບນັ້ນຈຶ່ງຕີແຫກອອກໄດ້ໃນມື້ເດືອນຫົກແຮມ 3 ຄໍ່າ, ຕໍ່ແຕ່ນັ້ນມາກອງທັບລາວກໍແຍກກັນໜີໄປຄົນລະທາງ.

## ພະເຈົ້າອະນຸສະເດັດໜີຈາກວຽງຈັນຄັ້ງທີ 1

ຝ່າຍສົມເດັດພະເຈົ້າອະນຸ ຄັນໄດ້ຊາບຂ່າວວ່າຄ້າຍພະຍາສຸໂພທີ່ຊ່ອງພູເຂົາສານແຕກແລ້ວກໍກວາດເກັບເອົາເຂົ້າຂອງພໍທີ່ຈະເອົາໄປໄດ້ ແລະພະບໍລົມວົງສານຸວົງບຸດຫຼານສະເດັດລົງເຮືອໜີໄປເມືອງຫຍ້ານໍ້າ (ເມືອງແງ່ອານ)

ໃນມື້ເດືອນຫົກແຮມ 6 ຄໍ່າ. ຜູ່ທີ່ໄປຕາມສະເດັດມີ: ເຈົ້າລາຊະວົງ, ເຈົ້າສຸດທິສານ, ເຈົ້າໄຊຍະສານ, ເຈົ້າເສືອ, ເຈົ້າເຖື່ອນ, ເຈົ້າເໝັ້ນ, ເຈົ້າຊ້າງ, ເຈົ້າອື່ງຄໍາ, ເຈົ້າຂັດຕິຍະ, ເຈົ້າພຸດທະຊາດ, ເຈົ້າດິດສະພົງ, ເຈົ້າເຕ້,ເຈົ້າໜູຈິນ, ເຈົ້າສຸພັນ. ທັງ 14 ເຈົ້ານີ້ເປັນລາຊະໂອລົດ ຫຼານອີກ 4 ເປັນບຸດຂອງເຈົ້າມະຫາອຸປະຮາດຄື: ເຈົ້າເອບ, ເຈົ້າປານ ເຈົ້າສຸພົມ,ເຈົ້າອົ້ງ ແລະ ມານດາຂອງເຈົ້າອຸປະຮາດດ້ວຍ. ກ່ອນຈະສະເດັດໄປໄດ້ມີພະລາຊະອາຍາສັ່ງໃຫ້ຂ້າພະອະນຸຊິດພິທັກ ກັບພວກມະຫາດເລັກ ທີ່ເປັນຄົນສະຫຍາມເສຍໝົດ.

ເມື່ອພະເຈົ້າອະນຸສະເດັດໜີໄປແລ້ວ ໄດ້ສາມວັນທັບຫຼວງຂອງສະຫຍາມກໍຍົກມາເຖິງບ້ານພັນພ້າວ. ກົມໝື່ນມະເລດໂຍທີ ກັບກົມໝື່ນເສນີບໍລິລັກຈຶ່ງຍົກພົນຂ້າມມາວຽງຈັນ ທ່ຽວກວາດເກັບເອົາສົມບັດເຂົ້າຂອງຕ່າງໆໃນເມືອງຈົນກ້ຽງ ແລ້ວໃຫ້ທະຫານຕັດຕົ້ນໝາກຮາກໄມ້ທີ່ມີຜົນເສຍໝົດ ເອົາໄຟຈູດສຸມເມືອງເສຍແລະໃຫ້ມ້າງເພກໍາແພງເມືອງລົງໝົດກ້ຽງ.

ໃນເວລານັ້ນກອງທັບຫົວເມືອງຕ່າງໆທີ່ມາຊ່ອຍຝ່າຍສະຫຍາມຄືເມືອງຊຽງໃໝ່ ເມືອງແພ່ ເມືອງນ່ານ ເມືອງຫຼວງພະບາງ ຊຶ່ງມີກໍາລັງພົນເຖິງ 20.000 ຄົນກໍມາເຖິງຄ້າຍພັນພ້າວພ້ອມໆກັນ.

## ເຈົ້າອຸປະຮາດເຂົ້າຫາແມ່ທັບສະຫຍາມ

ຝ່າຍເຈົ້າອຸປະຮາດຕິດສະທີຖອຍມາຕັ້ງຢູ່ເມືອງໜອງຫານນັ້ນ ຄັນໄດ້ຊາບຂ່າວວ່າພະເຈົ້າອະນຸສະເດັດໜີໄປແລ້ວ ກໍພານາຍໝວດນາຍກອງມາອ່ອນນ້ອມຕໍ່ແມ່ທັບສະຫຍາມຢູ່ຄ້າຍພັນພ້າວແລະທູນແມ່ທັບຝ່າຍ ສະຫຍາມ

ວ່າ "ເດີມພະເຈົ້າອະນຸຄິດຈະທຳການກູ້ອິດສະລະພາບນັ້ນຕົນກໍໄດ້ຄັດຄ້ານຫ້າມວ່າຫຼາຍເທື່ອຫຼາຍທີ ແຕ່ພະເຈົ້າອະນຸບໍ່ຟັງ ຈຶ່ງຈຳເປັນໄດ້ປະຕິບັດຕາມພໍໃຫ້ພົ້ນໄພ ຄວາມຂໍ້ນີ້ກໍໄດ້ແຈ້ງໃຫ້ພະສຸຣິຍະພັກດີຊາບແລ້ວ" ເມື່ອແມ່ທັບສະຫຍາມໄດ້ຊາບດັ່ງນັ້ນ ຈຶ່ງໃຫ້ອຸປະຣາດຖືນ້ຳພະພິພັດສັດຕະຍາແລ້ວໃຫ້ໄປຫາໄລ່ກວາດເອົາຄອບຄົວລາວມາໂຮມໄວ້.



*ວຽງຈັນຮ້າງ*

*ຮູບແຕ້ມ ຂອງ E.Therond ອີງຕາມການຮ່າງຂອງ Louis Delaporte*

*ຮູບຈາກປຶ້ມ A Pictorial Journey o n the Old Mekong:Cambodia, Laos and Yunnan, White Lotus Press, 1998*




**ແຜນທີ່ສແດງການປົກຄອງຫົວເມືອງລາວຂອງສຍາມ**

**ຈາກປຶ້ມ "*ພົງສາວະດານລາວ*" ໂດຍ ອາຈານມະຫາສິລາ ວີຣະວົງ**

**ໜ້າ 140**

ຕອນທີ 5

## ລາຍງານແມ່ທັບສະຫຍາມ ເລື່ອງຕີເມືອງວຽງຈັນ

ກົມພະຣາຊະວັງບໍວອນສະຖານມົງຄົນແມ່ທັບໃຫຍ່ຝ່າຍສະຫຍາມ ໄດ້ມີລາຍງານໄປທູນ ພະເຈົ້າແຜ່ນດິນສະຫຍາມວ່າ: ລາຊະການຂຶ້ນມາຕີເມືອງວຽງຈັນຄັ້ງນີ້ ຄັນມາເຖິງໄດ້ເມືອງວຽງຈັນແລ້ວ ພິເຄາະດູທີ່ທ່າຊຶ່ງມັນຈະຮັບຮອງກຳລັງໄພ່ພົນແລະຈັດແຈງບ້ານເມືອງໄວ້ເສຽປຽບມັນມາກນັກ ໄດ້ປຽບມັນຢູ່ 2 ຢ່າງຄື ຄົນທີ່ຈະທຳການໃຫ້ໄດ້ໃຈມັນມີນ້ອຍຄົນຢ່າງນຶ່ງ ກັບມັນບໍ່ເຜົາສະບຽງຕາມໄລຍະທາງເສຽຢ່າງນຶ່ງ. ສ່ວນນາຍທັບນາຍກອງທະຫານຝ່າຍເຮົາກໍໄດ້ທຳລາຊະການສະໜອງພະເດດພະຄຸນຢູ່ແລ ແຕ່ຫາກວ່າບໍ່ໄດ້ດ້ວຍຝີມືທະຫານໄດ້ດ້ວຍບາລະມີພະເຈົ້າຢູ່ຫົວ; ຖ້າລາຊະການລະໄວ້ທຳໃນປີໜ້າແລ້ວຈະລຳບາກຍາກຍິ່ງນັກ. ຝ່າຍທັບພຸງດຳ 5 ຫົວເມືອງແລະຫົວເມືອງຫຼວງພະບາງນັ້ນຖ້າທັບຫຼວງບໍ່ໄດ້ວຽງຈັນ ກໍບໍ່ມີຜູ້ໃດມາເຖິງວຽງຈັນມີແຕ່ຈະຄອຍຖ້າເກັບເອົາຄອບຄົວຊ້າງມ້າຢູ່ຮິມເຂດແດນ ຄອຍທີໄຫວພິບເປັນ 2 ເງື່ອນ ແຕ່ບັດນີ້ໃຊ້ສອຍໄດ້ເປັນປົກກະຕິ ຕ້ອງຊູ້ບ້າງ ເລົ່າໂລມບ້າງແຕ່ຍັງດູນ້ຳໃຈທັງ 6 ຫົວເມືອງຢູ່ ເມືອງຫຼວງພະບາງອ່ອນນັກ ເມືອງຊຽງໃໝ່, ເມືອງລຳພູນ, ສອງເມືອງນີ້ກໍສຸດແຕ່ເມືອງລະຄອນ ເມືອງແພ່ນັ້ນຕາມທຳນຽມ, ແຕ່ເມືອງນ່ານນັ້ນການເດີນໄຫວຢູ່ ພະຍາລະຄອນຄົນນີ້ອັດທະຍາໄສມາກສົມຄວນ ຈະຊຸບລ້ຽງເຫັນເປັນລາຊະການໄດ້ຍືດຍາວແລະຈົດໝາຍລາຊະການທີໂປດໃຫ້ພະຍາວາຣີຂຶ້ນມາຄ້າຍມ່ວງສອງກ້ອນນັ້ນ ຈະໄດ້ຕາມພະລາຊະດຳລິບ້າງບໍ່ໄດ້ບ້າງ ການຊຶ່ງຈະຈັດບ້ານເມືອງຄັ້ງນີ້ປຸ່ມປັນຍາ

ເຕັມທີ ເປັນທີ່ຍາກ ຈະຕີວຽງຈັນຖວາຍສັກ 2 ເມືອງ 3 ເມືອງເຫັນຈະງ່າຍກວ່າ ບັດນີ້ຈະຕ້ອງຜ່ອນຜັນໄປຕາມການ ຕີບ້ານເມືອງຄອບຄົວໄດ້ເທົ່າໃດກໍບໍ່ມີກຳໄລ ທຳກັບບ້ານເມືອງໄພ່ພົນຂອງເຮົາເອງທັ້ງນັ້ນ ແຕ່ຈະຄິດຖ່າຍເທເອົາຄົນລົງໄປຖ່ວງໄວ້ໃນຫົວເມືອງໃກ້ກຸງ ແລະໃນກຸງໃຫ້ຈິງມາກ ຝ່າຍຫົວເມືອງໃນລາວເມືອງຂະເໝນປ່າດົງ ເຈົ້າເມືອງ ແລະບຸດຫຼານທ້າວເພຍຜູ້ໃຫຍ່ທັງຫຼາຍລົ້ມຕາຍຂາດເຊື້ອສາຍເສຍເປັນອັນມາກໄພ່ພົນເມືອງຈະໄດ້ເຄິ່ງນຶ່ງບ້າງ ກວ່າເຄິ່ງນຶ່ງບ້າງ ບໍ່ເຖິງເຄິ່ງນຶ່ງບ້າງ ຈະໃຊ້ໄປມາເຖິງກັນລະຍະທາງໄກ ກວ່າຈະໄດ້ຮູ້ລາຊະການກໍຊ້າເຫດສະການກໍເປັນລະດູຝົນຈະເດີນໄປມາຫາກັນບໍ່ໄດ້ໄດ້ ແລ້ວໄດ້ມີໝາຍບັງຄັບທອດທຸລະລົງໄປໃຫ້ພະຍາຣາຊະສຸພາວະດີປະຈຳຢູ່ແຮມປີ ຈັດແຈງເມືອງຈຳປາສັກແລະເມືອງລາວ, ເມືອງຂະເໝນປ່າດົງ, ທາງເມືອງຫຼົ່ມສັກເມືອງເລີຍນັ້ນ ຈະໃຫ້ພະຍາເພັດພິໄຊ ກັບພະຍາສົມບັດທິບານເປັນຜູ້ໄປຈັດ ຈະໃຫ້ທັນໃນລະດູຝົນຄວາມໄຂ້ມາກ ແລະລາຊະການເມືອງວຽງຈັນ ເມື່ອເຈົ້າອະນຸໜີອອກຈາກວຽງຈັນ ແມ່ນວັນດຽວກັນກັບວັນກອງໜ້າຕີຄ້າຍບ້ານສົ້ມປ່ອຍແຕກ ກວ່າກອງທັບຈະຂຶ້ນໄປເຖິງວຽງຈັນລະຍະທາງເຖິງ 5 ວັນໜີທ່າງໄດ້ຖະນັດໄດ້ເມືອງວຽງຈັນແຕ່ເປືອກ ຄອບຄົວກໍອົບພະຍົບໜີໄປຈົນສິ້ນ ບັດນີ້ ຄອບຄົວກໍຍັງປົນກັນຢູ່ກັບຄົວເມືອງໂຄລາດເມືອງສະລະບຸລີ ເມືອງຫຼົ່ມສັກ ເມືອງລາວ ເມືອງຂະເໝນຝ່າຍຕາເວັນອອກ ການທີ່ຈະທຳໃຫ້ແລ້ວໂດຍໄວນັ້ນບໍ່ໄດ້, ຖ້າກອງທັບກຸງໄປຕາມ ຄອບຄົວໜ້ອຍຄົນເຂົາກໍຕໍ່ສູ້ ຖ້າໄປຫຼາຍກໍໜີເສຍບ້າງ ໄດ້ມາບ້າງ ຄົວທີ່ນາຍທັບນາຍກອງໄດ້ມາ 200-300 ຄົນຈະເລືອກເອົາສະກັນສັກ 9 ຄົນ 10 ຄົນກໍບໍ່ໄດ້ ຖ້າພວກພຸງດຳໄປເກັ່ງກ່ອມເຖິງໄປໜ້ອຍກໍໄດ້ຄົວມາຫຼາຍ ເພາະເປັນລາວດ້ວຍກັນ ພວກຄົວບໍ່ສູ້ຮົບ ໄດ້ສະກັນກໍຫຼາຍຄັນຈະຄິດໃຫ້ຕັ້ງເມືອງວຽງຈັນໄວ້ໃຫ້ເກັ່ງກ່ອມກໍບໍ່ມີຜູ້ໃດຢູ່ຮັກສາ, ຈະໃຫ້ແຕ່ກຳລັງເມືອງຫຼວງພະບາງຢູ່ຮັກສາແລະເກັ່ງກ່ອມ

ເອົາພວກຄົວກໍຍັງບໍ່ໄດ້ຕົວ ເຈົ້າອະນຸ ເຈົ້າຈຳປາສັກ ເຈົ້າສຸດທິສານ ເຈົ້າລາຊະວົງ ເຈົ້າໂຖງ ເຫັນວ່າ ເມືອງຫຼວງພະບາງ ເມືອງດຽວຈະທຳບໍ່ໄດ້ຈຶ່ງໃຫ້ມ້າງເພວຽງຈັນເສຽໃຫ້ໝົດອາໄລ ຄອບຄົວວຽງຈັນກໍຫຼົບໜີໄປທາງເມືອງລະຄອນ ເມືອງຊຽງໃໝ່ ເມືອງລຳພູນ ເມືອງແພ່ ເມືອນ່ານ ເມືອງຫຼວງພະບາງເປັນອັນມາກ ໄປເຖິງບ້ານເມືອງແລ້ວ ກໍມີບ້າງ ຄັນຈະຊຳລະເອົາຄອບຄົວຄືນກໍຈະຕ້ອງກົດຂີ່ກັນເຖິງໜັກຈຶ່ງຈະໄດ້ ຝ່າຍຫົວເມືອງເຮົາກໍຈະຊ້ຳຊອກເສຽໃຈ ແຕ່ຄິດເຫັນວ່າ ປະມານຄົນວຽງຈັນແລະເມືອງຂຶ້ນກັບເມືອງວຽງຈັນ ສະກັນປະມານ 20.000 ຄົນປາຍ ຖ້າບ້ານເມືອງເປັນປົກກະຕິຈະເກນທັບລົງໄປກຸງຈະໄດ້ແຕ່ພຽງ 8000 - 9000 ເສດ ກຳລັງກອງທັບສະຫຍາມຈະທຳເອົາຄົວແລະສະກັນໃຫ້ໄດ້ 10.000 ຄົນ ຈົນເດືອນ 5 ກໍບໍ່ສຳເລັດ ເຖິງວ່າຈະທຳໄດ້ໃນລະຫວ່າງເມືອງນະຄອນລາຊະສີມາ ກໍເສຽຫາຍມາກ ແລະຂາດສະບຽງອາຫານ ທັງບໍ່ໄດ້ທຳໄຮ່ທຳນາ ຈະເດີນຄົວລົງໄປໃຫ້ໝົດໃນລະດູຝົນບໍ່ໄດ້ ຈະຢູ່ແຮມປີຈົນລະດູແລ້ງເຂົ້າກິນຕາມທາງກໍຈະໝົດ ແຕ່ກອງທັບຈະກິນກໍບໍ່ພໍ ທັງຫົວເມືອງກໍຈະເຫັນກຳລັງທັບຂອງກຸງເສຽໝົດ, ກອງທັບສະຫຍາມເຮົາເຫັນໃຈກັນຄັ້ງນີ້ຮັກໃຄ່ຂ້າງເຮົາໜັກໜາ ທັບກຸງ ແລະ ຫົວເມືອງກໍປ່ວຍເຈັບອຶດຢາກມາຕາມທາງ ແຕ່ຈະຄິດເອົາສະກັນເມືອງວຽງຈັນລົງໄປໄວ້ໃນກຸງໃຫ້ໄດ້ສັກ 10.000 ຕິດໄປຂ້າງເມືອງປ່າດົງ ແລະທາງເມືອງຫຼົ່ມສັກເໝືອນບິ່ງຝາກໄວ້ ຈະຄິດເອົາຕ່າງຫ້າກນອກຈາກ 10.000 ຄົນ ຈຶ່ງຕ້ອງກົດຫົວເມືອງ 6 ເມືອງວ່າ ມາບໍ່ທັນ ທັບຫຼວງຕີເອົາວຽງຈັນຕາມກຳໜົດຢູ່ໃນລະຫວ່າງທັບມີໂທດ ພະຍານະຄອນລຳປາງ ພະຍາອຸປະຮາດຊຽງໃໝ່ອຸປະຮາດລຳພູນ ພະຍານ່ານ ຫົວໜ້າເມືອງແພ່ ອຸປະຮາດເມືອງຫຼວງພະບາງຈຶ່ງທຳເລື່ອງລາວສາລະພາບຂໍທຳການແກ້ຕົວຈະຕິດຕາມຈັບເຈົ້າອະນຸ ເຈົ້າຈຳປາສັກ ເຈົ້າລາຊະວົງ ເຈົ້າສຸດທິສານ ເຈົ້າໂຖງກັບບຸດພັນລະຍາຍາດພີ່

ນ້ອງມາຖວາຍໃຫ້ໄດ້ ເຖິງແມ່ນບໍ່ໄດ້ຕົວ ກໍບໍ່ໃຫ້ມາຕັ້ງເປັນສົງຄາມໄດ້ອີກ ແລ້ວຈະກວາດຄອບຄົວມາຖວາຍໃຫ້ໄດ້ສະກັນ 10.000 ທັງຄອບຄົວ ເປັນ 50.000 ຄົນ ຂໍແຕ່ກອງທັບກຸງໄວ້ສັກ 1000 ຫຼື 500 ຄົນ. ນາຍສັກ 2 ນາຍ ພໍຈະໄດ້ຕັດສິນວ່າກ່າວ ບໍ່ໃຫ້ຫົວເມືອງວິວາດກັນ ແຕ່ທັບພະຍານະຄອນລຳປາງ ພະຍາອຸປະຮາດຊຽງໃໝ່ ອຸປະຮາດເມືອງລຳພູນ ພະຍານ່ານ ຫົວໜ້າເມືອງແພ່ ອຸປະຮາດເມືອງຫຼວງພະບາງ ນາຍໃຫຍ່ 14.011 ຄົນຈະຢູ່ຈັດຄອບຄົວວຽງຈັນຈົນສຳເລັດ ຂໍໃຫ້ທັບຫຼວງກັບຄືນກຸງເທບກ່ອນ ຄອບຄົວນັ້ນຈະຈັດໃຫ້ທັນທັບຫຼວງສ່ວນນຶ່ງ, ຈະສົ່ງໃນລະດູແລ້ງສອງສ່ວນ; ການຍົກທັບຫຼວງຂຶ້ນໄປຄາວນີ້ ຕັ້ງໃຈທຳລາຊະການສະໜອງພະເດດພະຄຸນຄ້າງປີ ບໍ່ຄິດເຫັນແກ່ເມື່ອຍຍາກ ແຕ່ຄົວທີ່ນາຍທັບນາຍກອງໄດ້ແລ້ວ ແລະຄົວທີກຫົວເມືອງຈະສົ່ງລົງໄປ. ສະບຽງຕາມເສັ້ນທາງກຳເກືອບຈະຫວຸດຫວິດ ຂໍໃຫ້ຈັດຂ້າຫຼວງຂຶ້ນມາຊ່ອຍ ເຈົ້າພະຍາພົນເທບ ຖ່າຍສະບຽງຂຶ້ນມາຮັບຄອບຄົວພຽງເມືອງບົວຊຸມໄຊບາດານ. ຖ້າລາຊະການຕີພະຍາຊຽງສາແລະເມືອງສະກົນເປັນທີ່ໄວ້ໃຈໄດ້ແລ້ວ ທັບຫຼວງຈະກັບໄດ້ ຈະໄດ້ລົງມາເຝົ້າໃນກາງເດືອນ 8 ແລະ ລາຍການຄອບຄົວກັບສິ່ງຂອງ ຊຶ່ງໄດ້ໃນເມືອງວຽງຈັນ ໃບບອກແລະທາງວ່າວມີລົງມາຄັ້ງນີ້ ເອົາເປັນແນ່ຍັງບໍ່ທັນໄດ້ ເປັນການປະມານ ຍັງໃຫ້ຊຳລະສືບສາວຫາຕໍ່ໄປອີກຢູ່ ຖ້າໄດ້ມາກນ້ອຍເທົ່າໃດ ຈະສົ່ງລົງມາຖວາຍໃຫ້ໝົດ. ອັນນຶ່ງ ຊ້າງຊຶ່ງບັນທຸກດິນດຳໃຫ້ນາຍສັກມະຫາດເລັກ ກັບຈະໝື່ນທິບເສນາຄຸມລົງມາ 110 ເຊືອກນັ້ນ ເປັນຊ້າງບໍ່ສູ້ງາມ ໃຫ້ກົມໝື່ນຮັກສະຣົນນະເລດຮັບເອົາຊ້າງ ແລະຄົນລ້ຽງໄວ້ ຄັ້ງນີ້ ຈະຫາຊ້າງລົງມາຖວາຍໃຊ້ລາຊະການໃຫ້ໄດ້ສັກ 2.000 ຕົວ, ແຕ່ມ້ານັ້ນຍັງນ້ອຍໜັກ ຍັງຈະຫາອີກຕໍ່ໄປຢູ່, ປືນໃຫຍ່ເມືອງວຽງຈັນນັ້ນຈະບັນທຸກຊ້າງລົງໄປກໍບໍ່ໄດ້ ຈະຊັກລາກກໍເປັນລະດູຝົນ ຮູບຮ່າງບໍ່ງາມ ຄ້າຍກັບທຽນເຂົ້າວັດສາ ຈະໄດ້ທຳລາຍຫຼອມເອົາແຕ່

ທອງ(ຄຳ) ລົງໄປ, ສ່ວນຄົວນັ້ນຈະໃຫ້ເດີນຕໍ່ເນື່ອງກັນລົງມາ ຕັ້ງແຕ່ວັນນາຍສັກລົງມາແລ້ວ ແລະນາຍທັບນາຍກອງຂອງເຮົາຄັ້ງນີ້ ທີ່ດີກໍມີບ້າງ ແຕ່ມີໜ້ອຍ ຖ້າຈະເອົາໂທດຕາມໄອຍະການເສິກກໍຈະເປືອງຫຼາຍ ອັນນຶ່ງພະພຸດທະຮູບສຳລັບເມືອງວຽງຈັນ ພະບາງຫາຍໄປ ວ່າຂ້າພະຄົງເອົາໄປຝັງເສຽ ສືບຫາຍັງບໍ່ໄດ້ ໄດ້ແຕ່ພະເສີມ ພະໃສ ພະສຸກ ພະແຊກຄຳ ພະແກ່ນຈັນ ພະສົງນ້ຳ ພະເງິນຫຼໍ່ ພະເງິນບຸຮວມ 9 ອົງ ແຕ່ຈະເອົາລົງໄປກຸງເທບ ໄດ້ແຕ່ພະແຊ່ຄຳອົງ 1 ໄດ້ພະສາລີລິກະທາດບັນຈຸໄວ້ໃນພະແຊ່ຄຳ 100 ອົງ ກັບໄດ້ພະເຈົ້າສັນສົ້ມມໍ ໜ້າຕັກກ້ວາງ 20 ນິ້ວ ອົງນຶ່ງ ພະນາກສະຫວາດໜ້າຕັກ 10 ນິ້ວ ໜັກ 17 ຊັ່ງ ອົງນຶ່ງ ພະນາກສະຫວາດໜ້າຕັກ 8 ນິ້ວ ໜັກ 3 ຊັ່ງ 10 ຕຳລຶງອົງນຶ່ງ ພະນາກປົກສີລາບິຄວາຍ ໜ້າຕັກ 5 ນິ້ວອົງນຶ່ງ; ສ່ວນພະພຸດທະຮູບທີ່ຈະສົ່ງລົງມາບໍ່ໄດ້ນັ້ນ ໄດ້ໃຫ້ກໍ່ເຈດີໃສ່ໄວ້ທີ່ຄ້າຍຫຼວງເມືອງພັນພ້າວເໜືອວັດ. ອິດ(ດິນຈີ່)ທີ່ເອົາມາກໍ່ນັ້ນ ໄດ້ເກນເອົານຳໄພ່ພົນຄົນລະສອງກ້ອນແລ້ວຈາລຶກວ່າ: "ເຈດີປາບວຽງແລະຄວາມຊົ່ວອ້າຍອະນຸ" ໄວ້ໃນແຜ່ນສີລາໃຫ້ປາກົດຢູ່ຊົ່ວຟ້າ ແລະດິນ ຢ່າໃຫ້ຫົວເມືອງທັງປວງ ດູຢັ່ງຢ່າງກັນຕໍ່ໄປ.

ຄັນຈັດພາຍລົງໄປແລ້ວ ຈຶ່ງໃຫ້ກໍ່ພະເຈດີ ແລ້ວເຊີນເອົາພະເສີມຢູ່ວັດຍອດເຂົ້າແກ້ວມາບັນຈຸໄວ້ໃນເຈດີປາບວຽງ.




ແຜນທີ່ລາວ ສະໄໝແບ່ງເປັນ 3 ອານານຈັກລ້ານຊ້າງ

1. ອານາຈັກ ລ້ານຊ້ານຫຼວງພະບາງ

2. ອານາຈັກ ລ້ານຊ້າງວຽງຈັນ

3. ອານາຈັກ ຈຳປາສັກ

ຈາກປຶ້ມ ຄົວເຮືອນຂອ້ຳ-ເສີກຂີ້ຊ້າງ ເຫຼັ້ມ 2 ໂດຍ ສ.ຈຳປາ ພິມໂດຍ ມໍຣະດົກລາວ 1991

ຕອນທີ 6

## ທັບສະຫຍາມ ຕີນະຄອນຈຳປາສັກ

ຝ່າຍພະຍາຣາຊະສຸພາວະດີແມ່ທັບສະຫຍາມ ທີ່ຕັ້ງຢູ່ເມືອງຍະໂສທອນ ຄິດຈະຍົກໄປຕີເມືອງຈຳປາສັກ ເຈົ້າລາຊະບຸດ(ໂຍ້) ເຈົ້ານະຄອນຈຳປາສັກ ທີ່ຕັ້ງຄ້າຍຢູ່ເມືອງສີສະເກດໄດ້ແຈ້ງເຫດດັ່ງນັ້ນ ຈຶ່ງຍົກມາຕັ້ງຄ້າຍໃຫຍ່ຢູ່ເມືອງອຸບົນແລ້ວມີອາດຍາສັ່ງໃຫ້ ເຈົ້າປານ ກັບ ເຈົ້າສຸວັນຜູ້ນ້ອງ ຄຸມກອງທັບມາຕັ້ງຄ້າຍຮັບຢູ່ເມືອງຍະໂສທອນ ເຈົ້າປານ ກັບເຈົ້າສຸວັນ ຕັ້ງຄ້າຍບໍ່ທັນແລ້ວ ພະຍາຣາຊະສຸພາວະດີຍົກເຂົ້າຕີແຕກໃນວັນດຽວ ພະຍາຣາຊະສຸພາວະດີຈຶ່ງຍົກໄປຕີຄ້າຍເມືອງອຸບົນ ຝ່າຍພວກເມືອງອຸບົນກໍເປັນກະບົດຂຶ້ນເຂົ້າປຸ້ນຄ້າຍ ເຈົ້າລາຊະບຸດຈຶ່ງແຕກໜີໄປນະຄອນຈຳປາສັກ ຝ່າຍພວກຄອບຄົວເມືອງຕ່າງໆ ທີ່ເຈົ້າລາຊະບຸດກວາດໄປໄວ້ໃນນະຄອນຈຳປາສັກ ກໍເກີດກະບົດຂຶ້ນເອົາໄຟເຜົາເມືອງແລະທຳໂຮງເສງ ເຈົ້າລາຊະບຸດເຂົ້າເມືອງບໍ່ໄດ້ ຈຶ່ງພາບ່າວປະມານ 40 ຄົນ ຂ້າມຟາກໄປຢູ່ທາງຕາເວັນອອກແມ່ນ້ຳຂອງ. ພະຍາຣາຊະສຸພາວະດີກໍເຂົ້າເມືອງຈຳປາສັກໄດ້ໂດຍງ່າຍ ແລ້ວແຕ່ງທະຫານຊາວພື້ນເມືອງໄປນຳຈັບເອົາເຈົ້າລາຊະບຸດ ເຈົ້າປານ ເຈົ້າສຸວັນມາໄດ້ເອົາໃສ່ກົງຂັງ ແລ້ວພະຍາສຸພາວະດີກໍຍົກທັບມາເມືອງນະຄອນພະນົມ.

## ແມ່ທັບອານາມມີໜັງສືມາເຖິງພະຍາຣາຊະສຸພາວະດີ

ຝ່າຍພະເຈົ້າອະນຸສະເດັດໄປເຖິງເມືອງອານາມແລ້ວ ກໍໄດ້ໄປຂໍຄວາມຊ່ວຍເຫຼືອຈາກແມ່ທັບໃຫຍ່ຂອງອານາມໆ ຈຶ່ງແຕ່ງໃຫ້ສະຕະຄຸນຕຽນຍິນເປັນແມ່ທັບໜ້າຍົກພົນ 20.000 ຄົນ ມາຕັ້ງຢູ່ເມືອງຕາມດອງ ເພື່ອຈະມາຊ່ອຍວຽງຈັນ ແລ້ວສະຕະຄຸນຕຽນຍິນໄດ້ມີໜັງສືມາເຖິງ ພະຍາຣາຊະສຸພາວະດີສະບັບນຶ່ງໃຈຄວາມວ່າ "ເມືອງວຽງຈັນກັບກຸງເທບ ເປັນເມືອງໄມຕີສະໜິດປຽບເໝືອນຣິມສົບກັບແຂ້ວ ບໍ່ມີເຫດອັນໃດ ເຫດໃດຈຶ່ງຍົກກອງທັບຂຶ້ນມາທຳລາຍຮື້ເມືອງວຽງຈັນເສຽໃຫ້ໄພ່ບ້ານພົນເມືອງແຕກຕື່ນໄປ ແລະ ເມືອງວຽງຈັນກໍເປັນແດນກຸງອານາມ ບັດນີ້ແມ່ທັບໃຫຍ່ໃຊ້ໃຫ້ຂ້າພະເຈົ້າຄຸມກອງທັບຍົກມາ 20.000 ຄົນເສດ ມາຕັ້ງຢູ່ເມືອງຕາມດອງ ຈຶ່ງມີໜັງສືມາໃຫ້ແຈ້ງໃຫ້ທ່ານຍົກກອງທັບກັບໄປຢູ່ແດນຂອງທ່ານ ແລະ ທ່ານກວາດເອົາຄອບຄົວແດນອານາມໄປເທົ່າໃດ ຂໍໃຫ້ສົ່ງຄືນມາ ທາງໄມຕີຈະຮອບຄອບຍືນຍາວສະເໝີໄປ ຖ້າທ່ານບໍ່ຟັງ ຂ້າພະເຈົ້າກໍຈະບໍ່ລະ ຖ້າອົງກົນເລືອກແມ່ທັບໃຫຍ່ຍົກມາເຖິງແລ້ວກໍຈະບໍ່ຟັງກັນ ແຕ່ຫຍ້າຕົ້ນນຶ່ງກໍບໍ່ໃຫ້ເຫຼືອໄວ້ ບອກມາທັງໝົດນີ້ເປັນຄວາມສັດຈິງ ໃຫ້ທຳຕາມຂ້າພະເຈົ້າ"

ພະຍາຣາຊະສຸພາວະດີໄດ້ຮັບໜັງສືນີ້ ແລ້ວກໍບໍ່ຕອບ ຟ້າວຍົກທັບຂຶ້ນມາຫາທັບຫຼວງຢູ່ເມືອງພັນພ້າວ.

## ພະຍາຊຽງສາຕີກອງທັບສະຫຍາມແຕກ

ເວລານັ້ນຝ່າຍພະຍາຊຽງສາຍັງຕັ້ງທັບຢູ່ບ້ານໂພນຊຽງຫວັງ ແມ່ທັບໃຫຍ່ຂອງສະຫຍາມທີ່ຢູ່ເມືອງພັນພ້າວຈຶ່ງແຕ່ງໃຫ້ພະຍາໄກໂກສາຍົກທັບໄປຕີພະຍາຊຽງສາໆ ຕີທັບພະຍາໄກໂກສາແຕກໜີຄືນມາ, ເຈົ້າແມ່ທັບໃຫຍ່ຈຶ່ງໃຫ້ປົດພະຍາໄກໂກສາອອກຈາກຕຳແໜ່ງແລ້ວເອົາໃສ່ຄຸກໄວ້ ແລ້ວແຕ່ງໃຫ້ພະຍາເພັດພິໄຊ ພະຍາກະເສດ ພະຍາອັດສະດາເຣືອງເດດ ຍົກທັບໄປຕີພະຍາຊຽງສາ, ເວລານັ້ນ ທັບຂອງພະຍາກອງຄຳ ທີ່ຕັ້ງຢູ່ເມືອງເພັງໄດ້ຍົກມາຊ່ວຍຕີຕັດຫຼັງກອງທັບສະຫຍາມ, ພວກທະຫານສະຫຍາມຖືກຂ້າຕາຍເປັນອັນມາກ ເກືອບຈະແຕກຢູ່ແລ້ວ ພໍດີພະຍາກອງຄຳແມ່ທັບຖືກປືນຕາຍກອງທັບເມືອງເພັງເລີຍແຕກ ຝ່າຍພະຍາຊຽງສາຈຶ່ງຖອຍລົງໄປຕັ້ງຢູ່ປາກຫ້ວຍຫຼວງ ກອງທັບສະຫຍາມກໍຍົກນຳໄປ ໄດ້ສູ້ຮົບກັນເປັນສາມາດ ຝ່າຍສະຫຍາມເສຽຄົນສຳຄັນຄື: ພະອິນທະເດດ ນ້ອງພະຍາເພັດພິໄຊ ຖືກປືນຕາຍ, ພະຍາກຳແພງເພັດ ກັບພະທະຣີໄທຖືກປືນອາການສາຫັດ ແຕ່ພະຍາຊຽງສາເຫັນວ່າຝ່າຍຕົນມີຈຳນວນນ້ອຍກວ່າ ກໍຖອຍຈາກຫ້ວຍຫຼວງ ລຽບລົງໄປຕາມຣິມຝັ່ງແມ່ນ້ຳຂອງ.

## ພະຍາຊຽງສາເຂົ້າຫາພະຍາຣາຊະສຸພາວະດີ

ທັບພະຍາຊຽງສາເດີນລຽບລົງໄປຕາມຣິມຝັ່ງແມ່ນ້ຳຂອງຈຶ່ງໄປພົບກັບກອງທັບຂອງພະຍາຣາຊະສຸພາວະດີ ທີ່ຍົກມາຈາກເມືອງນະຄອນພະນົມ ພະຍາຊຽງສາໄດ້ຄຸ້ນເຄີຍກັບພະຍາຣາຊະສຸພາວະດີ ມາແຕ່ກ່ອນ ທັງເຫັນວ່າ

ກອງທັບຝ່າຍຂອງຕົນແຕກໜີໝົດແລ້ວ ຈຶ່ງພາທະຫານເຂົ້າໄປອ່ອນນ້ອມຕໍ່ພະຍາຣາຊະສຸພາວະດີໆ ຈຶ່ງໃຫ້ພະຍາຊຽງສາຂຶ້ນມາເຝົ້າແມ່ທັບໃຫຍ່ຢູ່ເມືອງພັນພ້າວ ແມ່ທັບໃຫຍ່ຂອງສະຫຍາມ ຈຶ່ງໃຫ້ພະຍາຊຽງສາທຳລາຊະການຢູ່ນຳພະຍາຣາຊະສຸພາວະດີ ແລ້ວຈັດສົ່ງເຈົ້າລາຊະບຸດໂຍ້, ເຈົ້າປານ, ເຈົ້າສຸວັນ ລົງໄປກຸງເທບກ່ອນ ສ່ວນທັບຂອງພະຍາຣາຊະສຸພາວະດີນັ້ນ ໃຫ້ຢູ່ກວາດເອົາຄອບຄົວທົ່ວເມືອງລາວໃຫ້ໄດ້ກ່ອນ ແລ້ວກອງທັບຫຼວງກໍຈະລົງໄປກຸງເທບ.

ຝ່າຍພະຍາຣາຊະສຸພາວະດີ ຈັດການບ້ານເມືອງກວາດຕ້ອນເອົາຄອບຄົວໄດ້ຫຼາຍແລ້ວ ແບ່ງໄວ້ໃຫ້ເປັນພົນລະເມືອງວຽງຈັນພໍສົມຄວນ ແລະ ໃຫ້ພະຍາເມືອງຈັນຢູ່ຮັກສາເມືອງວຽງຈັນຕໍ່ໄປ ເຫຼືອນັ້ນກວາດລົງໄປໝົດ ແລະພະຍາຣາຊະສຸພາວະດີ ສືບຫາພະບາງໄດ້ແລ້ວກໍພາເຈົ້າອຸປະຣາດຕິດສະລົງໄປນຳ ເຖິງກຸງເທບນີ້ ເດືອນ 5 (3) ປີ ຄ.ສ 1827 ພະເຈົ້າແຜ່ນດິນສະຫຍາມຈຶ່ງມີພະອາດຍາຕັດກັບພະຍາຣາຊະສຸພາວະດີວ່າ: ຕົວເຈົ້າອະນຸຍັງຈັບບໍ່ໄດ້ຈະກັບມາຕັ້ງບ້ານເມືອງອີກປະການໃດກໍຍັງບໍ່ແຈ້ງ ເມືອງວຽງຈັນນີ້ ເປັນກະບົດມາ 2 ເທື່ອແລ້ວ ບໍ່ຄວນຈະເອົາໄວ້ເປັນບ້ານເມືອງສືບໄປໃຫ້ຂຶ້ນໄປທຳລາຍມ້າງເສຍໃຫ້ສູນສິ້ນ ຢ່າໃຫ້ຕັ້ງຕິດຢູ່ໄດ້ ສ່ວນເຈົ້າອຸປະຣາດຕິດສະນັ້ນ ໃຫ້ໄປຢູ່ວັງຂອງເຈົ້າອະນຸທີ່ບາງຍີຂັນ ແລະພະບາງນັ້ນໃຫ້ພະຍາຣາຊະສຸພາວະດີເອົາໄປໄວ້ວັດຈັກກະວັດ.

ຕອນທີ 7

# ພະເຈົ້າອະນຸກັບນາວຽງຈັນ

ເຖິງເດືອນ 7 ປີ ຄ.ສ 1828 ພະຍາຣາຊະສຸພາວະດີໄດ້ກັບຂຶ້ນມາວຽງຈັນອີກ, ເດືອນ 8 ມາເຖິງເມືອງພູຊຽວ ຮວບຮວມສະບຽງອາຫານ ແລະຜູ້ຄົນໄດ້ພ້ອມແລ້ວກໍຍົກຂຶ້ນມາ ເມືອງໜອງບົວລຳພູ ຈຶ່ງແຕ່ງໃຫ້ພະຍາຣາຊະຮອງເມືອງ 1 ພະຍາພິໄຊຍະສົງຄາມ 1 ພະຍາທຸກຂະຣາດ 1 ຫຼວງສຸເຣນທອນວິຊິດ 1 ຄຸມໄພ່ພົນ 500 ຄົນ ຍົກຂຶ້ນມາຕັ້ງຢູ່ເມືອງພັນພ້າວກ່ອນ.

ພະຍາຣາຊະຮອງເມືອງ ພາພັກພວກມາເຖິງພັນພ້າວແລ້ວ ຈຶ່ງຈັດຄົນຂ້າມມາຫາພະຍາເມືອງຈັນ ເພື່ອປຶກສາລາຊະການ ຄົນສະຫຍາມທີ່ຂ້າມມາ 10 ຄົນນັ້ນ ຖືກພວກລາວວຽງຈັນຈັບໄວ້ໄດ້ 7 ຄົນ ແລະອີກ 3 ຄົນໜີຄືນໄປບອກພະຣາຊະຮອງເມືອງໆຈຶ່ງແຕ່ງໃຫ້ພະຍາພິໄຊສົງຄາມ ພະຍາທຸກຂະຣາດ ແລະ ຫຼວງສຸເຣນທອນວິຊິດ ກັບບ່າວໄພ່ 300 ຄົນຂ້າມມາຟັງລາຊະການໃນວຽງຈັນອີກ. ພະຍາພິໄຊສົງຄາມກັບພວກຈຶ່ງພາກັນຕັ້ງທັບຢູ່ວັດກາງ.

ຝ່າຍພະເຈົ້າແຜ່ນດິນອານາມ ໄດ້ແຕ່ງໃຫ້ຂຸນນາງອານາມປະມານ 80 ຄົນປາຍ ມາສົ່ງພະເຈົ້າອະນຸ ພ້ອມກັນນີ້ກໍມີພະລາຊະສານໃຫ້ ເລງອັນຮີເປັນລາຊະທູດຖືລົງໄປກຸງເທບເພື່ອຂໍໂທດໃຫ້ພະເຈົ້າອະນຸ ດ້ວຍໃຈຄວາມໃນພະລາຊະສານນັ້ນວ່າ "ພະເຈົ້າອະນຸໜີກອງທັບສະຫຍາມເຂົ້າໄປຢູ່ແດນອານາມແຈ້ງຄວາມແກ່ເຈົ້າເມືອງແງ່ອານວ່າ ກອງທັບກຸງເທບຍົກຂຶ້ນມາຂັບໄລ່ໜີຈາກເມືອງ ບໍ່ຮູ້ວ່າໄດ້ທຳຜິດສິ່ງໃດ ພະເຈົ້າກຸງອານາມເຫັນວ່າເຈົ້າອະນຸເປັນຄົນມີທຸກພາກບ້ານເມືອງໄປ ຈຶ່ງໃຫ້ຂຸນນາງຄຸມໄພ່ພົນມາສົ່ງພໍໃຫ້

ພົ້ນເຂດອານາມ ແລະໄດ້ສັ່ງພະເຈົ້າອະນຸວ່າ ໄປເຖິງບ້ານເມືອງແລ້ວໃຫ້ແຕ່ງບຸດຫຼານ ເຊີນເຄື່ອງລາຊະບັນນາການລົງໄປຖວາຍ ກຸງເທບຕາມທຳນຽມຈະໄດ້ພົ້ນຄວາມຜິດ ແລະຂໍໃຫ້ທາງກຸງເທບມີຄວາມເມດຕາແກ່ ພະເຈົ້າອະນຸໃຫ້ໄດ້ຄອງບ້ານເມືອງຕາມເດີມ" ລາຊະທູດອານາມ ໄປເຖິງກຸງເທບເດືອນ 10 ຂຶ້ນ 3 ຄ່ຳ.

ເດືອນ 8 ແຮມຄ່ຳ 1 ປີ ຄ.ສ 1828 ນັ້ນ ພະເຈົ້າອະນຸແລະເຈົ້າລາຊະວົງ ກັບມາເຖິງທ່າຂ້າມຊ້າງ. ເຈົ້າລາຊະວົງຈຶ່ງມີໜັງສືມາເຖິງພະຍາເມືອງຈັນ ແລະເມືອງຂ້າຍວ່າ "ພະເຈົ້າອານາມໃຫ້ຂຸນນາງອານາມພາມາສົ່ງ ດຽວນີ້ມາເຖິງທ່າຂ້າມຊ້າງແລ້ວ ອີກ 4 ຄືນຈະມາເຖິງວຽງຈັນ" ພະຍາເມືອງຈັນໄດ້ຮັບໜັງສືນັ້ນແລ້ວຈຶ່ງສົ່ງໜັງສືນັ້ນໃຫ້ພະຍາພິໄຊສົງຄາມທີ່ຢູ່ວັດກາງ. ພະຍາພິໄຊສົງຄາມກໍສົ່ງໜັງສືນັ້ນໄປໃຫ້ ພະຍາຣາຊະສຸພາວະດີທີ່ຢູ່ເມືອງໜອງບົວລຳພູ ຝ່າຍພະຍາຣາຊະສຸພາວະດີໄດ້ຮັບໜັງສືແລ້ວກໍຟ້າວຍົກທັບມາໃນວັນແຮມ 5 ຄ່ຳ ເດືອນ 8.

ໃນວັນ ແຮມ 6 ຄ່ຳ ເດືອນ 8 ພະເຈົ້າອະນຸກໍມາເຖິງວຽງຈັນ ມີພົນຕິດຕາມມາ 1000 ຄົນ ແລະຂຸນນາງອານາມ 80 ຄົນ, ພະເຈົ້າອະນຸສະເດັດເຂົ້າພັກເຊົາຢູ່ຫໍພະແກ້ວ ແລ້ວແຕ່ງໃຫ້ນາຍພາສາອານາມ 2 ຄົນໄປບອກພະຍາພິໄຊສົງຄາມວ່າ ມື້ອື່ນເຊົ້າຈະມາຫາ. ຄັນຮຸ່ງເຊົ້າມາ ພະເຈົ້າອະນຸ ແລະເຈົ້າລາຊະວົງກໍມາຫາພະຍາພິໄຊຍະຢູ່ວັດກາງ ແຈ້ງຄວາມວ່າ ພະເຈົ້າອານາມໄດ້ມີພະລາຊະສານລົງໄປຂໍໂທດທີ່ກຸງເທບແລ້ວ ເມື່ອພະຍາຣາຊະສຸພາວະດີມາເຖິງ ຈະໃຫ້ທ່ານແມ່ທັບພາລົງໄປກຸງເທບ ຄັນເຈລະຈາກັນແລ້ວພະເຈົ້າອະນຸກໍກັບຄືນມາຫໍພະແກ້ວ.

ເຖິງມື້ແຮມ 7 ຄ່ຳ ເດືອນ 8 ພະຍາຣາຊະສຸພາວະດີຍົກທັບມາເຖິງເມືອງພັນພ້າວ ເວລາ ບ່າຍ 3 ໂມງ. ເຖິງເວລາບ່າຍ 4 ໂມງ ພະເຈົ້າອະນຸກໍ

ຍົກພົນເຂົ້າລ້ອມພະຍາພິໄຊສົງຄາມ ຂ້າພັນພວກສະຫຍາມ 300 ຄົນ ລົ້ມຕາຍລົງເກືອບໝົດ ຕົວພະຍາພິໄຊ ພະຍາທຸກຂະຣາດ ແລະຫຼວງສຸເຣນ ກໍຕາຍເຫຼືອແຕ່ໝື່ນຮັກສານາເວດ ກັບບ່າວໄພ່ 50 ຄົນ ລອຍຂ້າມຂອງໄປໄດ້ ຈຶ່ງໄປແຈ້ງເຫດແກ່ພະຍາຣາຊະສຸພາວະດີ. ຝ່າຍພວກລາວຊາວເມືອງ ນະຄອນລາຊະສີມາ ທີ່ພະຍາຣາຊະສຸພາວະດີເກນມາ ຄັນໄດ້ຊາບຂ່າວດັ່ງນັ້ນ ກໍພາກັນແຕກໜີເປັນອັນມາກ. ພະຍາຣາຊະສຸພາວະດີ ປຶກສາກັບນາຍທັບນາຍກອງວ່າ ຈະຖອຍໄປຕັ້ງຮັບຢູ່ເມືອງໂຄລາດກໍໄກໂພດ ຄັນຈະຕັ້ງຮັບຢູ່ຄ້າຍພັນພ້າວກໍເຫັນຈະບໍ່ໄຫວເພາະມີພົນໜ້ອຍ, ພະຍາຊຽງສາຈຶ່ງວ່າ ຄວນຈະຖອຍໄປຕັ້ງຢູ່ເມືອງຍະໂສທອນ ເພາະມີເຂົ້າປາບໍລິບູນ ເມື່ອປຶກສາເຫັນດີພ້ອມກັນແລ້ວ ພະຍາຊຽງສາຈຶ່ງພາທັບເຈົ້າພະຍາຣາຊະສຸພາວະດີ ເດີນທາງລັດປ່າໄປໃນແຕ່ຄືນນັ້ນ ຝ່າຍຂຸນນາງອານາມ ທີ່ມາສົ່ງພະເຈົ້າອະນຸ ກໍພາກັນກັບຄືນໄປອານາມໝົດ.

## ເຈົ້າລາຊະວົງນຳຕີທັບພະຍາຣາຊະສຸພາວະດີ

ພະເຈົ້າອະນຸໄດ້ຊາບວ່າ ພະຍາຣາຊະສຸພາວະດີຖອຍໜີໄປຕັ້ງຢູ່ເມືອງຍະໂສທອນຈຶ່ງມີອາດຍາໃຫ້ເຈົ້າລາຊະວົງຄຸມທັບລົງໄປຕີ ສ່ວນພະອົງໄດ້ແຕ່ງຄົນໃຫ້ຂ້າມໄປມ້າງພະເຈດີປາບວຽງ ທີ່ສະຫຍາມສ້າງໄວ້ທີ່ບ້ານພັນພ້າວເສຍ ແລ້ວເຊີນເອົາພະເສີມໄວ້ວຽງຈັນດັ່ງເກົ່າ.

ຝ່າຍເຈົ້າພະຍາຣາຊະສຸພາວະດີ ທີ່ລົງໄປຕັ້ງຢູ່ເມືອງຍະໂສທອນ ພໍຈັດແຈງໄພ່ພົນພ້ອມແລ້ວກໍຍົກກັບຄືນມາ ເຈົ້າລາຊະວົງກໍຍົກນຳລົງໄປ ເມື່ອ

ເດືອນ 11 ຂຶ້ນ 10 ຄ່ຳ ປີ ຄ.ສ 1828 ກອງທັບທັງສອງໄດ້ໄປປະຈວບກັນຢູ່ບ້ານບົກຫວານ (ເຂົ້າໃຈວ່າຢູ່ໃນແຂວງໜອງຄາຍ)ໄດ້ຮົບກັນ ຕະລຸມບອນ ເຈົ້າລາຊະວົງຂີ່ມ້າຖືຫອກ ແທງຖືກອົກເຈົ້າພະຍາຣາຊະສຸພາວະດີ ເຊາະລົງໄປເຖິງທ້ອງນ້ອຍຈົນຕົກມ້າ ພໍໂດດລົງຈະຊ້ຳ ຫຼວງພິພິດ ນ້ອງຊາຍເຈົ້າພະຍາຣາຊະສຸພາວະດີ ຖອດດາບແລ່ນເຂົ້າມາປ້ອງກັນພີ່ຊາຍ ເຈົ້າລາຊະວົງຍົກດາບຟັນຫຼວງພິພິດຂາດເຄິ່ງ ພໍດີພວກທະຫານສະຫຍາມ ຍິງປືນສຸມໃສ່ເຈົ້າລາຊະວົງ ລູກປືນລູກນຶ່ງມາຖືກຫົວເຂົ່າເຈົ້າລາຊະວົງລົ້ມລົງ ພວກບ່າວໄພ່ເຂົ້າໃຈວ່າຕາຍ ກໍເຂົ້າຫາມເອົາເຈົ້າລາຊະວົງໄດ້ແລ້ວ ພາໜີຂ້າມຂອງມາວຽງຈັນ ຝ່າຍເຈົ້າພະຍາຣາຊະສຸພາວະດີລຸກຂຶ້ນໄດ້ ຄຳເບິ່ງບາດບໍ່ເຫັນເຂົ້າເລິກ ຈຶ່ງເອົານ້ຳມັນຢາໃສ່ແລ້ວໃຫ້ບ່າວຫາມນຳກອງທັບເຈົ້າລາຊະວົງມາ.

## ພະເຈົ້າອະນຸໜີຈາກວຽງຈັນຄັ້ງທີ 2

ເຈົ້າລາຊະວົງຂ້າມມາວຽງຈັນໄດ້ ກໍເຂົ້າທູນພະບິດາ ບອກວ່າ ເຫຼືອກຳລັງທີ່ຈະຮົບຕໍ່ໄປເພາະບ່າວໄພ່ຂອງເຮົາມີໜ້ອຍ ແລະຊັບສິນເຂົ້າຂອງກໍເສຍຫາຍໝົດແລ້ວຈຳຕ້ອງໜີໄປເພິ່ງປະເທດອານາມ. ເມື່ອປຶກສາກັນແລ້ວເວລາຂ້ອນແຈ້ງ ພະເຈົ້າອະນຸ ແລະເຈົ້າລາຊະວົງ ກໍໜີຈາກວຽງຈັນໄປໃນ ເດືອນ 11 ອອກໃໝ່ 11 ຄ່ຳ ນັ້ນເອງ. ຮຸ່ງເຊົ້າມາເຈົ້າສຸດທິສານກໍພາພວກພະຍາຕິວົງອອກໜີຈາກວຽງຈັນ ແຕ່ພໍໄປເຖິງບ້ານໄຜ່ ກອງທະຫານສະຫຍາມກໍນຳໄປທັນ ກອງທະຫານສະຫຍາມຈຶ່ງຈັບໄດ້ ເຈົ້າສຸດທິສານ, ເຈົ້າເຕ້, ເຈົ້າບັນ, ເຈົ້າດວງຈັນ, ເຈົ້ານາງ ຄຳວັນ, ໂອລົດພະເຈົ້າອະນຸ ແລະ ເຈົ້າລອດຫຼານ

ພະເຈົ້າອະນຸ, ນາງມາໄລ, ນາງວອນ, ພະຊາຍານ້ອຍຂອງພະເຈົ້າອະນຸ ກັບ ທ້າວພົມ ທ້າວເປມ ຫຼານພະຍາຊຽງດີ, ເຈົ້າຮູບ ບຸດເຈົ້າສຸດທິສານ, ໃນວັນ ເດືອນ 11 ຂຶ້ນ 15 ຄ່ຳ (19/10/1828)

ຝ່າຍພະເຈົ້າອະນຸທີ່ໜີໄປໄດ້ນັ້ນມີພະຍາຕິວົງຕິດຕາມໄປນຳແຕ່ ເຈົ້າລາຊະວົງ, ເຈົ້າເໝັ້ນ, ເຈົ້າຂັດຕິຍະ, ເຈົ້ານາງຄຳປ້ອງພະມະເຫສີ, ເຈົ້າ ນາງຊຽງຄຳ ພີ່ສາວເຈົ້າລາຊະວົງ, ເຈົ້ານາງບົວ ພະຊາຍາເຈົ້າລາຊະວົງ, ເຈົ້າ ນາງທອງດີ, ເຈົ້ານາງຄຳໃສ, ເຈົ້ານາງບຸດສະບາ, ເຈົ້ານາງຄຳແພງ, ເຈົ້າໜູກັບ ບ່າວໄພ່ອີກ 3 ຄົນ. ສ່ວນເຈົ້າລາຊະວົງນັ້ນ ພໍໄປເຖິງທ່າຂ້າມຊ້າງ ຈະເດີນ ໄປທາງບົກບໍ່ໄດ້ ຈຶ່ງລົງຂີ່ເຮືອກັບພະຊາຍາແລ້ວໃຫ້ບ່າວພາຍໄປຂຶ້ນທ່າທີ່ ເມືອງມະຫາໄຊກອງແກ້ວ.



ຕອນທີ 8

## ອະວະສານ ຂອງພະເຈົ້າອະນຸ

ຝ່າຍພະເຈົ້າພະຍາຣາຊະສຸພາວະດີ ໃຫ້ຄຸມເອົາເຈົ້າສຸດທິສານກັບພະຍາຕິວົງສົ່ງລົງໄປກຸງເທບແລ້ວ ກໍຍົກພົນຂ້າມມາເມືອງວຽງຈັນ ສັ່ງໃຫ້ມ້າງເພທຳລາຍເມືອງວຽງຈັນເສຽຈົນກ້ຽງ ແລະ ໄລ່ກວາດຕ້ອນເອົາ ຄອບຄົວລາວສົ່ງຂ້າມໄປໄວ້ເມືອງພັນພ້າວ ກຳໜົດຈະກວາດລົງໄປກຸງເທບໃນເດືອນ 12 ແລ້ວເຈົ້າພະຍາຣາຊະສຸພາວະດີກໍແຕ່ງໃຫ້ກອງທະຫານອອກທ່ຽວຊອກຄົ້ນຫາພະເຈົ້າອະນຸໃນຫົວເມືອງລາວທັງປວງ.

ຕໍ່ມາເຖິງເດືອນ 12 ຂຶ້ນ 15 ຄ່ຳເຈົ້ານ້ອຍເມືອງພວນຜູ່ເປັນບຸດເຂີຍຂອງພະເຈົ້າອະນຸ ຈຶ່ງແຕ່ງໃຫ້ເພຽເມືອງກາງ ເພຽທຳໄຊ ຖືໜັງສືມາແຈ້ງແມ່ທັບ ສະຫຍາມວ່າຈະອາສາແຕ່ງກອງທັບລັດທຸກໆດ່ານ ບໍ່ໃຫ້ເຈົ້າອະນຸໜີໄປໄດ້ ຂໍແຕ່ຢ່າໃຫ້ກອງທັບກຸງເທບຍົກຂຶ້ນໄປເມືອງພວນ ເລີຍພວກໄພ່ບ້ານພົນເມືອງຈະໄດ້ຮັບຄວາມສະດຸ້ງຕົກໃຈ. ແລ້ວເຈົ້ານ້ອຍເມືອງພວນຈຶ່ງແຕ່ງໃຫ້ທະຫານຊອກຄົ້ນ ກໍໄດ້ພົບຄອບຄົວເຈົ້າອະນຸຢູ່ນ້ຳ(ຖ້ຳ)ໄຮຕີນພູຄັງໄຂ ເຈົ້ານ້ອຍເມືອງພວນໃຫ້ທະຫານ 50 ຄົນຮັກສາໄວ້ແລ້ວ ໄດ້ແຕ່ງໃຫ້ເພຽນາມໂຄດແລະເພຽອຸທຸມ ລົງມາບອກເຈົ້າພະຍາຣາຊະສຸພາວະດີໆ ຈຶ່ງແຕ່ງໃຫ້ພະອິນທະເດດ ກັບພະສຸພັນຊຽງສາ ຄຸມພົນ 300 ຄົນຂຶ້ນໄປຈັບ.

ຝ່າຍພະຫຼວງພະບາງກໍແຕ່ງໃຫ້ໜານຂັດຕິຍະເມືອງນ່ານ ກັບທ້າວມະຫາພົມເມືອງຫຼວງພະບາງ ຄຸມພົນອອກຊອກຫາເຈົ້າອະນຸ, ໜານຂັດຕິຍະກັບທ້າວມະຫາພົມໄປເຖິງດ່ານເມືອງພວນ ນາຍດ່ານເມືອງພວນຈຶ່ງພາໄປຈັບ

ພະເຈົ້າອະນຸທີ່ນໍ້າ(ຖໍ້າ) ໄຮຕີນພູຄັງໄຂ ໄດ້ພະເຈົ້າອະນຸ ກັບນາງຄໍາປ້ອງ, ເຈົ້ານາງທອງດີ, ເຈົ້ານາງຄໍາໃສ, ເຈົ້ານາງບຸສະບາ, ເຈົ້ານາງຄໍາແພງ, ເຈົ້ານາງໜູ ແລະຫຼານສາວພະເຈົ້າອະນຸອີກຄົນນຶ່ງ ໂຮມເປັນ 9 ຄົນ ຄຸມລົງມາເຖິງທາດເດື່ອຍ ຈຶ່ງພົບກອງທະຫານຂອງພະອິນທະເດດ ແລ້ວພະອິນທະເດດກໍຄຸມພະເຈົ້າອະນຸລົງມາວຽງຈັນ ເຖິງວຽງຈັນມື້ເດືອນອ້າຍຂຶ້ນ 15 ຄໍ່າ (15 ມັງກອນ 1829)

ເຈົ້າພະຍາຣາຊະສຸພາວະດີ ຈຶ່ງແຕ່ງໃຫ້ພະອະນຸລັກໂຍທາ, ພະໂຍທາສົງຄາມ, ຫຼວງເທເພນ, ພະນະຄອນເຈົ້າເມືອງຂ່ອນແກ່ນ, ລາຊະວົງເມືອງຊົນນະບົດ ກັບພົນ 300 ຄົນ ຄຸມ ພະເຈົ້າອະນຸກັບເຈົ້າພະຍາຕິວົງລົງໄປສົ່ງເຖິງເມືອງສະລະບຸຣີ. ຝ່າຍພະຍາພິໄຊວາລີ ຈຶ່ງນໍາກົງຂັງມາໃສ່ພະເຈົ້າອະນຸຕັ້ງປະຈານໄວ້ໃນເຮືອ ແລ້ວໃຫ້ພະອະນຸໂຍທາ ກັບພະໂຍທາສົງຄາມ ພາຕະເວນລົງໄປເຖິງກຸງເທບໃນເດືອນຍີ່ ຂຶ້ນ 11 ຄໍ່າ. ພະເຈົ້າແຜ່ນດິນສະຫຍາມກໍໃຫ້ເອົາພະເຈົ້າອະນຸຂັງໄວ້ ສ່ວນບຸດຫຼານ ແລະພວກພະຊາຍາຂອງພະອົງນັ້ນ ສົ່ງໄປເປັນພວກທຍິບແສ່ວ ແລ້ວພະເຈົ້າແຜ່ນດິນສະຫຍາມສັ່ງໃຫ້ທໍາເຄື່ອງປະຈານລົງໜ້າພະທີ່ນັ່ງ ທໍາເປັນກົງເຫຼັກໃຫຍ່ໃສ່ພະເຈົ້າອະນຸ ມີກົງເຫຼັກນ້ອຍໆສໍາລັບໃສ່ພະຍາຕິວົງລູກເມຽ 13 ກົງ ແລະມີເຄື່ອງກໍາມະກອນຄື: ຄົກສາກສໍາລັບຕໍາ, ເບັດສໍາລັບເກາະແຂວນ, ໝໍ້ຂາງສໍາລັບຕົ້ມ, ຂວານສໍາລັບຜ່າອົກ, ເລື່ອຍສໍາລັບເລື່ອຍແຂນຂາ, ແລະມີຂາຍັ້ງສໍາລັບສຽບທັ້ງເປັນ. ເວລາເຊົ້າໆໄຂເອົາພະເຈົ້າອະນຸ ເຈົ້າລາຊະບຸດ, ເຈົ້າສຸດທິສານ, ເຈົ້າເຕ້, ເຈົ້າປານ, ເຈົ້າດວງຈັນ, ເຈົ້າສຸວັນນະຈັກ, ເຈົ້າປັນ, ເຈົ້ານາງຄໍາປ້ອງ, ເຈົ້າສຸລິຍະ, ເຈົ້າໂງ່ນຄໍາໃຫຍ່, ເຈົ້າຄໍາບຸ, ເຈົ້າດີ ອອກມາຂັງໄວ້ໃນກົງແລ້ວໃຫ້ເຈົ້ານາງຄໍາປ້ອງອັກຄະລາຊະເທວີ ຖືວີກາບໝາກເຂົ້າໄປນັ່ງວີຢູ່ໃນກົງໃຫ້ພວກຊາຍານ້ອຍທີ່ຍັງສາວຢູ່ ຊຶ່ງພະຍາຣາຊະສຸພາວະດີ ສົ່ງລົງໄປລຸນນັ້ນ

ແຕ່ງພາກະເບື້ອງໃສ່ເຂົ້າປາອາຫານໄປລ້ຽງກັນຢູ່ໃນທີ່ປະຈານ ພວກລາສະດອນຍິງຊາຍຢູ່ໃນກຸງເທບ ແລະ ນອກກຸງ ພາກັນມາເບິ່ງຈົນແໜ້ນທຸກເວລາບໍ່ໄດ້ຂາດ ລາງພວກກໍລົງມາດ່າປ້ອຍແຊ່ງ ຢູ່ທຸກວັນ ເຖິງເວລາແລງກໍເອົາພວກບຸດຫຼານພະເຈົ້າອະນຸ ຂຶ້ນຢືນເທິງຂາຢັ່ງເປັນແຖວແລ້ວໃຫ້ຮ້ອງປະຈານໂທດຂອງຕົວເຖິງຄ່ຳຈຶ່ງເອົາໄປຂັງໄວ້ດັ່ງເກົ່າ.

ທຳຢູ່ດັ່ງນີ້ໄດ້ 7-8 ວັນ ພະເຈົ້າອະນຸກໍທົງອາພາດເປັນໂລກລົງເລືອດສິ້ນພະຊົນ. ເຈົ້າແຜ່ນດິນສະຫຍາມຈຶ່ງໃຫ້ເອົາສົບໄປສຽບປະຈານໄວ້ທີ່ສຳເຫຣ່ ສ່ວນການທີ່ຈະປະຫານບຸດຫຼານພະເຈົ້າອະນຸກໍສະຫງົບໄປ.

ສົມເດັດພະເຈົ້າອະນຸ ທົງລາຊະສົມພົບ ປີກຸນ ຄ.ສ 1768 ສັ້ງພະຊົນເມື່ອປີຊວດ ຄ.ສ 1829 ຣວມພະຊົນມາຍຸໄດ້ 61 ປີ, ສ່ວນເຈົ້າລາຊະວົງນັ້ນເລີຍຫາຍສາບສູນໄປບໍ່ໄດ້ຊາບຂ່າວວ່າໄປຢູ່ແຫ່ງຫົນໃດ.



25,000 Kip

ISBN 993207012-2

9 789932 070121

ດອກເກດ
DokkeD

ສຳນັກພິມ ດອກເກດ
ໂທ: (+856-21) 263748
website: www.dokked.com
e-mail:dokked@veetoo.net